ເລືອງສຳລັບເຍົາວະຊົນ



# ປາຄໍ່ໂລພາ

ເລື່ອງສຳລັບເຍົາວະຊົນ

# ປາຄໍ່ໂລພາ



ສຳນັກພິມຈຳໜ່າຍ ສປປ. ລາວ

1978

ອຸທິດ ບຸນຍາວົງ

# ສາລະບານ

( ໂຮມເລື່ອງສຳລັບເຍົາວະຊົນ )


| ເລື່ອງ | ໜ້າ |
|---|---|
| 1. ປາຄໍ່ໂລພາ | 1 |
| 2. ນ້ຳໃຈຂອງສິນປອງ | 7 |
| 3. ປາບແມງວັນ | 16 |
| 4. ເຜີ້ງຫວງຮັງ | 22 |
| 5. ລ່ອງໃຕ້ຖືກທາງ | 40 |
| 6. ປູກຕົ້ນໄມ້ແມ່ນຮັກຊາດ | 49 |
| 7. ຈິ່ຈ້ຽມຂີ້ຢ້ານ | 59 |
| 8. ຕົວຕະຫຼົກອາຍ | 63 |
| 9. ນອນດອນ | 67 |
| 10. ແມ່ຄ້ານ້ອຍປ່ຽນໃຈ | 72 |

# ປາຄໍ່ໂລພາ

ໂດຍ: ອຸທິນ ບຸນຍາວົງ

ຄັ້ງຫນຶ່ງ ບໍ່ທັນດົນທັນນານຫຍັງດອກ, ແມ່ປາຄໍ່ໂຕຫນຶ່ງສັ່ງສອນລູກໆວ່າ:

– ດຽວນີ້ ລູກທັງຫລາຍກໍແຂງແຮງ ລອຍນ້ຳກໍເກ່ງ ຫາກິນກໍພໍກຸ້ມປາກກຸ້ມທ້ອງຂອງຕົນແລ້ວ, ນັບແຕ່ນີ້ເມືອຫນ້າ ພວກລູກຕ່າງກໍ່ຊິໄດ້ພັດພາກຈາກກັນ ໄປທຸກທິດທຸກທາງ ເພື່ອຫາລ້ຽງຊີບຕາມເສັ້ນທາງຂອງໃຜມັນ, ແມ່ເອງກໍຄຸ້ມຄອງພວກລູກບໍ່ຫລ້ອນ ເພາະມັນຫລາຍໂດນຳກັນ, ສະນັ້ນໃຫ້ພວກລູກເຊິດຊູສະຕິລະວັງຕົວ ຢ່າກິນແບບບໍ່ເລືອກຈັກຫນ່ອຍຖືກເບັດເຂົາ, ຢ່າໂລບມາກໂລພາ, ຢ່າເຂົ້າໄປໃນສະລ້ຽງປາຂອງຄົນເຂົາເຖິງແມ່ນວ່າຈະມີເຫຍື່ອກິນຢ່າງອຸດົມສົມບູນ ແຕ່ອັນຕະລາຍມີຮອບດ້ານ ໃຫ້ພວກລູກຈື່ຈຳເອົາໄວ້.

ເມື່ອສັ່ງສອນລູກແລ້ວ ແມ່ປາຄໍ່ກໍພາລູກເລາະລ່ອງໄປຕາມໜອງ ຕາມບຶງ ໄປຕາມທົ່ງນາ ຊຶ່ງອັ່ງນອງໄປດ້ວຍນ້ຳຍາມຕົ້ນລະດູຝົນ. ປາຄໍ່ນ້ອຍຕື່ນເຕັ້ນດີໃຈເພາະນ້ຳມາກຫລາຍ ທົ່ງໄຫລເປັນເປັນທີ່ຊື່ນໃຈ. ພວກມັນລອຍເຈີດໄປທາງຊ້າຍແລ້ວກໍເຈີດໄປທາງຂວາ ແລະ ກໍສວາບກິນເຫຍື່ອຢ່າງສະຫນຸກສະຫນານ. ພວກມັນມົວນຳຫາເຫຍື່ອໄປໄກໆ ຫລາຍເທື່ອຫລາຍເທີກໍເລີຍຫລົງທາງກັບເມືອຫາແມ່ບໍ່ຖືກ ແລະ ຫາຍສາບສູນໄປມື້ລະສອງສາມໂຕ. ວັນເວລາຜ່ານໄປ, ປາຄໍ່ນ້ອຍທີ່ລອຍຕິດຕາມແມ່ກໍເຫລືອບໍ່ຮອດສິບ ແລະ ອີກບໍ່ຫລາຍມື້ຕໍ່ມາກໍບໍ່ເຫລືອຈັກໂຕຊ້ຳ. ແຕ່ລະໂຕທ່ຽວຫາກິນໄປຕາມລຳພັງໃຜມັນ, ໂຕຫນຶ່ງລອຍຢູ່ຕາມຫ້ວຍຮ່ອງຄອງເຫມືອງ, ໂຕ ຫນຶ່ງ ຢູ່ໜອງ, ໂຕຫນຶ່ງຢູ່ບຶງ, ໂຕຫນຶ່ງຢູ່ຕາມທ້ອງທົ່ງນາ ແລະ ໆລໆ...

ໃນຈຳນວນພວກທີ່ຫລົງແມ່ແຕ່ຕອນຕົ້ນໆ ນັ້ນມີປາຄໍ່ນ້ອຍໂຕຫນຶ່ງຊຶ່ງມີເກັດດຳ ອັນເປັນທີ່ແປກຕ່າງກ່ວາຫມູ່ໝົດເພາະອ້າຍນ້ອງທັງຫມົດມີເກັດຫມົ່ນ.ມື້ນັ້ນປາຄໍ່ເກັດດຳມົວກິນໜອນນ້ຳຢູ່ອ້ອມກໍເຂົ້າ, ມັນເຈືອກຊ້າຍເຈືອກຂວາໄລ່ນຳໜອນນ້ຳຊຶ່ງລອຍເປັນຍົວໆ, ບາງໂຕຫລີກໄປ

ໄກໆແຕ່ທ້າວເກັດດຳກໍໄລ່ບໍ່ທັນ ແລະ ສວາບກິນເອົາປາງ ແຊບນົວ. ການໄລ່ບໍ່ເຫຍື່ອໄປໄກໆ ເຮັດໃຫ້ທ້າວເກັດດຳ ຫລົງທາງ ແລະ ຖືກປະປ່ອຍໃຫ້ຢູ່ໂດດດ່ຽວ ນັບແຕ່ນັ້ນ ມາທ້າວເກັດດຳກໍຫາກິນໄປຕາມລຳພັງໂດດຽວ, ລອຍ ລ່ອງໄປຕາມ ກະແສນ້ຳ ຈາກບຶງນ້ອຍ ລອຍສູ່ບຶງໃຫຍ່. ຈາກວັງຫນຶ່ງໄປສູ່ອີກວັງຫນຶ່ງ, ຫລາຍວັນຫລາຍເດືອນ ເຂົ້າທ້າວເກັດດຳກໍໃຫຍ່ກ້າຫນ້າເຄັ່ງຂືນ ດິນໂຕທໍ່ດ້ານ ຟ້າ, ປານ້ອຍອື່ນໆຕ່າງກໍເກງກົວ ແລະ ຫລີກຫນີໄປໄກໆ ເພາະຢ້ານຕົກເປັນເຫຍື່ອຂອງທ້າວເກັດດຳ.

ທ້າວເກັດດຳມັກກິນຫລາຍ ກິນບໍ່ອີ່ມເປັນ ສວາບກັບໆ ຕະຫລອດມື້, ຢູ່ນ້ຳວັງນີ້ແລ້ວກໍໂອ້ອ່າວຫານ້ຳວັງຫນ້າໂດຍ ຄືດວ່ານ້ຳວັງຫນ້າຈະສົດໃສໄຫລເປັນ ກ່ວາ ມີເຫຍື່ອ ກິນ ຫລາຍກ່ວາ, ແຕ່ບໍ່ຄືດວ່າຈະມີໄພອັນຕະລາຍຫລາຍ ກ່ວາ.

ຄືນຫນຶ່ງທ້າວເກັດດຳພົບນ້ຳໄຫລອອກມາຈາກສະ ທີ່ ຢູ່ແຄມບຶງ. ມັນເຊື່ອວ່ານັ້ນແມ່ນສະລ້ຽງປາຊຶ່ງແນ່ນອນຈະ ຕ້ອງມີປານິນປາໄນ, ທ້າວເກັດດຳມັກກິນປານິນນ້ອຍແລະ ປາໄນນ້ອຍເພາະໄລ່ສວາບໄດ້ງ່າຍ. ມັນຄືດວ່າຖ້າເຂົ້າໄປຢູ່ ໃນສະແຫ່ງນັ້ນກໍເທົ່າກັບເປັນເຈົ້າຊີວິດ,ສະຫນຸກຢູ່ສະຫນຸກ ກິນ, ມີແຕ່ຜູ້ຢຳເກງ. ສ່ວນຢູ່ບຶງມັນຕ້ອງເປັນຮອງປາກໍ່ໂຕ

ອື່ນໆ ທັງນ້ຳກໍເຫມັນກຸຍ.

"ຊິໄປປ້ານອັນຕະລາຍອັນໃດ, ກູເຂົ້າໄປຢູ່ໃນສະຫັ້ນກໍສ່ຳກັບເປັນສິງຢູ່ໃນປ່າອາຟຣິກກາມີແຕ່ຜູ້ປ້ານຊ້ຳຕ່ວາ. ຕືຫລັງ ກາກິນກໍ່ຍັງໄດ້" ທ້າວເກັດດຳເວົ້າກັບໂຕເອງຢ່າງຫ້າຫາຍ ແລ້ວກໍຕັດສິນໃຈ. ມັນດີດເຕັ້ນອອກຈາກບຶງແລ້ວເລືອກະ ເລືອກກະສິນຂຶ້ນຖູທີ່ເຈົ້າຂອງສະປ້ານອ້ອມໄວ້. ມັນກີ້ງດິກລິງມາຫລາຍເທື້ອແຕ່ກໍບໍ່ຍອມງ່າຍໆ ຄິງບຶກບືນຕໍ່ໄປ, ໃນທີ່ສຸດມັນກໍຫມັ້ນເຂົ້າສະຈິນໄດ້. ມັນພົບວ່າເປັນສະລ້ຽງປາຊຶ່ງມີປານິນຢ່າງຄັບຄັ່ງອັ່ງອໍ. ປາໃນກໍມີແຕ່ບໍ່ຫລາຍ, ນອກນັ້ນກໍມີປາຊິວ ປາຫມັດ ກຸ້ງ ແລະ ສັດນ້ຳອື່ນໆ.

ທ້າວເກັດດຳຫລູບໃສ່ປານິນນ້ອຍ ແລະ ສວາບກິນຢ່າງສະບາຍ ເພາະແຕ່ໃດມາ ປານິນໃນສະແຫ່ງນີ້ບໍ່ເຄີຍຖືກປາຊະນິດອື່ນມາລົບກວນ ຫລື ໄລ່ສວາບກິນຈັກເທື່ອ. ພວກມັນບໍ່ມີສະຕິລະວັງຕົວ ຈຶ່ງຕົກເປັນເຫຍື່ອຢ່າງງ່າຍດາຍ. ຫລາຍເທື່ອຫລາຍທີ່ເຂົ້າ, ປານິນໃນສະກໍພາກັນແຕກຕື່ນ ແລະ ຫລີກຫນີໄປໄກໆ ແຕ່ເຖິງຈະຫລີກຫນີໄປໄກສ່ຳໃດກໍຕາມ ປານິນໂຕຂະຫນາດທໍ່ນິ້ວກ້ອຍລົງມາແມ່ນຖືກໄລ່ນຳຫັບ ແລະ ຕົກເປັນເຫຍື່ອໂຕແລ້ວໂຕຕໍ່.

ເມື່ອກິນປານິນແລ້ວ ກໍຫັນມາກິນກຸ້ງ ເມື່ອກິນກຸ້ງກໍ

ຫັນມາກິນປາຊິວ ແລະ ອື່ນໆ. ບໍ່ດົນບໍ່ນານທ້າວເກັດດຳກໍຕຸ້ຍດີພີມັນ ແລະ ໃຫຍ່ຂຶ້ນໂຕທໍ່ແຂນ. ປາຢູ່ໃນສະທັງຫມົດຕ່າງກໍເກງກົວແລະ ຕ້ອງລະວັງໂຕຢູ່ສະເຫມີ, ທ້າວເກັດດຳລອຍໄປທາງໃດ ປາອື່ນໆຕ້ອງຫລີກຫນີໄປໄກໆ.

ເມື່ອກິນປານ້ອຍບໍ່ເຕັມທ້ອງເຕັມໄສ້ງ່າຍ ມັນກໍຫັນມາກິນປາບິນປາໃນໂຕຂະຫນາດສອງນິ້ວ ຫລື ສາມນິ້ວ, ແຕ່ກໍຍາກແດ່ ເພາະປາໂຕຂະຫນາດນີ້ຫລົບຫລີກເກ່ງ ແລະ ໄວ, ມີຫລາຍໆ ເທື່ອມັນໄລ່ນຳບໍ່ທັນແລ້ວກໍເລີຍຫັນມາສວາບກິນປານ້ອຍໆ ທີ່ໄປບໍ່ວ່ອງບໍ່ໄວ. ຄວາມຈິງການທີ່ທ້າວເກັດດຳຈະກິນແຕ່ປານ້ອຍໆ ອັນມີຫລາຍຊະນິດຢູ່ໃນສະນັ້ນກໍນັບວ່າເຫລືອອີ່ມ ແຕ່ມັນຊ້ຳມັກໄລນາກໄລພາ. ກິນປານ້ອຍແລ້ວກໍຍັງປາກກິນປາໃຫຍ່ກ່ວານັ້ນຕື່ມອີກ,ໄລ່ສວາບໂຕນັ້ນໂຕນີ້ຕາມຊອບໃຈ.

ວັນຫນຶ່ງ ຫລັງຈາກກິນເຫຍື່ອອີ່ມສົມຄວນແລ້ວທ້າວເກັດດຳກໍລອຍລ່ອງອ້ອມສະ ແລະ ໄປພໍ້ປາບິນໂຕຫນຶ່ງຂະຫນາດທໍ່ສາມນິ້ວ ລອຍຊ້າໆວົນໄປວຽນມາຢູ່ບ່ອນເກົ່າ. ທ້າວເກັດດຳລອຍເຂົ້າໄປໃກ້ໆ ແຕ່ປາບິນໂຕນີ້ກໍບໍ່ຫລົບຫລີກໄປທາງໃດ, ທ້າວເກັດດຳໄດ້ທ່າກໍຫລຸບເຂົ້າໃສ່ແລ້ວສວາບລືດລົງທ້ອງ. ມັນຈະລອຍຕໍ່ໄປ ແຕ່ໄປໄດ້ພຽງ

ຫນ້ອຍດຽວກໍ່ຮູ້ສຶກຝືດຕຶ້ງ ສັງເກດມີເສັ້ນສາຍອັນໃດອັນຫນຶ່ງຄາຢູ່ປາກ. ຄວາມຈິງປານິນເຄາະຮ້າຍ ສອງຕໍ່ໂຕຖືກເບັດຢູ່ກ່ອນແລ້ວ. ທ້າວເກັດດຳລອຍຕໍ່ໄປບໍ່ໄດ້, ມັນດີ້ນເຈືອກໃຕ້ເຈືອກເຫນືອ, ຝືດໄປຝືດມາສຸດຂີດ ແຕ່ກໍ່ບໍ່ຫລຸດ, ດີ້ນຈົນເຫນື່ອຍ ເສັ້ນສາຍນັ້ນກໍ່ຍັງຄາປາກຢູ່ ໃນທີ່ສຸດມັນກໍ່ອ່ອນແຮງ ແລ້ວກໍ່ລອຍວົນໄປວຽນມາຢູ່ບ່ອນເກົ່າ, ສະພາບທຸກຢ່າງເປັນຄືປານິນໂຕທີ່ມັນໄດ້ສວາບກິນນັ້ນເອງ.

ຕອນແລງ ມີຄົນມາຍົກຄັນເບັດຂຶ້ນແລ້ວກໍ່ເວົ້າອອກມາສຽງດັງໆວ່າ: "ໂຫ້! ໄດ້ປາຄໍ່ໃຫຍ່" ສ່ວນຄັນເບັດໂກ່ງເກືອບຫັກໂດຍມີທ້າວເກັດດຳດີ້ນຫາງຢູ່ບັດໆ ທີ່ສົ້ນສາຍເບັດ.

24 / VII

ປາຄໍ່ທີ່ເປັນອ້າຍນ້ອງຂອງປາຄໍ່ເກັດດຳ ຍັງພາກັນລ່ອງລອຍຫາກິນຢູ່ຕາມຫນອງ ຕາມບຶງ ແລະ ຫ້ວຍຮ່ອງຄອງເຫມືອງຕໍ່ໄປ. ພວກມັນບໍ່ມັກໂລບມາກໂລພາ. ວັນຫນຶ່ງຂ້າງຫນ້າພວກມັນອາດຈະໄດ້ພົບຫນ້າກັນອີກ, ແຕ່ທີ່ແນ່ນອນກໍ່ຄືພວກມັນຈະບໍ່ໄດ້ພົບພໍ້ກັບທ້າວເກັດດຳອີກເລີຍ.

# ນ້ຳໃຈຂອງສົມປອງ

ໂດຍ: ອຸທິນ ບຸນຍາວົງ

ທຳອິດສົມປອງມີເປັດນ້ອຍຫົກໂຕ ແຕ່ມາຕາຍໂຕຫນຶ່ງຈຶ່ງບັງເຫລືອຫ້າ. ແມ່ເປັນຜູ້ຊື້ມາໃຫ້ສົມປອງແຕ່ຕະຫລາດເພື່ອລ້ຽງໄວ້ກິນໄຂ່. ສົມປອງມັກກິນຕົ້ມໄຂ່ຕອນເຊົ້າກ່ອນໄປໂຮງຮຽນ.

ເປັດນ້ອຍທັງຫ້າໂຕມີອາຍຸສອງອາທິດແລ້ວ, ມັນຫ້າວຫັນລອຍນ້ຳເກ່ງ. ສົມປອງມັກປ່ອຍມັນລົງຫລິ້ນນ້ຳຢູ່ສະຫລັງບ້ານເປັນປະຈຳທຸກມື້ກ່ອນຈະໄປໂຮງຮຽນ. ສ່ວນເວລາທີ່ຢູ່ບ້ານເຊັ່ນ: ມື້ພັກຫລືຍາມເລີກຈາກໂຮງຮຽນ ສົມປອງກໍເອົາສຽມຂຸດຂີ້ກະເດືອນໃຫ້ມັນກິນ, ເປັດນ້ອຍທັງຫ້າມັກກິນຂີ້ກະເດືອນຫລາຍ, ເມື່ອສົມປອງເອົາສຽມໄງ້ດິນຂຶ້ນ ເຫັນຂີ້ກະເດືອນມັນກໍຍາດກັນກິນເປັນຍຸບໆ, ບາງ

ເທື່ອ ເປັດ ສອງ ໂຕ ກໍ ຢາດຂີ້ກະເດືອນໂຕດຽວໂດຍຄາບ ໂຕລະສົ້ນແລ້ວກໍ່ມີເປັດໂຕທີ່ສາມມາຄາບ ເອົາກາງເຄິງ ດຶງເອົາໄປກິນ. ສົມປອງເຫັນດັ່ງນີ້ກໍ່ຫົວແອັກໆ ແລ້ວກໍຂຸດດິນຄົ້ນຫາຂີ້ກະເດືອນຫລືແມງໄມ້ຕ່າງໆ ທີ່ຢູ່ຕາມພື້ນດິນຕໍ່ໄປ. ບາງເທື່ອສົມປອງກໍ່ຮູ້ສຶກຫຍຸ້ງຍາກໃນຫົວໃຈເພາະພຽງແຕ່ສັບສຽມລິງດູເປັດນ້ອຍທັງຫ້າກໍຫຸ້ມໃສ່ໂລດ ພໍຖອດສຽມ ແລະ ຈະສັບລິງບ່ອນເກົ່າກໍປ້ານໄປສັບຖືກເປັດນ້ອຍ, ດັ່ງນີ້ສົມປອງຈຶ່ງໄດ້ໃຊ້ມືປັດປ່າຍມັນອອກໄປກ່ອນທີ່ຈະສັບລິງເທື່ອໃຫມ່.

ເປັດນ້ອຍທັງຫ້າກິນອາຫານເກ່ງ ແລະ ໃຫຍ່ໄວ. ສົມປອງຮັກມັນຫລາຍ ແລະ ຫາອາຫານມາເກືອມັນບໍ່ໄດ້ຂາດ ເຊັ່ນ: ຮໍາອ່ອນ ເຂົ້າປຽນ ແລະຜໍາຕາມໜອງເປັນຕົ້ນ. ທຸກມື້ນ້ອງນ້ອຍມັກແຍງແຕ່ເປັດນ້ອຍ, ຕື່ນມາມື້ເຊົ້າຕ້ອງເບິ່ງ ແລະ ເກືອເປັນສາກ່ອນຈຶ່ງໄປລ້າງຫນ້າ ແລະປັ້ນເຂົ້າເຊົ້າ ແລ້ວໄປໂຮງຮຽນ. ເມື່ອເຫັນສົມປອງ ເປັດນ້ອຍທັງຫ້າ ແກ່ວງຫາງດິດໆ ສະແດງຄວາມຮັກແພງສະ ຫນິດ ສະຫນົມ ແລະ ຮ້ອງຂໍອາຫານທີ່ມັນເຄີຍໄດ້ຮັບເປັນປະຈໍາ ປະກິດວ່າມັນບໍ່ສູ້ຜິດຫວັງເລີຍສົມປອງມັກມີອັນນັ້ນອັນນີ້ ໃຫ້ເປັດນ້ອຍກິນສະເຫມີ.

ສົມປອງຮັກເປັດນ້ອຍ ແລະ ເປັດນ້ອຍກໍຮັກສົມປອງ ເປັນຄືດັ່ງຫມູ່ເພື່ອນຮັກແພງກັນ. ແມ່ສົມປອງກໍຮັກເປັດນ້ອຍ ແລະ ພາກພູມໃຈທີ່ສຸດທີ່ລູກຊາຍເອົາໃຈໃສ່ລ້ຽງເກືອເປັດນ້ອຍທັງຫ້າ. ແມ່ລັກແນງສົມປອງຕອນທີ່ເກືອເປັດນ້ອຍ ມັນເປັນພາບທີ່ຫນ້າຮັກ ແລະ ໄຮ້ດຽງສາຊຶ່ງແມ່ເຫັນແລ້ວຮູ້ສຶກອົບອຸ່ນຊຸ່ມຊື່ນໃນຫົວໃຈທີ່ສຸດ.

ແມ່ເຄີຍເວົ້າວ່າ: "ລ້ຽງຊຸດນີ້ໃຫຍ່ແລ້ວ ແມ່ຈິຊື້ມາໃຫ້ລ້ຽງອີກ. ລູກຈິມີໄຂ່ເປັດກິນຢ່າງບໍ່ອັ້ນ, ເຫລືອກິນກໍຂາຍແລ້ວເອົາເງິນມາຊື້ປຶ້ມຂຽນ ຊື້ສໍ ປາກກາສໍາຫລັບລູກເອງເປັນການມັດທະຍັດຊ່ອຍຄອບຄົວຂອງເຮົາ".

ບ້ານສົມປອງຢູ່ແຄມຖະຫນົນ ບາງຄັ້ງບາງຄາວເປັດນ້ອຍກໍອອກຈາກບໍລິເວນບ້ານໄປຍ່າງຢູ່ກາງຖະຫນົນ ສົມປອງຕ້ອງແລ່ນໄປໄລ່ໃຫ້ກັບຄືນ ເພາະເທິງຖະຫນົນມີລົດແລ່ນໄປມາເລື້ອຍໆ, ຢ້ານເປັດໄດ້ຮັບອັນຕະລາຍເຖິງຂັ້ນເສຍຊີວິດ. ເພື່ອປ້ອງກັນບໍ່ໃຫ້ເປັດນ້ອຍອອກໄປນອກບ້ານສົມປອງກໍສານກະແຕະອ້ອມບ້ານ ຈິ່ງໄວ້ແຕ່ບ່ອນປະຕູສໍາລັບຄົນທ່ຽວເຂົ້າທ່ຽວອອກ, ເຖິງປານນັ້ນກໍມີບາງໂອກາດທີ່ເປັດນ້ອຍທັງຫ້າໄປຍ່າງທ້າທາຍຢູ່ ກາງ ຖະ ຫນົນໂດຍອອກບ່ອນປະຕູຊຶ່ງບາງຄັ້ງມີຜູ້ລືມອັດ. ສົມປອງເອງກໍເຄີຍ

ລືມອັດເລີ້ຍ.

ຕິດຢູ່ຂ້າງຝາຫລັງບ້ານມີແປ້ນແຜ່ນຫນຶ່ງຊຶ່ງສົມປອງໃຊ້ເປັນກະດານຂຽນບັນທຶກ. ເທິງແປ້ນແຜ່ນນີ້ມີຂໍ້ຂຽນບອກເຖິງມື້ທີ່ເອົາເປັດມາລ້ຽງ, ບອກເຖິງຈຳນວນເດີມຂອງເປັດທີ່ນຳມາມື້ທຳອິດຄືເລກຫົກ. ຢູ່ກ້ອງຫັ້ນມີເລກຫນຶ່ງພ້ອມດ້ວຍເຄື່ອງຫມາຍລົບ ( - ) ອັນສະແດງເຖິງເປັດນ້ອຍຕາຍແລ້ວຫນຶ່ງໂຕ ຢູ່ກ້ອງຫັ້ນມີເລກຫ້າອີກອັນເປັນຈຳນວນເປັດທີ່ຍັງຢູ່ທັງຫມົດໃນປະຈຸບັນ.

ເປັດນ້ອຍທັງຫ້າອ້ວນດີພີມັນ ແລະ ຫ້າວຫັນ, ເປັນຕາຮັກຕາແພງ ເປັນສິ່ງພູມໃຈທີ່ສຸດຂອງສົມປອງ, ບັດນີ້ມັນມີອາຍຸຢ່າງເຂົ້າອາທິດທີ ສີ່ແລ້ວ. ແຕ່ພ້ອມໆກັບນັ້ນຈຳນວນເປັດໃນກະດານກໍຈະຫລຸດຈາກຫ້າເຫລືອເປັນສີ່ເພາະມີເລກຫນຶ່ງກ້ອງມາລົບອີກ.

ມັນເປັນກົດເກນທຳມະດາຂອງເລກ ແຕ່ເປັນເລື່ອງເສົ້າສຳລັບສົມປອງ.

ວັນທີດນັ້ນ ສົມປອງໄປທ່ຽວຫລິ້ນນຳຫມູ່ແຕ່ເຊົ້າໂດຍບໍ່ຄອບແມ່ວ່າໄປໃສ ຈົນໃກ້ຊິທ່ຽງຈຶ່ງຕ່າວຄືນບ້ານ ພໍມາຮອດກໍເຫັນຄົນຫຸ້ມຢູ່ຕໍ່ຫນ້າເຮືອນສາມສີ່ຄົນ. ໃນຈຳນວນນີ້ມີແມ່ຂອງສົມປອງ ແລະ ລຸງແຜງຊຶ່ງຢູ່ບ້ານເຫນືອສຸດ

ນີສຽງເວົ້າກັບວ່າ :

- "ເປັດນ້ອຍຂອງສິນປອງ".

- "ຢຽບຄໍພໍດີມັນຈຶ່ງບໍ່ເຫລືອ".

- "ເປັດມັນມາຢ່າງປູ່ກາງຖະຫນົນພີ້".

ລຸງແຝງຫິ້ວຂາເປັດຂຶ້ນໃຫ້ຄົນເບິ່ງ, ພໍນາບເຫັນດັ່ງນັ້ນສິນປອງກໍເຂົ້າໃຈທັນໃດໂລດວ່າເປັດນ້ອຍຂອງຕົນຕາຍແລ້ວ ຈຶ່ງເວົ້າຂຶ້ນຫນັກແຮງທັງຮ້ອງໄຫ້.

- "ໃຜຢຽບເປັດຂ້ອຍ? ຕາຍແລ້ວ! ເປັດຂ້ອຍຕາຍແລ້ວ...".

- "ມັນພາກັນຍ່າງປູ່ກາງຖະຫນົນພີ້ ລຸງຂີ່ລົດຖີບມາເລີຍຂະໂນະເອົາ, ຫລີກກໍບໍ່ທັນ" ລຸງແຝງເວົ້າຂຶ້ນ.

- "ໂອຍ... ເປັດຂ້ອຍບ່າ, ຕາຍແລ້ວເປັດຂ້ອຍ, ເຈົ້າຕ້ອງເອົາມາໃຊ້ແທນ".

- "ຊ່າງມັນເທາະລູກ, ແມ່ຊິຊື້ໃຫ້ໃຫມ່ດອກ, ເປັດເຮົາຫາກໄປທ່ຽວປູ່ກາງຖະຫນົນພຸ້ນເດ ລົດເພິ່ນກໍຢຽບເອົາຊັ້ນຕ່ວາລູກເອງບໍ່ກໍາກັບມັນດີ ນັ່ວໄປທ່ຽວຫລິ້ນກະເປັນຈັ່ງຊັ້ນແຫລະ" ແມ່ສິນປອງວ່າ.

ລຸງແຝງເຫັນສິນປອງຮ້ອງໄຫ້ກໍໃຈອ່ອນແລະເວົ້າຂຶ້ນອີກວ່າ:

-"ລຸງຊິເອົາມາໃຊ້ແທນດອກ. ປູ່ບ້ານລຸງກໍມີເປັດນ້ອຍໂຕໜຶ່ງ ສໍ່າດຽວນີ້ແຫລະ, ໄປເອົານໍາລຸງດຽວນີ້ກໍໄດ້".

ການໃສ້ເຫລັກກັບເລື່ອງລົດປຽບໄດ້ບຸດີລົງ ເມື່ອລຸງແຝງເອົາສິນປອງຊ້ອນທ້າຍລົດຖີບ ແລ່ນ ອອກ ຈາກ ບ່ອນ ເກີດເຫດ ມຸ່ງໜ້າສູ່ບ້ານຂອງລາວ, ເມື່ອໄປຮອດລຸງແຝງກໍເຂົ້າໄປກ້ອງຕະລ່າງເຮືອນ, ຈັບ ເອົາ ເປັດ ນ້ອຍທີ່ຂັງຢູ່ໃນສຸ່ມອອກມາ, ຂະນະດຽວກັບນັ້ນສອນເດດ ລູກຊາຍຂອງລຸງແຝງອາຍຸ ໑໐ ປີ ສໍ່າດຽວກັບສິນປອງ ອອກມາແຕ່ໃນເຮືອນມາບເຫັນດັ່ງນັ້ນກໍຮ້ອງຖາມຂຶ້ນເປັນປ່ອນໆ.

-"ພໍ່ເອົາເປັດນ້ອຍເຮົາອອກມາເຮັດຫຍັງ? ຢ່າເອົາໃຫ້ເຂົາໄດພໍ່!".

-"ເອົາໃຫ້ສິນປອງນີ້ສາລູກ, ແລ້ວເຮົາຟັກເອົາໃຫມ່ຢູ່ໂຕດຽວມັນເຫງົາ".

-"ບໍ່! ບໍ່ໃຫ້... ເປັດເຮົານ່າ ເຮົາບໍ່ໃຫ້" ສອນເດດເວົ້າທັງນ້ຳຕາພັງຍ່າວ.

-"ໂຕດຽວໜຶ່ງລ້ຽງໄວ້ເຮັດຫຍັງ! ເຮົາ ຟັກ ເອົາ ໃຫມ່ຫລາຍໆໂຕພ້ອມກັນ. ພໍ່ປຽບເປັດເຂົາຕາຍ ຕ້ອງໃຊ້ແທນເຂົາ".

-"ບໍ່ໃຫ້ ເຮົາບໍ່ໃຫ້, ຮືໆໆ..." ສອນເດດທັງປະຕິເສດ

ທັງຮ້ອງໄຫ້ສະອຶກສະອື້ນ.

ລຸງແຝງບໍ່ຍອມຟັງສຽງຄັດຄ້ານຂອງລູກ ບອກສິນປອງຊຶ່ງອູ້ມເປັດນ້ອຍຢູ່ໃນມືໃຫ້ຂື້ນແປ່ງລົດ ແລ້ວທັງສອງກໍຂີ່ອອກຈາກບ້ານໄປ. ສິນປອງຫລຽວຄືນຫລັງເຫັນສອນເດດເອົາມືເຊັດນ້ຳຕາຮ້ອງໄຫ້ສົ່ງສຽງດັງຂື້ນກ່ວາເກົ່າ. ເມື່ອໄດ້ເຫັນໄດ້ຍິນດັ່ງນັ້ນ ສິນປອງບໍ່ຮູ້ສຶກດີໃຈເລີຍທີ່ໄດ້ເປັດນ້ອຍໂຕໃຫມ່ໄປແທນໂຕທີ່ຕາຍແລ້ວ ຫາກແຕ່ຮູ້ສຶກຄືກັບວ່າໄປຍາດແຍ່ງເອົາຂອງເຂົາມາ.

ກັບມາຮອດບ້ານ ສິນປອງຈັດການເອົາຮຳອ່ອນປົນນ້ຳໃຫ້ເປັດໂຕໃຫມ່ກິນ ສ່ວນເປັດສີ່ໂຕເຫັນດັ່ງນັ້ນ ກໍພາກັນແລ່ນມາຍາດກິນເປັນຍຸບໆ, ເປັດໃຫມ່ຮູ້ສຶກຢຳເກງເພາະບໍ່ແມ່ນຖິ່ນຂອງໂຕ ກໍຫລີກຫ່າງອອກໄປ, ເມື່ອເປັນດັ່ງນັ້ນ ສິນປອງເລີຍຈັດຫາຮຳໃສ່ຮາງໃຫມ່ ໃຫ້ກິນຢູ່ບ່ອນຫ່າງໆ.

ສິນປອງນັ່ງເບິ່ງເປັດໃຫມ່ເປັນເວລາດົນໆ, ມັນບໍ່ຫ້າວຫັນ ອາດເປັນເພາະມາຢູ່ຕ່າງຖິ່ນ ເຂົາຄິດເຫັນເປັດໂຕທີ່ໄດ້ຕາຍໄປ ທັງຮູ້ສຶກເສັຍດາຍ ແລະ ອີດົນເຫັນມັນຖືກລົດຢຽບ, ເປັດນ້ອຍໂຕນັ້ນຖືກຢຽບຢູ່ກາງຖະຫນົນ ບ່ອນທີ່ລົດລາແລ່ນໄປແລ່ນມາ. ຖ້າສິນປອງເຝົ້າຮັກສາບໍ່ປ່ອຍ

ໃຫ້ມັນອອກຈາກບໍລິເວນບ້ານ ມັນກໍບໍ່ຖືກລັດປຽບ ແຕ່ອັນນີ້ສິນປອງໄປທ່ຽວຫລິ້ນ, ບໍ່ເບິ່ງແຍງເປັດທີ່ແມ່ສະຫລະເງິນຊື້ມາໃຫ້ລ້ຽງ ມັນຈຶ່ງເກີດເລື່ອງເສຍຫາຍ ຄິດໄປສິນປອງຮູ້ສຶກວ່າ ທັງຫມົດນີ້ ເນື່ອງມາຈາກ ຈຸດອ່ອນຂອງໂຕເອງ. ເຂົາຄິດເຫັນລູກຊາຍຂອງລຸງແຜງ ທີ່ຮ້ອງໄຫ້ສະອື້ນ ດ້ວຍຄວາມເສຍດາຍ ຕອນທີ່ເຂົາເອົາເປັດນ້ອຍໂຕນີ້ມາ, ມັນບໍ່ບຸຕິທໍາເລີຍ! ແລ້ວເຂົາກໍຄິດເຫັນໂຕເອງຕອນທີ່ຮ້ອງໄຫ້ເສຍດາຍທີ່ເປັດນ້ອຍຖືກປຽບ ຕາຍ ຢູ່ ກາງຖະຫນົນ. ເຂົາຮູ້ສຶກເສຍດາຍສ່ຳໃດລູກຊາຍຂອງລຸງແຜງຕ້ອງຮູ້ສຶກເສຍດາຍ ຫ້າ – ຫົກຕໍ່ທັງນີ້ກໍເພາະສອນເດດມີພຽງໂຕດຽວ, ສ່ວນສິນປອງມີເຖິງຫ້າໂຕ, ຕາຍໂຕໜຶ່ງກໍບັງສີ. ເມື່ອຄິດໄດ້ດັ່ງນີ້ສິນປອງກໍຕັດສິນໃຈເອົາເປັດໄປສົ່ງຄືນສອນເດດ.

ຕອນແລງມາ, ສິນປອງອຸ້ມເປັດນ້ອຍໂຕນັ້ນຍ່າງມຸ່ງຫນ້າໄປບ້ານລຸງແຜງ, ເຂົາເຫັນສອນເດດຫລິ້ນຢູ່ກ້ອງຕະລ່າງ ໃກ້ກັບສຸ່ມເປົ້າທີ່ເຄີຍຂັງເປັດນ້ອຍໂຕນີ້, ສ່ວນລຸງແຜງບໍ່ຢູ່ ສິນປອງຍື່ນເປັດນ້ອຍຄືນໃຫ້ສອນເດດ ແລະເວົ້າວ່າ:

– "ເຮົາເອົາມາຄືນໃຫ້ ເຮົາມີຢູ່ຫລາຍໂຕ".

-"ຂອບໃຈ " ສອນເດດຮັບເອົາ ແລ້ວກໍເອົາຂັງໃສ່ສຸ່ມໄວ້ຄືນ.

ສົມປອງລາກັບຄືນບ້ານ ດ້ວຍຄວາມຮູ້ສຶກສະບາຍໃຈ, ມັນຄືດັ່ງໄດ້ຍົກແບກຫາບອັນໜັກໆອອກຈາກບ່າທີ່ເຈັບໆ ປວດໆ.

# ປາບແມງວັນ

ໂດຍ: ອຸທິນ ບຸນຍາວົງ

ສຽງຫົວຂອງຫມູ່ນັກຮຽນດັງເປັນ ອິກ ອິກ ແອັກ ແອັກ, ເມື່ອໄນສົມຈັບຖົງປະລາດສະຕິກທີ່ເຕັມໄປ ດ້ວຍ ແມງ ວັນ ຂຶ້ນສະເຫນີຕໍ່ຄູປະຈຳຫ້ອງ ໃນໂອກາດເປີດບັ້ນແຂ່ງຂັນ ຜົນງານຕ້ອນຮັບວັນທີ ໒ ທັນວາ.

ມີຫມູ່ບາງຄົນເວົ້າໃສ່ວ່າ:

– " ໂຕຊິເອົາໄປດອງເຫລົ້າໃຫ້ພໍ່ຕູ້ເບາະ! ".

– " ອຸຍ... ຂີ້ດຽດ! ຈັ່ງຊີ້ກໍເອົາມາສະເຫນີ ".

ບາງຄົນກໍ່ວ່າ:

– " ຫມໍ່ຊິເອົາໄປຈືນກິນຕີ້! ".

ໄນສົມບໍ່ຮູ້ສຶກຫວັ່ນໄຫວຕໍ່ຄຳເວົ້າໃສ່ ຂອງຫມູ່ເພື່ອນ ແຕ່ປ່າງໃດ, ຄົງເຊື່ອຫມັ້ນຕໍ່ຕົນເອງ ແລະ ແນ່ໃຈວ່າຜົນ ງານທີ່ເອົາມາແຂ່ງຂັນກັບຫມູ່ນີ້ ບໍ່ແມ່ນເລື່ອງໄລເລເສຍ

ຫາຍອີຫຍັງ.

ເພື່ອຕຽມໃສ່ສະຫລອງວັນທີ ໒ ທັນວາ  ອັນເປັນວັນຊາດ ຄູປະຈຳຊັ້ນຂອງໄນສິນໄດ້ບອກນັກຮຽນວ່າໃຫ້ເອົາຜົນງານ  ອັນໃດອັນໜຶ່ງທີ່ນັກຮຽນໄດ້ເຮັດຂຶ້ນໂດຍຕົນເອງມາແຂ່ງຂັນເປັນການເພີ່ມເຕີມນອກຈາກການຮ່ຳຮຽນຫນັງ ສື ແລະ ວຽກງານພາຍໃນໂຮງຮຽນ. ນັກຮຽນຕ່າງກໍນຳເອົາຜົນງານຂອງຕົນຈາກການປະດິດຄິດແຕ່ງເອງ  ມາສະເຫນີຄົນລະຢ່າງເຊັ່ນ: ເຄື່ອງຫຍິບແສ່ວ, ໝໍ້ ແລະ ງົວຄວາຍທີ່ປັ້ນດ້ວຍດິນ ເກີບໄມ້ ເບັ້ຍໝາກໄມ້ຕ່າງໆ ຫົວເຜືອກ ຫົວມັນແລະອື່ນໆ.

ສ່ວນໄນສິນມີສິ່ງມາສະເຫນີແປກປະຫລາດກວ່າຫມູ່ຮຽກສຽງຫົວໄດ້ຫລາຍກວ່າຫມູ່  ນັ້ນຄືຖົງປະລາດສະຕິກຂາຫນາດທໍ່ຖົງໂອລຽງເຕັມໄປດ້ວຍແມງວັນທີ່ຕາຍແລ້ວ.

ບໍ່ວ່າແຕ່ນັກຮຽນດ້ວຍກັນທີ່ບໍ່ເຂົ້າໃຈໃນຈຸດປະສົງຂອງໄນສິນ  ແມ່ນແຕ່ຄູປະຈຳຫ້ອງກໍແປກໃຈ ແລະ ເຮັດຫນ້າສີຫົວງວາດໄດວາດຫນຶ່ງ. ຄູບອກໃຫ້ໄນສິນຊີ້ແຈງຕໍ່ຫມູ່ຟັງກ່ຽວກັບຄວາມຫມາຍ ແລະ  ຈຸດປະສົງຂອງສິ່ງທີ່ຕົນເອົາມາແຂ່ງຂັນກັບຫມູ່.

ໄນສິນຢືນຢູ່ຕໍ່ຫນ້າຫ້ອງໃກ້ ກັບກະດານດຳ ແລ້ວເວົ້າ

ຂຶ້ນດ້ວຍທ່າທາງເຄັ່ງຂຶມວ່າ:

– ສິ່ງທີ່ເຮົາເອົາມາແຂ່ງຂັນກັບໝູ່ນີ້ບໍ່ບອກໃຜກໍຮູ້ຢູ່ແລ້ວວ່າແມ່ນຫຍັງ; (ຫົວ)... ແຕ່ທີ່ໝູ່ຫົວຂວັນ ກໍເພາະບໍ່ຮູ້ຄວາມໝາຍຂອງມັນ. ນີ້ແມ່ນຜົນງານ ຂອງ ເຮົາ ຕະຫລອດໜຶ່ງອາທິດ. ເພິ່ນເວົ້າກັນວ່າຍຸງຮ້າຍກ່ວາເສືອ ແຕ່ເຮົາຂໍເວົ້າວ່າແມງວັນຮ້າຍກ່ວາສິງ. (ສຽງຫົວດັງກ່ວາເກົາ).

ແມງວັນເປັນຕົວການນຳພະຍາດ ມາຕິດແປດກັບຄົນ ເຮັດໃຫ້ຄົນເຈັບໄຂ້ໄດ້ປ່ວຍ ແລະ ຕາຍມາຫລາຍຕໍ່ຫລາຍແລ້ວ. ມັນບິນໄປຕອມຂອງເນົ່າ, ຕອມອາຈົມ, ຂີ້ໝູຂີ້ໝາ, ຕອມທົ່ວທິບແລ້ວກໍບິນໄປຕອມອາຫານການກິນຂອງເຮົາ. ຕີນຂອງມັນນັ້ນແຫລະສຳຄັນ, ເມື່ອໄດ້ຕອມຂອງເປື້ອນແລ້ວ ມັນກໍບິນເວີນໄປຫາຖ້ວຍອາ ຫານ ຂອງເຮົາ ເອົາຕີນເປື້ອນໆນັ້ນຈຸ່ມລົງຖ້ວຍແກງ ປານວ່າເປັນບ່ອນຊຳລະລ້າງສ່ວຍຂອງເປື້ອນອອກ ຈາກ ຕີນ ຂອງ ມັນ. ເວົ້າມາແລ້ວຂີ້ດຽດ!.

ນອກຈາກມີສິ່ງເປື້ອນເປີປູ່ຕາມຕີນ ຕາມຂາຂອງມັນແລ້ວຍັງມີແມ່ພະຍາດນຳອີກ. ເມື່ອເຮົາກິນອາຫານທີ່ຖືກແມງວັນຕອມ ເຮົາກໍກືນເອົາແມ່ພະຍາດລົງໄປນຳ, ມີພະ

ຍາດຫລາຍຢ່າງທີເກາະຫ້ອຍ ຫລືຫມັ້ນຢູ່ນຳໂຕແມງວັນ ເຊັ່ນ: ພະຍາດເຈັບທ້ອງ, ເຈັບຕາ, ປອດແຫ້ງ, ໄຂ້ທໍລະພິດ ແລະ ອື່ນໆ.

ແມ່ພະຍາດມັນ ໂຕນ້ອຍຫລາຍ ຈົນເຮົາເບິ່ງບໍ່ເຫັນຖ້າໃຊ້ກ້ອງຈຸລະທັດເບິ່ງ ຈະເຫັນເປັນຍຸບໆ ຄືຫນອນເຈາະຊາກຫມາເນົ່າ. ພະຍາດເຫລົ່ານີ້ ເຮັດໃຫ້ຄົນຕາຍມາຫລາຍຕໍ່ຫລາຍແລ້ວ. ປີກາຍນີ້ນ້ອງຂອງເຮົາຄົນຫນຶ່ງກໍຕາຍຍ້ອນເປັນທ້ອງຂີ້ຣາກ. ເຮົາສຸດແສນເສຍໃຈ ແລະ ຖຽດແຄ້ນທີສຸດ. ກະແມ່ນຖຽດແຄ້ນໃຫ້ແມງວັນນັ້ນລະ! ເຮົາໄດ້ອ່ານ ປຶ້ມເຫລັ້ມຫນຶ່ງ ທີເຜີຍແຜ່ເຖິງໄພພິບັດ ທີມາຈາກແມງວັນ.

ເຮົາມາຮູ້ຄວາມຈິງວ່າ ແມງວັນເປັນຕົວການສຳຄັນທີນຳເອົາພະຍາດມາຕິດແປດໃສ່ຄົນ ເພາະແມງວັນພົວພັນຕິດແທດກັບຄົນທຸກວັນ, ມັນຢູ່ຕາມເຮືອນ ຕາມຊານ ໄປເຮືອນໃຜກໍເຫັນແມງວັນ ເຂົ້າໄປໃນປ່າກໍພົບເຫັນແມງວັນ.

ແມງວັນໂຕແມ່ນັ້ນອອກໄຂ່ຊຸດຫນຶ່ງໄດ້ ໑໕໐ ຫນ່ວຍ, ໃນຊີວິດຫນຶ່ງແມງວັນໄຂ່ໄດ້ຫົກຊຸດ ໂຕທີຍືນທີສຸດນັ້ນມີອາຍຸ ໒໐ ມື້.

ແມງວັນມັນໄຂ່ໃສ່ຂອງເນົ່າເຫມັນ ໄຂ່ແລ້ວກໍປ່ອຍປະ

ລະເລີຍ ບໍ່ເອົາຫົວຊາເບິ່ງແຍງຟັກໄຂ່. ຖ້າໄຂ່ຕອນເຊົ້າ ພໍຮອດແລງມາໄຂ່ກໍກາຍເປັນຫນອນໄຕ່ຫຍຸບໆ ອາໄສກິນຂອງບູດຂອງເນົ່າຫັ້ນເລີຍ. ເປັນຫນອນຢູ່ ໗ ມື້ກໍຫມົ້ນລົງດິນ. ເພື່ອ "ເຂົ້າກັບ" ຢູ່ໃນປໍ້ແຂງ, ເວລາເຂົ້າກັບນັ້ນບໍ່ມີເຫນັງຕີງ ບໍ່ກິນຫຍັງ ແຕ່ຮ່າງກາຍກໍຂະຫຍາຍຕົວປ່ຽນຈາກຫນອນເປັນແມງວັນອ່ອນ. ເຂົ້າກັບໄດ້ສາມມື້ກໍຫມົ້ນອອກຈາກປໍ້,ພໍປີກກ້າຂາແຂງກໍບິນເວີ້ນໄປຊອກຕອມຂອງເນົ່າເຫມັນ, ສືບຕໍ່ມູນເຊື້ອມັກເປື້ອນເປີຄືແມ່ມັນຕໍ່ໄປ.

ລອງມາຄິດໄລ່ເບິ່ງວ່າ ແມງວັນໂຕຫນຶ່ງໄຂ່ໄດ້ ໑໕໐ ຫນ່ວຍ ໄຂ່ ໒ ຊຸດ, ກໍເປັນຈຳນວນ ໓໐໐ ຫນ່ວຍ ໄຂ່ຈຳນວນນີ້ກາຍເປັນແມງວັນ ໓໐໐ ໂຕ. ເຮົາເວົ້າແລ້ວວ່າແມງວັນຮ້າຍກວ່າສິງ ມີແມງວັນ ໓໐໐ ໂຕກໍຄືວ່າມີສິງ ໓໐໐ ໂຕ ຢູ່ໃນຄຸ້ມບ້ານເຮົາ, ດັ່ງນີ້ຊີວິດຄົນເຮົາຈະຕົກຢູ່ໃນອັນຕະລາຍສ່ຳໃດ!.

ໃນຖົງນີ້ເຮົານັບບໍ່ໄດ້ດອກວ່າມີ ຈຳນວນທໍ່ໃດ ແຕ່ເຮົາຄິດວ່າກຳຈັດມັນໄດ້ຫນຶ່ງໂຕ ແມ່ນປ້ອງກັນບໍ່ໃຫ້ແມງວັນເກີດໄດ້ອີກ ໓໐໐ ໂຕ. ເຮົາເອົາເວລາເລີກຈາກໂຮງຮຽນຊອກຕີແມງວັນ, ໄປໃສກໍຈັບໄມ້ຕີແມງວັນຕິດໄມ້ຕິດມືໄປນຳເຫັນແມງວັນແມ່ນຢູ່ລ້າໆບໍ່ໄດ້ ຕ້ອງຟາດຕັບໂລດ. ເຮົາບໍ່

ໄດ້ເຮັດຜົນງານດ້ານອື່ນດີຫມູ່ ຈຶ່ງຂໍເອົາແມງວັນ ທີ່ເຮົາຂ້າຕາຍນີ້ມາແຂ່ງຂັນກັບຫມູ່. ຂໍສຸດຄຳຊີ້ແຈງພຽງທໍ່ນີ້.

ພໍເວົ້າສຸດ ຫມູ່ກໍຕົບມືດັ່ງສະຫນັ່ນຫ້ອງ, ມີສຽງຫນຶ່ງດັງຂຶ້ນທ່າມກາງສຽງອຶກກະທຶກວ່າ:

– "ຍົກໃຫ້ເປັນຜົນງານເດັ່ນກວ່າຫມູ່!".

ຄູປະຈຳຫ້ອງຍິ້ມຫົວ ແລ້ວກ່າວຊົມເຊີຍໄມສົນດ້ວຍຄວາມຈິງໃຈ ແລະ ບອກວ່າຢາກໃຫ້ນັກຮຽນທຸກຄົນເຮັດຄືທ້າວໄມສົນ ຄື ຊ່ອຍ ກັນ ກຳຈັດແມງວັນຕີມັນຕາຍຢ່າງຫນ້ອຍມື້ລະຫ້າຫລືສິບໂຕກໍຍັງດີ.

ການແຂ່ງຂັນຜົນງານຕ້ອນຮັບວັນທີ ໑ ທັນວາໃນຫ້ອງຂອງໄມສົນເປັນໄປຢ່າງຟົດຟື້ນ. ໄມສົນໄດ້ເປັນຕົວເດັ່ນຄົນຫນຶ່ງໃນຈຳນວນສອງສາມຄົນພາຍໃນຫ້ອງຮຽນ ບໍ່ດົນໃນໂຮງຮຽນປະຖົມແຫ່ງນີ້ກໍມີແຕ່ຜູ້ເວົ້າເຖິງຊື່ໄມສົນ ແລ້ວກໍມີນັກ ຮຽນ ພາ ກັນ ເຮັດ ໄມ້ ຕີ ແມງ ວັນ ຢ່າງ ເປັນ ຂະ ບວນ. ພວກເຂົາເອົາໄມ້ຕີແມງວັນຕິດມືໄປນຳ. ບໍ່ວ່າໄປໂຮງຮຽນຫລືບ່ອນນັ້ນບ່ອນນີ້ ແມ່ນຈັບໄມ້ຕີແມງວັນໄປພ້ອມ ຄືດັ່ງຄົນຈັບໄມ້ຄ້ອນ ເວລາລົງເຮືອນ, ເມື່ອເຫັນແມງວັນ ກໍຟາດໂລດ, ບາດຖືກ, ບາດບໍ່ແຕ່ສ່ວນຫລາຍ ແມ່ນຖືກໂປະ! ແມງວັນມຸ່ນອັບຍັບຫລືບໍ່ກໍດິ້ນແດັດແດັດແລ້ວກໍຕາຍ.

# ເຝົ້າຫວງຮັງ

ໂດຍ: ອຸທິນ ບຸນຍາວົງ

ນັບແຕ່ອ້າຍຄຳສູນລົງເຮືອນໄປ ນ້ອງນ້ອຍບຸນລຸນກໍສູນຂຶ້ນວຶດໆ ດຶງສາຍກັນຖຸນຫລົ່ນດັງຕັບໆ ຄຶດປາກເອົາກ້ອນຫີນໃສ່ແລ້ວຍິງອັນໃດອັນໜຶ່ງໃຫ້ນັບສົມໃຈແຕ່ກໍອົດໃຈໄວ້ເພາະເກງໃຈແມ່ທີ່ນັ່ງປູ່ເຊຍເຮືອນເບື້ອງເຫນືອ. ບຸນລຸນເກີດອາການບໍ່ພໍໃຈກໍເພາະຜູ້ເປັນອ້າຍ ຊຶ່ງຮັບຫນ້າທີ່ເປັນຫົວຫນ້າກອງຫລອນປະຈຳບ້ານ ບໍ່ໃຫ້ໄປຮ່ວມນຳໃນການຈອບທຳລາຍກວາດລ້າງພວກປະຕິການທີ່ມາເຄືອນໄຫວໃນຂົງເຂດບ້ານນາແປນີ້. ບຸນລຸນອາຍຸ ໑໒ ປີ ທໍ່ນັ້ນຍັງນ້ອຍເກີນໄປທີ່ຈະສູ້ຮົບຕົບຕີກັບພວກປະຕິການ.

ກ່ອນລົງເຮືອນໄປ ອ້າຍຄຳສູນໄດ້ເວົ້າໃສ່ວ່າ:

–" ຫົວທໍ່ໝາກຕ້ອງນີ້! ມັນຊິໄປຮັດຫຍັງເຂົາໄດ້".

ຄຳເວົ້າອັນນີ້ເຮັດໃຫ້ບຸນລຸນເຈັບໃຈ ເພາະມັນເປັນການຖືກຫຸ່ນກັນ. ຫາວ່າເດັກນ້ອຍສ່ຳບຸນລຸນຈະບໍ່ມີສາມາດຈັກເມັດທີ່ຈະລົງໂທດຫລືດັບສູນສັດຕູ.

– " ບໍ່ແມ່ນຊິເອົາແຕ່ປືນຍິງຫົວມັນໄດ້, ໃຊ້ກັນຖຸນນີ້ຍິງໃສ່ແກ່ນຕາມັນກໍແຈບຕ່ວາ" ບຸນລຸນຈົ່ມມຸນໆ. ເຫັນລູກຊາຍນ້ອຍສະແດງອາການບໍ່ພໍໃຈ ຜູ້ເປັນແມ່ອົດບໍ່ໄດ້ເລີຍເວົ້າຂຶ້ນວ່າ,:

– " ໃຈລູກນະເກັ່ງຫລາຍ ແມ່ພູມໃຈອີຫລີທີ່ມີລູກຊາຍໃຈກ້າໃຈເດັດ ແຕ່ວ່າລູກຍັງນ້ອຍ ອ້າຍບໍ່ໃຫ້ໄປນຳກໍເຮັດວຽກອັນອື່ນແທນໄດ້. ລູກໄດ້ຍິນຕ່ວາ ຄວາຍຂອງໄທບ້ານເຮົາເສຍໄປສອງໂຕແລ້ວສອງອາທິດມານີ້. ບໍ່ມີເສືອຫລືອີຫຍັງມາກັດມັນດອກ. ແມ່ນພວກປະຕິການຫັ້ນລະ, ພວກມັນມາເຄື່ອນໄຫວຢູ່ເຂດນີ້ ເມື່ອບໍ່ມີຫຍັງຊິກິນກໍລັກງົວລັກຄວາຍໄທບ້ານເຮົາຂ້າກິນ. ຄວາຍເຮົາກໍຫລາຍ, ພໍ່ກັບອ້າຍເຈົ້າເບິ່ງບໍ່ຫລ້ອນດອກ ເພາະທັງໄຖນາທັງເຮັດຫນ້າທີ່ປ້ອງກັນຄວາມສະຫງົບ. ດັ່ງນັ້ນໃຫ້ລູກກຳກັບລ້ຽງຄວາຍດີໆ ຕອນທີ່ຍັງພັກໂຮງຮຽນຢູ່ນີ້. ບໍ່ແມ່ນປ່ອຍເອົາແຕ່ມັນຊິໄປ, ຄ່ຳມາກໍບໍ່ເຫັນແຫລ່ງ ຈັ່ງຊັ້ນບໍ່ໄດ້, ຈັກຫນ່ອຍເຂົາລັກເອົາຄວາຍໄປຂ້າກໍຊິບໍ່ຮູ້ເມື່ອຊ້າ".

–" ບັກໃດມາລັກບໍ່ໄດ້ດອກແມ່. ລູກຊິເອົາກັບຖຸບຍິງ ຫົວມັນ".

–" ຄັນລູກຫັນໄດ້ຍິງມັນລະດິ. ຢ້ານລູກບໍ່ຮູ້ເມື່ອ, ບໍ່ ຫັນເຫັນຊ້ຳດອກຕອນເຂົາມາລັກ".

–" ລັບລອງນະແມ່ ບໍ່ມີໃຜມາລັກໄດ້ດອກ; ລູກກໍາ ກັບປ່າງໃກ້ຊິດ".

–" ສຳພໍມື້ຊືນ ບັກເຖິກນ້ອຍເຮົາຈຶ່ງບໍ່ກິນເຂົ້ານາ ລຸງແທ່ງຫມົດໄປຕັ້ງເຖິງໄຮ່ນັ້" ແມ່ເວົ້າເຍີ້ບ.

ເມື່ອຖືກນໍາຫັນ ບຸນລຸນຫົວແຣະແຣະ ແລ້ວເວົ້າສຽງ ຄ່ອຍລົງ.

–" ເທື່ອດຽວນັ້ນລະແມ່, ເພິ່ນຫນ້ອຍດຽວບັກເຖິກນ້ອຍ ຫລອຍລົງກິນເຂົ້ານາລຸງແທ່ງ ເລີຍສັ່ງສອນມັນຈົນໄມ້ແສ້ ຫັກຄາມື".

–" ຢ່າໄປຕີມັນໂພດຫລາຍ, ມັນເປັນສັດເດຍລະສານ ບໍ່ຮູ້ຫຍັງ ຄວາມຜິດຢູ່ນໍາຜູ້ລ້ຽງຜູ້ຮັກສາມັນພີ້. ນັ້ນລະສໍາ ພໍ່ອ້າຍຄໍາສູນບໍ່ໃຫ້ໄປນໍາ ຂອງວ່າຮັກສາຄວາຍກໍບໍ່ກຸ້ມ ປ່ອຍໃຫ້ມັນໄປກິນເຂົ້ານາຂະເຈົ້າ".

–" ຕໍ່ໄປ, ລູກລັບລອງບໍ່ເລີ້ນເລີ້ປະປ່ອຍໃຫ້ຄວາຍລົງ ກິນເຂົ້ານາອີກ ຊິກໍາກັບດີໆ ແມ່... ມື້ນັ້ນເປັນນໍາບັກຈ່ອຍ

ກັບບັກແຕ້ນ ຊວນໄປຍິງເຜິ້ງຢູ່ປ່າຫົວນາ. ເຜິ້ງຮັງບັກໃຫຍ່ແມ່, ພວກລູກພາກັນເອົາກັບຖຸບຍິງ ເບິງແມ່ມັນບິນເວີນຊອກຫາຜູ້ໄປກຸກກວນ ພວກລູກພາກັນຫມູບຢູ່ພຸ່ມໄມ້ເກືອບບໍ່ຫັນໃຈ ເຜິ້ງມັນເລີຍບໍ່ເຫັນ, ຄັນບໍ່ຊັ້ນແລ້ວຖືກມັນໄລ່ຕອດບໍ່ເຊົາງ່າຍໆ". ບຸນລຸນເວົ້າສຽງດັງຂຶ້ນເພາະດີ້ນເຕັ້ນໃນເລື່ອງການຍິງຮັງເຜິ້ງ.

–" ເຊົາເດີບາດນີ້ປ່າໄປກວນມັນອີກ ເຂົາວ່າມັນໄລ່ຮອດໄສຮອດຫັ້ນໃດ ຕາຍບ້ອນຖ້າມັນໄດ້ຕອດຫລາຍໂຕ".

–" ພວກລູກຍິງຕັ້ງຫລາຍໆເທື່ອຊິໃຫ້ຮັງມັນຕົກລົງແລ້ວເອົານ້ຳເຜິ້ງມາກິນ ແຕ່ກໍບໍ່ຕົກຈັກເທື່ອ, ເບິງແມ່ມັນຫຸ້ມເປັນຍຸບໆຖືກຍິງບາດໃດມັນພາກັນບິນເປັນວຸ້ນໆອ້ອມຮັງ ລາງໂຕບິນໄປໄກໆ ຄືຈັ່ງວ່າໄປລາດຕະເວນນີ້ແຫລະແມ່".

–" ມັນຮັກ ແລະ ຫວງແຫນຮັງຂອງມັນປານຊີວິດຈິດໃຈ ແລະພ້ອມທີ່ຈະສະຫລະຊີວິດເພື່ອປ້ອງກັນ. ຖ້າມັນເຫັນພວກລູກຈັ່ງໃດມັນກໍຫຸ້ມມາໃສ່ໂລດ, ມັນມີຄວາມສາມັກຄີກັນດີທີ່ສຸດ ມີການຈັດຕັ້ງທີ່ຄັກແນ່. ແມ່ວ່າຖ້າບ້ານເຮົາ ຫລື ປະເທດເຮົາມີຄວາມສາມັກຄີດັ່ງຫມູ່ເຜິ້ງແລ້ວ ເດັດຂາດບໍ່ມີສັດຕູຈະມາທຳລາຍມ້າງເພໄດ້, ໃຫ້

ໃຫ້ລູກເອົາແບບຢ່າງໂຕເຜິ້ງເດີ".

-" ກະຈັ່ງຊັ້ນລະແມ່ ລູກຈຶ່ງຢາກໄປນຳອ້າຍສູບຕໍ່ສູ້ກັບປະດິການ".

-" ມັນຫນ້າທີ່ໃຜລາວລູກເອີຍ. ປ່າງໂຕເຜິ້ງກໍມີການແບ່ງປັນຫນ້າທີ່ກັນ ແລະເຮັດວຽກຕາມຫນ້າທີ່ໃຜມັນ. ເຜິ້ງຮັງຫນຶ່ງມີປູ່ສາມຊະນິດຄື: ແມ່ໂປ່ຊຶ່ງມີພຽງຕົວດຽວມີຫນ້າທີ່ແຕ່ອອກໄຂ່, ເຜິ້ງໂຕແມ່ຫລືເອີ້ນກັນວ່າເຜິ້ງກຳມະກອນ ມີຫນ້າທີ່ໄປຊອກຫານ້ຳຫວານ ທັງເປັນທະຫານຮັກສາຮັງ ແລະ ເຮັດວຽກກຳມະກອນອື່ນໆ. ໄລ່ຕອດຄົນເກົ່າໆ ກໍແມ່ນເຜິ້ງໂຕແມ່ນີ້ແຫລະ...".

-" ແຫ້ວະແມ່! ລູກຄືດວ່າແມ່ນໂຕຜູ້ຊັ້ນດອກ".

-" ເຜິ້ງໂຕຜູ້ນັ້ນເປັນເຜິ້ງທີ່ຂີ້ຄ້ານຂີ້ໃບ້ຍ ບໍ່ເຮັດຫນ້າທີ່ປ້ອງກັນ, ບໍ່ເຮັດວຽກອອກແຮງງານ ມີແຕ່ບົວລະບັດແມ່ໂປ່ຕາຍກໍໄວກ່ອນຫມູ່. ເຜິ້ງໂຕຜູ້ນີ້ນັບຈຳນວນບໍ່ເຖິງພັນ, ສ່ວນເຜິ້ງໂຕແມ່ຫລືກຳມະກອນນັ້ນໃນຮັງຫນຶ່ງນັບຈຳນວນເຈັດຫາແປດຫມື່ນໂຕ. ເຜິ້ງກຳມະກອນເຮັດຫນ້າທີ່ຫລາຍຢ່າງຄື: ຫານ້ຳຫວານຕາມເກສອນດອກໄມ້ມາລ້ຽງລູກທີ່ຍັງເປັນດ້ວງປູ່, ເຮັດຫົວນ້ຳເຜິ້ງ ເຮັດຂີ້ເຜິ້ງ, ເຮັດຫນ້າທີ່ປ້ອງກັນ ເຮັດກະໂຕຮັງເຜິ້ງເອງ ແລະ ເຮັດທຸກສິ່ງ

ທຸກຢ່າງໃຫ້ຊີວິດພາຍໃນຮັງເຜິ້ງເດີນແນ່ນແລ່ນສະດວກ. ກົ້ນມັນມີໄລແຫລມຄືເຂັມ ແລະ ມີພິດ. ເວລາມັນຕອດນັ້ນ ມັນໃຊ້ໄລປຸ່ກົ້ນແຫງ ຖ້າບໍ່ມີໄລກໍຕອດບໍ່ເຈັບ. ເຜິ້ງກຳມະກອນນີ້ອາຍຸຍືນຮອດຫົກເດືອນຖ້າເປັນຍາມໜາວແຕ່ຍາມຮ້ອນມາກໍມີຊີວິດບໍ່ຮອດເດືອນຊ້ຳ ເຖິງວ່າມັນຈະເປັນໂຕແມ່ກໍບໍ່ອອກໄຂ່, ເປັນເຜິ້ງແມ່ໝັນໝິດ".

– " ຄັນຊັ້ນມັນອອກແມ່ແຜ່ລູກຈັ່ງໃດຣືແມ່?" ບຸນລຸນສ້ຖາມແມ່ດ້ວຍຄວາມສົນໃຈ.

– " ຄືແມ່ໄດ້ເວົ້າມາຫັ້ນລະ ເຜິ້ງແມ່ໂປ່ໂຕດຽວມີໜ້າທີ່ອອກໄຂ່, ແຕ່ລະມື້ມັນສາມາດໄຂ່ໄດ້ສອງພັນໜ່ວຍ. ໂດຍໄຂ່ໃສ່ຮູຕາມຮັງຮູລະໜ່ວຍ, ພາຍໃນສາມມື້ໄຂ່ຈະແຕກເປັນໂຕດ້ວງ, ລະຍະເປັນໂຕດ້ວງນີ້ແມ່ນເຜິ້ງກຳມະກອນເປັນ [illegible]ງະເບງ ເອົານ້ຳຫວານມາລ້ຽງ. ຈາກໂຕດ້ວງຂາວໆກໍກາຍເປັນເຜິ້ງບາງໂຕຂາວໆ ອ່ອນໆ ຈົນຮອດສິບຫ້າວັນກໍເປັນໂຕເຜິ້ງສົມບູນອອກຈາກຮູໄດ້, ແມ່ໂປ່ນີ້ອາຍຸຍືນຫລາຍ ຄືມີຊີວິດຢູ່ໄດ້ສາມຫາຫ້າປີ, ເລື້ອງອາຫານການກິນແມ່ນເຜິ້ງກຳມະກອນເປັນຜູ້ລຳລ້ຽງໃຫ້".

– "ອີຫລີວະແມ່?".

– "ແມ່ນແທ້ລູກ. ເພາະແມ່ໂປ່ອອກແມ່ແຜ່ລູກເກ່ງ, ດັ່ງນັ້ນເຖິງລະຍະໜຶ່ງ ຈຳນວນເຜິ້ງຈະທະວີຂຶ້ນຫລວງ

ຫລາຍເກີນຄວາມເຫມາະສົມ ດັ່ງນີ້ແມ່ໂປ່ຈຶ່ງຕັດສິນໃຈນຳ
ພາກຳມະກອນຈຳນວນຫນຶ່ງ ແຍກໄປເຮັດຮັງ ຫລືເຮັດບິ
ຄົນຢູ່ບ່ອນໃຫມ່. ສ່ວນຢູ່ຮັງເກົ່ານັ້ນ ເມື່ອຂາດແມ່ໂປ່ບັງດາ
ເຜິ້ງກຳມະກອນກໍຫາອາຫານພິເສດ ທີ່ເປັນຫົວນ້ຳຫວານ
ມາລຸບລ້ຽງ ດ້ວງຂາວໆ ຊຶ່ງເກີດມາຈາກໄຂ່ຈຳນວນຫນຶ່ງ
ເພື່ອໃຫ້ໃຫຍ່ກ້າຫນ້າບານມາເປັນແມ່ໂປ່. ແມ່ໂປ່ທີ່ຈະ
ອອກຈາກຮູໃນຮັງນັ້ນມີຫລາຍໂຕພ້ອມກັນ ແຕ່ຕາມກົດ
ເກນນັ້ນ ຮັງຫນຶ່ງຈະມີແມ່ໂປ່ໄດ້ພຽງໂຕດຽວ ດັ່ງນີ້ແມ່ໂປ່ໂຕ
ທີ່ອອກມາເບິ່ງໂລກກ່ອນຫມູ່ ຈະທຳລາຍດັບສູນ ໂຕອື່ນໆ
ຫມົດໃຫ້ເຫລືອແຕ່ໂຕດຽວ ຈາກນັ້ນແມ່ໂປ່ໃຫມ່ກໍເຮັດ
ຫນ້າທີ່ເປັນແກ່ນສານຫລືຫົວຫນ້າຢູ່ຮັງເກົ່ານີ້ຕໍ່ໄປ".

– "ລູກຊິເອົາໂຕຢ່າງເຜິ້ງ ໂຕທີ່ເປັນຜົວແມ່ໂປ່ຄືຊິສຳ
ບາຍບໍ່ໄດ້ເຮັດວຽກຫນັກ" ບຸນລຸນເວົ້າແບບຕ່ວຍພາໄລ.

– "ກໍໄດ້ ແຕ່ຊີວິດສັ້ນໄດ໋ລະ. ຕາຍໄວ ລູກມັກບໍ?".

– "ອຸ້ຍ! ບໍ່ມັກ. ລູກຊິເອົາແບບຢ່າງເຜິ້ງກຳມະກອນ
ດອກ".

– "ຕ້ອງຈັ່ງຊັ້ນຈຶ່ງຊິໄດ້ຕໍ່ສູ້ກັບພວກປະຕິການ. ຕອນ
ຍັງນ້ອຍນີ້ລູກກໍຕໍ່ສູ້ແບບຫນຶ່ງ ຄືເປັນຫູເປັນຕາຊ່ອຍອຳ
ນາດການປົກຄອງ ເຫັນຄົນແປກຫນ້າຫລືເຫັນພວກປະ

ຕີການມາເຄື່ອນໄຫວໃນເຂດບ້ານເຮົາ ກໍຕ້ອງແຈ້ງຕໍ່ເຈົ້າໜ້າທີ່ຮັກສາຄວາມສະຫງົບ, ໂດຍສະເພາະເວລາລູກໄປລ້ຽງຄວາຍຕາມທົ່ງນາ ຕາມປ່າ ຖ້າເຫັນຄົນແປກໜ້າທ່າທາງບໍ່ໄວ້ໃຈກໍຕ້ອງແຈ້ງກອງຫລອນ. ລູກບໍ່ຈຳເປັນໄປຈັບອາວຸດປາບເຂົາເທື່ອວອກ, ຕ້ອງແຈ້ງໃຫ້ຂັ້ນເທິງຮູ້ກ່ອນ. ເອີ້ລະ... ສວາຍເຕີບແລ້ວໃຫ້ລູກເອົາເຂົ້າໄປສົ່ງພໍ່ປູ່ນາ ແລະ ກຳກັບເບິ່ງຄວາຍ. ແມ່ຄືຊິບໍ່ໄດ້ໄປເພາະຖືຄືງໄຂ້. ສ່ວນອ້າຍເຈົ້າກໍໄປເຮັດໜ້າທີ່ປ້ອງກັນຄວາມສະຫງົບ ເພາະຂ່າວວ່າມີປະຕິການມາເຄື່ອນໄຫວຢູ່ຂົງເຂດນີ້.

ຟັງແມ່ເລົ່າເລື່ອງໂດເພິ້ງແລ້ວ ບຸນລຸນເຊົາເຮັດໜ້າງໍທ່າທາງຂະມັງຂະມໍ ແລ້ວຕໍ່ມາກໍພາຍເອົາຖົງເຂົ້າພ້ອມກັບປາງກັບຖຸນຍ່າງຂ້າມທົ່ງ ເບັດໜ້າໃສ່ຖຽງທີ່ເຫັນພຽງນ້ອຍໆ ທ່າມກາງປ່າໄມ້ຂຽວອຸ່ມທຸ່ມຢູ່ຟາກທົ່ງພຸ້ນ. ນ້ອງນ້ອຍຄຶດຊັງປະຕິການບໍ່ເລີກບໍ່ແລ້ວ ທັງນີ້ກໍເພາະ ເມື່ອຄາວຢູ່ລະບອບເກົ່າຕອນທີ່ເອື້ອຍຄຳສອນຍັງບໍ່ທັນເອົາຜົວ ມີທະຫານປະຕິການມາຫລົ້ນນຳເອື້ອຍສະເໝີໆ. ເທື່ອໜຶ່ງເຂົາເມົາເຫລົ້າແລ້ວຍິງປືນໃສ່ໝາກພ້າວ ເບິ່ງມັນຫລຸດລົງມາເປັນແຊງ ທັງໜ່ວຍອ່ອນ

ຫນ່ວຍແກ່ ເດຍລະດາດຢູ່ເດີນບ້ານ ອັນນີ້ກໍຍັງບໍ່ເຈັບໃຈ ທໍ່ອີກເທືອຫນຶ່ງ ມີທະຫານປະຕິການສານສີດິນມາຫລິ້ນ ແລ້ວພະນັນກັນວ່າໃຜຈະຍິງປືນແມ່ນກ່ວາກັນ ເປົ້າຫມາຍ ກໍຄືໄກ່ໂຕຫນຶ່ງ ຊຶ່ງກຳລັງຫາກິນຢູ່ແຄມທົ່ງນາຕີນບ້ານ. ສຽງໂປ້ງໆດັງຂຶ້ນສອງບາດ. ຄາວຫນຶ່ງກໍມີຜູ້ແລ່ນໄປເອົາໄກ່ທີກຳລັງດິ້ນບັດໆຢູ່ນາ. ບຸນລຸນເຂົ້າໄປເບິ່ງໃກ້ໆແລ້ວ ກໍຮ້ອງໄຫ້ສະອຶກສະອື້ນ ເພາະມັນແມ່ນໄກ່ບັກໂອກທີລາວ ອິດສາຖະຫນອມລ້ຽງມາດ້ວຍຄວາມຮັກແພງ. ບັກໂອກ ໃຈຂາດຕາຍ ຕໍ່ ຫນ້າ ຕໍ່ ຕາ. ນັບແຕ່ນັ້ນມາຄວາມຄຽດຊັງ ທະ ຫານ ປະ ຕິ ການ ກໍ ຝັງ ເລິກ ຢູ່ ໃນຫົວໃຈຂອງບຸນລຸນບໍ່ ຫລົງລືມໄດ້ຈົນຮອດດຽວນີ້.

ຫນຶ່ງຊົ່ວໂມງຜ່ານໄປ ບຸນລຸນກໍໄປຮອດຖຽງນາ ຫ້ອຍ ຖົງເຂົ້າໄວ້ກັບເສົາຖຽງ ແລ້ວຮ້ອງບອກພໍ່ທີ່ພວມໄຖນາຢູ່. ພໍ່ໄດ້ອອກຈາກບ້ານມາແຕ່ເຊົ້າ ເພື່ອໄຖນາໃຫ້ໄດ້ຫລາຍໆ ກ່ອນທີ່ແດດຈະກ້າຮ້ອນຮົນຈົນຊິທົນບໍ່ໄດ້. ບຸນລຸນໄລ່ຕ້ອນ ເອົາຄວາຍຊຸມຫນຶ່ງທີ່ກິນເຟືອງຢູ່ແຄມຈູມປວກຂ້າງ ຖຽງ ແລ້ວມຸ່ງສູ່ປ່າຫົວນາຊຶ່ງບາງບ່ອນເປັນເດີ່ນຫຍ້າດົກ ຫນາ ຂຽວງາມ. ນ້ອງນ້ອຍມີຄວາຍຢູ່ໃນຄວາມຮັບຜິດຊອບເຖິງ ສີໂຕ ບັກເຖິກນ້ອຍກໍໂຮມຢູ່ໃນຈຳນວນນີ້, ມັນເຫັນບຸນລຸນ

ແລ້ວກໍພະຍາຍາມຫລີກຫ່າງເພາະຈື່ໄດ້ເມື່ອສາມມື້ກ່ອນ ຖືກຕີດ້ວຍໄມ້ແສ້ ຍັງເຈັບຢູ່ບໍ່ເຊົາ. ຄວາຍໂຕທີ່ຫ້າເປັນຄວາຍດ່ອນເຖົ້າເຂົາງອມ ຊຶ່ງພວມແກ່ໄຖຢູ່ ໂດຍແມ່ນພໍ່ຂອງບຸນລຸນຈັບຄັນໄຖ ແລະ ສົ່ງສຽງໄລ່ຄວາຍດັງ ຮຸຍ!ຮຸຍ! ຢູ່ກາງນາ.

ເມື່ອໄປຮອດ ບ່ອນມີຫຍ້າດົກໜາແລ້ວ ບຸນລຸນກໍດຶງຄວາຍໃຫ້ປຸດເລັມຫຍ້າ ໂຕເອງນັ່ງຢູ່ເທິງຫລັງຄວາຍແມ່ດຳນີ້ທີ່ກຳເຊືອກລະອອກ ຫັນມາຈັບກັບຖຸນແຫບ ຕາເບິ່ງໄປຍັງຕົ້ນໄມ້ຊອກຫານົກ ຫນູ ແລະ ສັດອື່ນໆ ພໍທີ່ຈະເປັນເປົ້າໝາຍຂອງລູກກັບຖຸນ. ບັນຍາກາດງຽບສະຫງົບ ລົມຍາມເຊົ້າພັດມາຄ່ອຍໆ ຈິດໃຈຂອງນ້ອງນ້ອຍລ່ອງລອຍໄປໄກ ໄປຫາໂຮງຮຽນ ທີ່ຈະໄຂສົກສຶກສາໃຫມ່ໃນຕົ້ນເດືອນຫນ້າ, ຄຶດຮອດຫມູ່ຮອດກອງ ຄຶດຫາຮັງເຜິ້ງ ແລະເລື່ອງການຈັດຕັ້ງຂອງເຜິ້ງ, ຄຶດຊັງປະຕິການທີ່ບີບບີ້ປະຊາຊົນຄົນບ້ານນອກ, ຊັງຄົນທີ່ຖືຫຸ່ນຫາວ່ານ້ອງນ້ອຍດັ່ງບຸນລຸນຈະບໍ່ສາມາດເຮັດຄວາມເສຍຫາຍ ຫລື ດັບສູນປະຕິການໄດ້. ເລື່ອງຂອງເຜິ້ງເປັນຈຸດສົນໃຈພິເສດ ຂອງນ້ອງນ້ອຍ, ແມ່ເຄີຍເລົ່າວ່າ ນ້ຳເຜິ້ງ ເປັນຢາບຳລຸງຮ່າງກາຍ ແລະ ເປັນຢາປົວພະຍາດໄດ້ຫລາຍຢ່າງ

-" ປ່າ ! ປ່າ !" ບຸນລຸນຮ້ອງໃສ່ຄວາຍນ້ອຍໂຕໜຶ່ງ ຊຶ່ງພວມຈະເຂົ້າໄປໃນປ່າ. ແຕ່ຄວາຍໂຕນັ້ນຍັງດື້ຍ່າງຕໍ່ໄປ ນ້ອງນ້ອຍຈຶ່ງຍິງກັບຖຸນໃສ່ຕົ້ນໄມ້ເບື້ອງໜ້າຂອງຄວາຍລູກ ກັບຖຸນຕຳຕົ້ນໄມ້ແລ້ວຕະເລີນໃສ່ພຸ່ມໄມ້ນ້ອຍ ເກີດ ສຽງ ດັງ ຄວາຍນ້ອຍໂຕນັ້ນຕື່ນແລ້ວຖຽກັບທັນໃດ.

ບຸນລຸນເບິ່ງຄວາຍຈົນເຖິງໃກ້ຊິທ່ຽງ ຈຶ່ງນຳເອົາມັນໄປກິນນ້ຳ ແລ້ວໂຕເອງກໍໄປກິນເຂົ້ານຳພໍ່ປູ່ຖຽງ. ອາຫານທີ່ແມ່ຈັດການຫໍ່ໃສ່ຖົງໃຫ້ກໍມີແຈ່ວປາແດກ ປີ້ງກົບ ໝາກຖົ່ວໝາກເຂືອ ແລະ ຫໍ່ເກືອຊຶ່ງບຸນລຸນກະວ່າຈິເອົາຈ້ຳກັບໝາກຂາມນ້ອຍ.

ຕອນບ່າຍມາ ຫລັງຈາກທີ່ລ່າມເຊືອກຄວາຍແມ່ດຳ ແລະ ບັກເຖິກນ້ອຍໄວ້ແລ້ວ ບຸນລຸນກໍເຂົ້າປ່າມຸ່ງສູ່ຮັງເຜິ້ງ. ສ່ວນຄວາຍນ້ອຍອີກສອງໂຕ ປ່ອຍໃຫ້ເລັມຫຍ້າຢ່າງເສລີ. ເມື່ອຄວາຍແມ່ດຳຊຶ່ງເປັນແມ່ໄປບໍ່ໄປໃສໄດ້, ຄວາຍນ້ອຍສອງໂຕນີ້ກໍບໍ່ໜີໄປຫ່າງໄກ. ບຸນລຸນຍ່າງລັດປ່າໄປປະມານ ໑໕ ນາທີກໍຮອດຕົ້ນໄມ້ທີ່ເຜິ້ງເຮັດຮັງໃສ່. ເປັນຕົ້ນໄຮທີ່ສູງ ແລະ ມີງ່າຫລາຍເປັນຮົ່ມກິນບໍລິເວນກວ້າງ. ແມ່ເຜິ້ງໄຕ່ຕອມຕາມຮັງເປັນຍຸບໆ, ບາງຜ່ອງບິນອອກບິນເຂົ້າ, ອາການບິນເຂົ້າຫລືອອກຮັງນັ້ນ, ເບິ່ງຄ້າຍໆກັບເຮືອບິນ

ເຮລີກ້ອບແຕ້ຂຶ້ນຫລືລົງເດີນ. ບຸນລຸນຄ່ອຍໆລອດໄປຕາມຫວ່າງຕົ້ນໄມ້ນ້ອຍ ແລ້ວໄປນັ່ງລີ້ຢູ່ພຸ່ມໄມ້ ພຸ່ມຫນຶ່ງ ທີ່ໃຊ້ເປັນບ່ອນບັງໄດ້ດີ. ນ້ອງນ້ອຍເຝົ້າສັງເກດເບິ່ງ ການເຄື່ອນໄຫວຂອງແມ່ເຜິ້ງ ດ້ວຍຄວາມສົນໃຈ ບໍ່ປາກບໍ່ຕີງ. ຍ້ອນຄວາມຢາກເຫັນປະຕິກິລິຍາອີກ, ນ້ອງນ້ອຍຈຶ່ງຍິງກັບຖຸນໃສ່, ເຜິ້ງຈຳນວນຫນຶ່ງແຕກວົບບິນສົນສວາບອ້ອມຮັງອີກຈຳນວນຫນຶ່ງບິນເວີນໄປໄກສົມຄວນເພື່ອຊອກຫາສັດຕູ. ເມື່ອບໍ່ເຫັນມີອັນໃດເຄື່ອນໄຫວ ມັນກໍກັບຄືນຮັງ, ເວລາຜ່ານໄປສົມຄວນ ສະພາບຢູ່ຮັງເຜິ້ງກໍກັບຄືນເປັນປົກກະຕິ. ບຸນລຸນນັ່ງມິດຢູ່ຄາວຫນຶ່ງກໍຍິງອີກ, ຄວາມວຸ້ນວາຍອ້ອມຮັງເຜິ້ງເປັນໄປຫລາຍກ່ວາເກົ່າ, ໄດ້ຍິນສຽງດັ່ງເປັນຮື່ງໆ, ເຜິ້ງຫລາຍໆໂຕບິນອອກຫ່າງຮັງເປັນສົນສວາບ ວຽນໄປມາເພື່ອເລາະຫລຽວຫາສັດຕູ. ໂຕຫນຶ່ງບິນຊື່ມາຍັງພຸ່ມໄມ້ທີ່ບຸນລຸນລີ້ຢູ່, ນ້ອງນ້ອຍບໍ່ເຫນັງບໍ່ຕີງ ແລະ ເກືອບບໍ່ຫັນໃຈ. ເຜິ້ງໂຕນັ້ນບິນເລີຍໄປທາງອື່ນ. ເຜິ້ງທີ່ບິນລາດຕະເວນເຫລົ່ານີ້ລ້ວນແຕ່ເປັນເຜິ້ງກຳມະກອນ, ມັນຫວງເຮືອນຮັງຂອງມັນ ແລະພ້ອມທີ່ຈະເສຍສະຫລະຊີວິດຕໍ່ສູ້ຕ້ານສັດຕູ, ມັນໂຕນ້ອຍ ເຫື່ອແຮງບໍ່ຫລາຍແຕ່ອາໄສຄວາມສາມັກຄີເປັນນ້ຳຫນຶ່ງໃຈດຽວ ແລະ ຄວາມເດັດຂາດ ຕໍ່ຜູ້ທີ່ມາລົບ

ກວນເຮືອນຮັງ, ດັ່ງນີ້ມັນຈຶ່ງເປັນທີ່ຢ້ານກົວຂອງຜູ້ຮຸກຮານ ຜູ້ຫວັງທຳລາຍມ້າງເພຮັງຂອງມັນ.

ນ້ອງນ້ອຍ ເຝົ້າເບິ່ງ ການ ເຄື່ອນໄຫວ ຂອງ ເຜິ້ງ ກຳມະກອນດ້ວຍໃຈຈົດຈໍ່ ຈົນເວລາຜ່ານໄປເຫິງເຕີບ, ໃນທີ່ສຸດກໍຕັດສິນໃຈອອກຈາກບ່ອນນີ້ໄປ ເພາະຄຶດເປັນຫ່ວງຄວາຍ ຢ້ານເຊືອກຂາດ ແລ້ວຫນີເຂົ້າປ່າຫາບໍ່ເຫັນ ທັງຢ້ານມັນລົງໄປກິນເຂົ້າຕາມໄຮ່ນາ ທີ່ໄດ້ປັກດຳມາແລ້ວ. ຂະນະທີ່ຫລຽວຫນ້າຫລຽວຫລັງ ລະວັງແມ່ເຜິ້ງ ກ່ອນທີ່ຈະໂປ້ລຸກຂຶ້ນນັ້ນ ສາຍຕາຂອງນ້ອງນ້ອຍ ກໍໄປພົບເຫັນ ຄົນແປກຫນ້າ ສີຫ້າຄົນ ໂປໂລອອກມາຈາກປ່າຕຶບ, ເຂົາຈູງຄວາຍນ້ອຍໂຕຫນຶ່ງມານ່າ. ນ້ອງນ້ອຍ ຫມູບຕ່າລົງອີກ ສາຍຕາຈັບທີ່ຄົນກຸ່ມນີ້ບໍ່ວາງ.

– "ພວກຂີ້ລັກ, ເຂົາກຳລັງລັກຄວາຍ" ນ້ອງນ້ອຍຄຶດ.

ຫ້າຄົນນັ້ນຍ່າງຫວິດປ່າຕຶບ ແລ້ວກໍວາງຕົວໃຫ້ສະບາຍ ແລະ ພາກັນຍ່າງລຽບໄປທາງດ້ານຕາເວັນຕົກ. ແຕ່ລະຄົນນຸ່ງເຄື່ອງປະຊາຊົນທຳມະດາ ຕ່າງແຕ່ຜູ້ອອກຫນ້າໃສ່ເກີບທະຫານປະຕິການ.

"ພວກປະຕິການຫາລັກຄວາຍໄປຂ້າກິນຕີ້!" ນ້ອງນ້ອຍເວົ້າກັບໂຕເອງໃນໃຈ.

ສາຍຕານ້ອງນ້ອຍໄປຢຸດຢູ່ຄົນທີ່ສີ່ ເພາະຮູ້ສຶກວ່າເຄີຍເຫັນໜ້າມາກ່ອນ, ເບິ່ງໂສ້ງເບິ່ງເສື້ອ. ເບິ່ງຜົມກູດທີ່ໜ້າຜາກ, ໃນທີ່ສຸດກໍຄຶດອອກ ແລະ ຈື່ໄດ້ວ່າແມ່ນທະຫານປະຕິການຄົນໜຶ່ງ ທີ່ເຄີຍມາກັບໝູ່ ໃນຄາວທີ່ມີການເມົາເຫລົ້າ ແລ້ວຍິງໝາກພ້າວຫລົ່ນລົງມາເປັນແຊງເມື່ອສອງປີກ່ອນ.

– "ພວກທະຫານປະຕິການກຳລັງລັກຄວາຍ ຂອງປະຊາຊົນບ້ານນາແປ. ສອງອາທິດກ່ອນ ກໍລັກໄປສອງໂຕ. ແມ່ນພວກມັນນີ້ລະ" ນ້ອງນ້ອຍຫືນຢູ່ວຶດໆໃນໃຈ.

ທັນໃດນັ້ນ, ເຫດການຕື່ນເຕັ້ນກໍເກີດຂຶ້ນ, ປະຕິການທັງຫ້າແລ່ນແຕກຊະນະໂນ ປະປ່ອຍຄວາຍໄວ້ລຳພັງ ນ້ອງນ້ອຍຕື່ນ ແລະ ບໍ່ເຂົ້າໃຈ ແຕ່ວິນາທີຕໍ່ມາກໍຮູ້ແຈ້ງ ເພາະເຫັນໝູ່ເຜິ້ງບິນໄປແຖວນັ້ນ ແລະ ບຸ່ມໃສ່ພວກປະຕິການ. ມັນເປັນພາບທີ່ໜ້າຫົວຂວັນທີ່ສຸດ ເພາະແຕ່ລະຄົນໃຊ້ມືປັດປ່າຍຕາມໃບໜ້າຕາມຜົມ, ອາການບົ່ງບອກຄວາມເຈັບປວດ, ທັງເຕັ້ນເຕາະເຕັ້ນດ່ອງ ຂະປ່ອງຂະແປ່ງເຂົ້າປ່າເອົາຕົວລອດເປັນຍອດດີ ໄປຄົນລະທີ່ລະທາງ, ພໍຄົນພວກນີ້ລັບຫາຍເຂົ້າໄປໃນປ່າ ຄວາຍນ້ອຍໂຕນັ້ນຄະເນອາຍຸປະມານປີປາຍກໍມີອາການຮ້ອນຮົນ ຖອຍໜ້າຖອຍ

ຫລັງແລ້ວກໍແລ່ນເຂົ້າປ່າໄປອີກ, ບິນສຽງບຸປ່າດັງຄືນໆ! ຕິດຕາມດ້ວຍໂຕເຜີ້ງຈຳນວນຫນຶ່ງ.

ບຸນລຸນມາສະເດືອກຮູ້ວ່າ ຕອນທີ່ຮັງຖືກຍິງນັ້ນ ເຜີ້ງຊອກຫາຜູ້ລົບກວນບໍ່ເຫັນ ຕໍ່ມາມີຜູ້ໄປເດືອນໄຫວຢູ່ໃກ້ບໍລິເວນນີ້ ເຜີ້ງຈຶ່ງເຂົ້າໃຈວ່າ ເປັນພວກທີ່ກວນຮັງຂອງຕົນເລີຍໃຊ້ຜະເດັດການໄລ່ລົງໂທດສັດຕູຢ່າງເຈັບແສບ. ນ້ອງນ້ອຍຫົວຢູ່ຜູ້ດຽວໃນໃຈ ແລະ ຄິດວ່າຈະເຮັດວິທີໃດ ເພື່ອໃຫ້ໄປຫວີດບໍລິເວນນີ້ໂດຍປອດໄພບໍ່ຖືກເຜີ້ງໄລ່ ນ້ອງນ້ອຍນັ່ງສັງເກດອີກຕັ້ງດົນ, ເຫັນວ່າເຜີ້ງກຳມະກອນເຊົາບິນລາດຕະເວນ ຈຶ່ງຄ່ອຍໆຄານອອກໄປໄກສົມຄວນ ແລ້ວກໍລຸກຍ່າງຜ່ານປ່າມຸ່ງຫນ້າສູ່ບ່ອນລ້ຽງຄວາຍ.

ເຫດການທີ່ເກີດຂຶ້ນທັງຫມົດ ບຸນລຸນນຳໄປເລົ່າສູ່ພໍ່ຟັງຢ່າງລະອຽດ. ຜູ້ພໍ່ຮີບຟ້າວກັບເມືອບ້ານແລ້ວແຈ້ງຕໍ່ປະທານບ້ານ ແລະ ກອງຫລອນ. ບໍ່ດົນກໍມີການຈັດສົ່ງກອງຫລອນໄປຕິດຕາມ, ພວກຫນຶ່ງໄປລັດຕາມເສັ້ນທາງທີ່ສົງໄສພວກເຂົາຈະຜ່ານ, ພວກຫນຶ່ງແມ່ນຄຳສູນອ້າຍຂອງບຸນລຸນເປັນຫົວຫນ້າ ພາກັນໄປຈອບຢູ່ໃກ້ບໍລິເວນຕົ້ນໄຮທີ່ມີຮັງເຜີ້ງ ເພາະເຊື່ອວ່າ ເມື່ອເຂົາແຕກກັບຫລົງກັນຢູ່ກາງປ່າແລ້ວ ເຂົາກໍຕ້ອງຫວນຄືນມາຈຸດເກົ່າອີກ ເພື່ອ

ຫວັງພົບພໍ້ກັນໃຫມ່,   ການຄາດຄະເນຂອງກອງຫລອນ
ໂດຍມີຄຳສູນເປັນຫົວຫນ້າແມ່ນບໍ່ຜິດ. ຄະນະຂອງຄຳສູນ
ແມ່ນຄ່ອຍໆຈອບຄ່ອຍປ່ອງເຂົ້າໄປ  ໃຊ້ເວລາຕັ້ງດົນກ່ວາ
ຈະຮອດບໍລິເວນດັງກ່າວ. ຄວາມ ພຽນ ພະ ຍາ ຍາມ ຂອງ
ກອງຫລອນໃນການເຄື່ອນໄຫວດ້ວຍຄວາມເຊື່ອຫມັ້ນ ໃນທີ່
ສຸດກໍສິນຫວັງ. ປະຕິການທັງຫ້າພາກັນບັ້ງບັງຢູ່ພຸ່ມໄມ້
ປ້ານ ເຜິ້ງ ເຫັນ, ເຂົາເອົາໄລເຜິ້ງອອກໃຫ້ກັບປູ່ປ່າງມິດມື.
ໂສ້ງເສື້ອດຶກແກ້ອອກປະໄວ້, ບາງຄົນນຸ່ງແຕ່ສະລິບ ບາງ
ຄົນນຸ່ງໂສ້ງຂາສັ້ນ, ບາງຜ່ອງນອນກັບພື້ນ, ບາງຜ່ອງອີງ
ເຫັ້ງໄສ່ຕົ້ນໄມ້, ອາວຸດກໍບໍ່ຄືດກັບໂຕເລີຍ, ຄົງວາງໄວ້ກັບ
ກອງໂສ້ງເສື້ອ

ຄະນະກອງຫລອນພິຈາລະນາ  ວາງແຜນປູ່ດົນເຕີບ.
ສັງເກດເບິ່ງສະພາບການແລ້ວກໍຕັດສິນໃຈ.

– "ປຸດ! ປ່າເຫນັງ, ເຜິ້ງຊີໄລ່ ແລະ ພວກເຮົາກໍຊີບິງ!
ພວກເຮົາລ້ອມໄວ້ຫມົດແລ້ວ, ບົກມື ແລະ ລຸກຂຶ້ນຄ່ອຍໆ
ປ່າຈັບອາວຸດເດັດຂາດ! ປ່າຕໍ່ສູ້! ພວກເຮົາລ້ອມໄວ້ຫມົດ
ແລ້ວ, ຫນີບໍ່ລອດດອກ! "ຄຳສູນອອກຄຳສັ່ງສຽງດັງກ້ອງ
ປ່າ.

ປະຕິການທັງຫ້າປະຕິບັດຕາມ ຄ່ອຍໆລຸກຂຶ້ນ ມືປາ

ສະຈາກອາວຸດກໍບິກຂຶ້ນບ່ຳ. ຄຳສູນເວົ້າຕໍ່:

– "ຢ່າໜີ! ຢ່າຕໍ່ສູ້ແລ້ວຊິມີຊີວິດຢູ່ຕໍ່ໄປ".

ທັງຫ້າປ່ອຍໃຫ້ຈັບໂດຍດີ. ສີໜ້າລ່າເຫລືອງດ້ວຍຄວາມຢ້ານຕາຍ ສາຍຕາຫລຽວລົງພື້ນ. ພວກເຂົາຖືກມັດມື ແລະ ຖືກນຳຕົວໄປສູ່ບ້ານນາແປໃນຕອນໃກ້ຄ່ຳຂອງມື້ນັ້ນ.

ຂ່າວການຈັບພວກປະຕິການແຜ່ໄປທົ່ວບ້ານນາແປ ແຕ່ເໜືອຮອດໃຕ້. ປະຊາຊົນພາກັນຕື່ນເຕັ້ນດີໃຈຫາຍກັງວົນເພາະບໍ່ສະບາຍໃຈມາຫລາຍວັນແລ້ວ ຍ້ອນວ່າຄວາຍຖືກລັກ ແລະ ຂ່າວວ່າພວກປະຕິການມາເຄື່ອນໄຫວໃນຂົງເຂດນີ້. ທຸກຄົນຮູ້ສຶກໂລ່ງອົກໂລ່ງໃຈ ຄືດັ່ງຮູ້ຂ່າວເສືອກັດຄວາຍແລ້ວຕໍ່ມາເສືອຖືກຍິງຕາຍ. ບັນຍາກາດໃນບ້ານຟົດຟື້ນປານປາງບຸນນ້ອຍ. ບຸກຄົນທີ່ປະຊາຊົນເວົ້າຊື່ຕິດສົບຕິດປາກ ດ້ວຍຄວາມຍົກຍ້ອງສັນລະເສີນກໍຄືນ້ອງນ້ອຍບຸນລຸນ ຜູ້ເປັນຫູເປັນຕາໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນຈຶ່ງສາມາດນຳຈັບປະຕິການທັງຫ້າໄດ້. ຫລາຍຄົນໂດຍສະເພາະເຈົ້າໜ້າທີ່ທ້ອງຖິ່ນໄດ້ໄປຍັງເຮືອນບຸນລຸນ ເພື່ອສະແດງຄວາມຍິນດີຊົມເຊີຍ ແລະ ສ້ຖາມຄອບຄົວນີ້ທີ່ໄດ້ປະກອບສ່ວນສຳຄັນ ໃນການຈັບພວກປະຕິການເຫລົ່ານີ້

ໄດ້. ໂດຍສະເພາະບຸນລຸນແມ່ນຖືກຖາມຫລາຍກ່ອນເພິນ ກ່ຽວກັບການໄປພໍ້ພວກປະຕິການຢູ່ໃນປ່າ ແລະ ຖືກສັນລະເສີນຢ່າງອົບອຸ່ນ.

" ເດັກນ້ອຍບ້ານເຮົາທັງຫມົດ ໃຫ້ມັນໄດ້ຄືບຸນລຸນນີ້ ແມ່ນດີທີ່ສຸດ, ມີສະຕິຮັບຜິດຊອບຕໍ່ຄວາມປອດໄພຂອງບ້ານເມືອງ, ເປັນຫູເປັນຕາໃຫ້ອຳນາດການປົກຄອງສົມເປັນເດັກນ້ອຍປະຕິວັດ. ຂໍສັນລະເສີນ !" ສຽງປະທານບ້ານເວົ້າ, ພໍສຸດຄຳສຽງໄຊໂຍໂຫ່ຮ້ອງກໍດັງຂຶ້ນຟົດຟື້ນ.

# ລ່ອງໃຫ້ຖືກທາງ

ໂດຍ: ອຸທິນ ບຸນຍາວົງ

ລຸງຄົນນັ້ນ ຂີ່ລົດຖີບຂຶ້ນມາຕາມຖະໜົນ ເສດ ຖາ ທິ ລາດອັນເປັນຖະໜົນເສັ້ນລ່ອງໃນນະຄອນວຽງຈັນ, ເມື່ອມາຮອດຕໍ່ໜ້າວັດອົງຕື້, ຂ້ອຍເລີຍຮ້ອງບອກໃຫ້ຢຸດເພາະເປັນເສັ້ນທາງທີ່ແລ່ນໄປໄດ້ທາງດຽວ.

– " ຖ້າຊິຂຶ້ນໄປກໍ່ຕ້ອງຈູງເອົາລຸງ !"

– " ຢ່າມາຫຍຸ້ງນັກນ້ອຍບໍ່ແມ່ນເລື່ອງຂອງມຶງ, ເປັນໜ້າທີ່ຕຳຫລວດຈໍລະຈອນພຸ້ນ !" ລາວເວົ້າຖາກໃສ່.

ຂ້ອຍບໍ່ປາກ ເພາະຮູ້ສຶກວ່າຕົນເອງບໍ່ມີວາດເວົ້າໃນການບອກຜູ້ໃຫຍ່. ຄຳເວົ້າຂອງຂ້ອຍອາດບໍ່ເໝາະສົມປານໃດທີ່ຕົນເອງເປັນເດັກນ້ອຍ ອາຍຸພຽງ ໑໖ ປີ ແຕ່ໄປບອກສອນຜູ້ໃຫຍ່ຊຶ່ງຄາດຄະເນວ່າອາຍຸປະມານ ໕໐ ປີນີ້ແຫລະ.

ລຸງຄົນນັ້ນຂີ່ລົດຕໍ່ໄປເສີຍ, ຂ້ອຍແນມນຳຫລັງລາວໄປ ແລະ ຄຶດວ່າຈະດັດແປງຕົນເອງໃຫ້ຊ່າງປາກຊ່າງເວົ້າ ໃນໂອກາດໜ້າ.

ຂ້ອຍຕັ້ງໃຈມາດົນແລ້ວ ທີ່ຈະຊ່ອຍອຳນາດການປົກຄອງກຳແພງນະຄອນວຽງຈັນ ເພື່ອເຮັດໃຫ້ການສັນຈອນໄປມາໃນເມືອງເປັນລະບຽບຮຽບຮ້ອຍຫລັງຈາກທີ່ສັບສົນວຸ້ນວາຍ, ບໍ່ມີການນັບຖືກົດຈໍລະຈອນຕອນຕັ້ງຕົ້ນລະບອບໃຫມ່ເພາະຂາດເຈົ້າໜ້າທີ່.

ຂ້ອຍສວຍໂອກາດບານພັກໂຮງຮຽນປີນີ້ເປັນຕຳຫຼວດຈໍລະຈອນສະໝັກຫລິ້ນ ແລ້ວໄປເລາະລຽບຢູ່ແຄມຖະໜົນເສັ້ນນີ້ດ້ວຍຄວາມສົນໃຈ. ມີຜູ້ຂີ່ລົດຖີບລົດຈັກ, ລົດສາມລໍ້, ລົດໂອໂຕທຸກຊະນິດແລ່ນໄປເກືອບຕະຫລອດເວລາ.

ຂະນະທີ່ລົດຫລາຍໆຄັນພາກັນແລ່ນລ່ອງລົງໄປນັ້ນກໍມີລົດອີກຄັນໜຶ່ງແລ່ນສວນຂຶ້ນມາ. ເປັນລົດຈັກຮົງດ້າຊຶ່ງຂັບຂີ່ໂດຍຜູ້ຊາຍໃນໄວໜຸ່ມເປັນບ່າວ, ຂ້ອຍຍົກມືຂຶ້ນບອກໃຫ້ລາວຢຸດ.

–" ອ້າຍໆ... ທາງນີ້ເພິ່ນບໍ່ໃຫ້ຂີ່ຂຶ້ນ ຈັກໜ່ອຍລົດຊິຕຳເຈົ້າໄດ. ຂ້ອຍຢ້ານເຈົ້າເຈັບຊັ້ນດອກ ".

–" ຂອບໃຈນ້ອງຊາຍ, ແຕ່ອ້າຍມີວຽກດ່ວນຢູ່ໃກ້ໆນີ້.

ບໍ່ປາກໄປທາງໂຄ້ງເພາະນ້ຳມັນແພງ ". ເວົ້າແລ້ວກໍແລ່ນຕໍ່ໄປຕາມເດີມ.

ພໍລົດຮົງດ້າຄັນນັ້ນແລ່ນຕໍ່ໄປບໍ່ທັນເຫິງ ກໍມີລົດຈັກອີກຄັນໜຶ່ງແລ່ນຂຶ້ນມາມີຜູ້ຂັບ ແລະ ມີຜູ້ຊ້ອນທ້າຍ, ຂ້ອຍບອກໃຫ້ປຸດອີກ.

– " ປຸດກ່ອນອ້າຍ, ຫວ່າງບໍ່ດົນມານີ້ມີລົດຕຳ ກັນ ຢູ່ທາງໜ້າພຸ້ນ ລົດໃຫຍ່ຕຳກັບລົດຈັກ ຄົນຂີ່ລົດຈັກເຈັບໜັກເຂົາວ່າລົດຈັກເປັນຝ່າຍຜິດ ເພາະແລ່ນຂຶ້ນມາຕາມເສັ້ນທາງນີ້ ". ຂ້ອຍບອກແບບຂີ້ຕົວະ.

– " ແທ້ວະ ! ຄັນຊັ້ນໂງຄືນເຮົາ " ຜູ້ຊ້ອນທ້າຍເວົ້າຂຶ້ນ ແລະ ຜູ້ຂັບກໍລ້ຽວລົດລົງໄປຕາມທາງລ່ອງອັນເປັນທາງແລ່ນຖືກຕາມກົດຈໍລະຈອນ.

ຂ້ອຍຄຶດຫົວຢູ່ໃນໃຈຜູ້ດຽວ. ແລະ ຮູ້ສຶກພໍໃຈທີ່ວຽກການສຳເລັດຜົນໄປແລ້ວຂັ້ນໜຶ່ງ ດ້ວຍການຕົວະ ແລະເຊື່ອວ່າຄົງບໍ່ເປັນພິດເປັນໄພເພາະຕົວະໃຫ້ເກີດຄວາມເປັນລະບຽບຮຽບຮ້ອຍ ຕົວະໃຫ້ມີຄວາມປອດໄພແກ່ຊີວິດຂອງຄົນໃນເມືອງຫລວງ ທີ່ຕ້ອງໃຊ້ຖະໜົນຫົນທາງເປັນປະຈຳທຸກມື້.

ຂ້ອຍມີກຳລັງໃຈຂຶ້ນ ແລະ ຢືນຢູ່ກ້ອງຮົ່ມໄມ້ແຄມຖະ

ຫນິນຕໍ່ໄປດ້ວຍຄວາມເຊື່ອຫມັ້ນ. ຮູ້ສຶກມ່ວນໄປວາດໃດ
ວາດຫນຶ່ງ, ແຕ່ເມື່ອຄຶດພໍ້ຕອນທີ່ຖືກລຸງຜູ້ຂີ່ລົດຖີບນັ້ນວ່າ
ໃຫ້ແລ້ວ ຫົວໃຈຄືຈັ່ງຕົກໄປຢູ່ຂະຫນ່ອງນີ້ແຫລະ, ຍັງຈື່ຢູ່
ບໍ່ລືມ ພາບຂອງລຸງນັ້ນຂີ່ລົດຖີບແລ່ນຂຶ້ນມາ ມັນເຂີນໆ
ວາດໃດວາດຫນຶ່ງ, ມັນບໍ່ຄືວ່າເປັນຖະຫນົນເສດຖາທິລາດ
ເພາະຖະຫນົນເສັ້ນນີ້ ສຳລັບແຕ່ແລ່ນລ່ອງໄປທໍ່ນັ້ນ ແລະ
ເປັນຄືແນວນີ້ມັນຫລາຍຟ້າຫລາຍປີແລ້ວ. ຂ້ອຍຄຶດແລ້ວ
ກໍອິດຫົວຢູ່ຜູ້ດຽວ ແລະ ບໍ່ຮູ້ສຶກຄຽດຊັງລາວຊ້ຳດອກເຖິງ
ຈະຖືກລາວເວົ້າໃສ່ກໍຕາມ.

ເວລາຜ່ານໄປດົນສົມຄວນ ກໍພົບເຫັນບັນຫາອີກ. ບາດ
ນີ້ແມ່ນລົດໂອໂຕແລ່ນມາຖືກທາງ ບໍ່ຜິດກົດຈໍລະຈອນແຕ່
ຫາກໄຕ້ໄຟກາງເວັນ. ຂ້ອຍຄຶດລັງເລໃຈຈະບອກໃຫ້ປຸດດີ
ຫລືບໍ່? ແຕ່ກ່ອນທີ່ລົດຈະແລ່ນຜ່ານໄປຂ້ອຍກໍຕັດສິນໃຈຍົກ
ມືບອກໃຫ້ປຸດ. ກວ່າລົດຈະຈອດໄດ້ກໍກາຍຂ້ອຍໄປເລັກ
ນ້ອຍ.

"ຊິໄປໃສນ້ອງຊາຍ ?" ຄົນຂັບລົດທ່າທາງສຸພາບຮ້ອງ
ຖາມຂ້ອຍ. ລາວຄົງເຂົ້າໃຈວ່າຂ້ອຍບອກປຸດເພື່ອຂໍຂີ່ໄປ
ນຳ.

–"ບໍ່ໄປໃສດອກ, ພຽງແຕ່ບອກອ້າຍວ່າລົດໄຕ້ໄຟມື້

ເວັນ".

- "ແທ້ວະ...? ຂອບໃຈຫລາຍໆເດີຊັ້ນ" ລາວບອກໄຟ ແລ້ວຫັນມາຍິ້ມໃສ່ຂ້ອຍແລ້ວກໍແລ່ນຕໍ່ໄປ.

ລົດຄັນນີ້ເປັນລາຍສຸດທ້າຍ, ຕໍ່ຈາກນັ້ນບໍ່ດົນຂ້ອຍກໍກັບເມືອເຮືອນ ດ້ວຍຄວາມ ພາກ ພູມ ໃຈ ທີ່ໄດ້ເຮັດ ວຽກ ສ່ວນລວມ.

ຕອນບ່າຍ ຂ້ອຍໄປສັງເກດເບິ່ງຢູ່ຖະຫນົນສາມແສນໄທ ຊຶ່ງເປັນຖະຫນົນສໍາລັບແລ່ນຂຶ້ນ ຄືແລ່ນ ຈາກ ສາມແຍກຄຸ້ມສີເມືອງຂຶ້ນໄປຮອດຫົວເມືອງ, ເສັ້ນນີ້ກໍມີຍານພາຫະນະແລ່ນ ຫລາຍສົມຄວນ, ບໍ່ຫນ້ອຍໄປກວ່າເສດຖາທິລາດ, ຕາມແຄມທາງມັກມີແຕ່ຕົ້ນສໍາສາແຜ່ກິ່ງກ້ານເປັນຮົ່ມເປັນສະບາຍ, ຍືນຢູ່ສີ່ແຍກໄຟແດງ ຄຸ້ມສີຫອມ ຂ້າງສະຫະກອນລັດ ແລ້ວ ຫລຽວ ລົງ ໄປ ທາງ ໂຮງ ພິມແຫ່ງຊາດ ຖະຫນົນເສັ້ນນີ້ ເປັນທີ່ສະຫວາດສະເຫວີຍ ໃຜເຄີຍຜ່ານມາແລ້ວຈະຈື່ຈໍາໄປອີກດົນ.

ນັ້ນ... ມາອີກແລ້ວ ຜູ້ລະເມີດກົດຈໍລະຈອນ, ເປັນຍິງອາຍຸປະມານ ໒໐ ປີ ສີຫນ້າບົ່ງບອກວ່າ ບໍ່ແມ່ນຄົນໃນເມືອງ. ລາວມາແຕ່ຖະຫນົນຂຸນບູລົມ ຈາກເບື້ອງໂຮງຮຽນເຈົ້າອະນຸ, ພໍມາຮອດສີ່ແຍກກໍລ້ຽວຊ້າຍ ເຂົ້າສູ່ຖະຫນົນ

ສາມແສນໄຫ ເພື່ອຈະລ່ອງລົງໄປຕາມສະບາຍບໍ່ຕ້ອງຖີບ ຍາກເພາະທາງເປັນຄ້ອຍ. ຂ້ອຍເຫັນບໍ່ປອດໄພ ຈຶ່ງກວັກມືໃຫ້ຢຸດ.

– "ບ້ານາແຕ່ໃສ ແລະ ຊິໄປວຽກທາງໃດນໍ້?".

– "ມາແຕ່ຫນອງປີງ ຊິໄປຊື້ເຄື່ອງໃນເມືອງນີ້ລະ"

– "ໃຫ້ບ້ານາແຕ່ໄກນໍ້ ບ້າບໍ່ຮູ້ກົດຈໍລະຈອນບໍ?".

– "ກົດອີຫຍັງກໍ?".

– "ກົດຈໍລະຈອນ ຄືວ່າຍາມໄຟແດງເຮົາຕ້ອງຢຸດ ໄຟຂຽວເຮົາຈຶ່ງໄປ. ຖະຫນົນລາງເສັ້ນເພີ່ນໃຫ້ແຕ່ຂີ່ລ່ອງ ລາງເສັ້ນໃຫ້ແຕ່ຂີ່ຂຶ້ນ. ຄືຖະຫນົນເສັ້ນນີ້ແຫລະເພີ່ນມີແຕ່ແລ່ນຂຶ້ນມາ ບໍ່ໃຫ້ລ່ອງ, ບ້າໄປທາງຜິດແລ້ວ"

– "ຊັ້ນບໍ".

– " ໃຫ້ບ້າຂີ່ໄປຕາມເສັ້ນທີ່ຜ່ານມາຫວ່າງກີ້ນີ້ແລ້ວຕໍ່ໄປອີກຈັກຫນ່ອຍ ຮອດຮ່ອມໂຮງຊີເນບົວສະຫວັນຈຶ່ງຂີ່ລົງ ຫລືວ່າໄປຮອດສີ່ແຍກໄຟແດງສີຫອມ ແລ້ວລ້ຽວລົງໄປກໍໄດ້, ອັນນັ້ນແມ່ນເສັ້ນລ່ອງ. ຂີ່ລົງໄປເສັ້ນນີ້ກໍບໍ່ມີໃຜຈັບດອກ ດຽວນີ້ແຕ່ປ້ານບ້າຖືກລົດຕຳເອົາ, ເຫັນບໍ່ ມີແຕ່ລົດແລ່ນຂຶ້ນມາ, ໄລ່ຫລັງກັນມາພຸ້ນ!"

– " ບໍ່ເອົາແລ້ວຊັ້ນ. ບ້າຊິໄປຕາມຫລານບອກພຸ້ນ

ແຫລະ ຂອບໃຈເດີ".

–" ເຈົ້າ ".

ຄືນຕໍ່ມາທີ່ຂ້ອຍຊ່ວຍເຫລືອແມ່ນຄືນຕາບອດ,ລາວສັກ ຄ້ອນເທົ້າຍ່າງໄປຊ້າໆ, ຂ້ອຍຖາມຈຸດໝາຍທີ່ລາວຈະໄປ, ລາວຊີ້ໄປຟາກທາງເບື້ອງນັ້ນ ຂ້ອຍຈຶ່ງຈູງແຂນພາຍ່າງ ຂ້າມໄປ. ລາວເວົ້າຂອບໃຈຫລາຍໆເທື່ອ ແລະ ອວຍພອນ ໃຫ້ຂ້ອຍຢູ່ດີມີແຮງ.

ຂ້ອຍສືບຕໍ່ຢືນຢູ່ແຄມຖະຫນົນສາມແສນໄທ ຈົນຮອດ ບ່າຍສີ່ໂມງ, ມີບົດຮຽນຫລາຍຢ່າງ, ເຫັນເຫດການຫລາຍ ອັນ, ພົບພໍ້ຄົນມາກຫນ້າຫລາຍຕາ, ແຕ່ລະຄົນບໍ່ຄືກັນ ມີຜູ້ຍິ້ມແຍ້ມແຈ່ມໃສ, ມີຜູ້ເຄັ່ງຂຶມ, ລາງຄົນເຮັດຫນ້າເສີຍ ລາງຄົນເຮັດກະລ້ອກກະແລ້ກ, ລາງຄົນຂັບໄປຊ້າໆ. ລາງ ຄົນຂັບໄປໄວໆປານວ່າຖືກສັດຕູໄລ່ຕິດຕາມມານຳຫລັງ.

ຕໍ່ມາມີ~~ສະຫາຍ~~ໜຸ່ມແດງ ຂີ່ລົດຖີບເກົ່າໆ ມາປຸດກົກຢູ່ຕໍ່ ຫນ້າ ຫນໍ່ເປັນຫມູ່ໂຮງຮຽນດຽວກັນກັບຂ້ອຍ.

–" ມາເຮັດຫຍັງຢູ່ນີ້ສິດ ?" ຫນໍ່ທັກທາຍ.

–" ເບິ່ງລົດຊີ້ງນີ້ລະ ".

–" ໂທ່... ປານບໍ່ເຄີຍເຫັນລົດເນາະ. ໄປ ໄປທ່ຽວນຳ ກັນ ".

-" ໄປທ່ຽວໃສ?".

-" ໄປສະໜາມກິລາ ເບິງເຕະບານ ".

-" ບໍ່, ເຮົາຊິໄປເຕະກະຕໍ້ປູ່ຄຸ້ມເຮົາ ".

-" ໄປກ່ອນເດີຊັ້ນ. ເຮົາຊິຂີ່ລົດລົງໄປນີ້ເລີຍຮອດໄວ".

-" ມັນທາງຂຶ້ນໄດເສັ້ນນີ້, ໄປຂີ່ລ່ອງຈັກຫນ່ອຍເຂົາ ຕຳຕາຍລ້ຽງບໍ່ໄດ້ຄ່າຫົວຊ້ຳ".

-" ບໍ່ຕ້ອງບ່າ, ບໍ່ໃຫ້ຕຳດອກ, ເຮົາມັນເກ່ງລະ ຂີ່ລົດມາແຕ່ຫົວທ່ໝາກຕ້ອງພຸ້ນ ".

-" ເຮົາກໍບໍ່ວ່າໃຕບໍ່ເກ່ງ,ແຕ່ຜູ້ເກ່ງກ່ວາໃຕກໍມີ ຫາກເຂົາໄປທາດຝຸ່ນແລ້ວ ".

-" ເຮົາກໍຊິບໍ່ໄປທາດຝຸ່ນງ່າຍດອກ. ເບິງນີ້ ! ຊິວາງມືລ່ອງລົງໄປເພາະພວມບໍ່ມີລົດມາ ".

ວ່າແລ້ວຫນໍ່ກໍຂີ່ລົງຄ້ອຍ ວາງມືໄປປ່າງທ້າທາຍທາງໃຈຄຶງຫຶກເຫີມປາກອວດເກ່ງໃສ່ຂ້ອຍເລີຍຫລຽວຄືນຫລັງມາຫາ ແຕ່ຟ້າເອີຍ! ລົດຖີບສະດຸດກ້ອນຫີນ ເຊລົງຮ່ອງຂ້າງທາງ ຫນໍ່ເດງຂາຊີ້ປ່າງງ່າງ ຕີລັງກາຫນຶ່ງຮອບແລ້ວລຸກນະງ່ອງນະແງ່ງ ປັດຂີ້ດິນອອກຈາກໂສ້ງເສື້ອ. ຈາກນັ້ນກໍດຶງເອົາລົດຂຶ້ນຈາກຮ່ອງເປັນບະກາງ ແປກງປູ່, ຂ້ອຍຟ້າວລົງໄປຊ່ວຍ ແລ້ວພາກັນດຶງເອົາລົດຂຶ້ນຈຶ່ງສຳ

ເລັດ, ເຂົາລົດບິດໄປທາງຂ້າງ, ຜາງຕີນກໍບ້ຽວ, ສ່ວນໝໍ່ແດງຄາງອ່ອຍໆ ເພາະເຈັບຫນ້າແຄ່ງແຕ່ບໍ່ມີຫຍັງສາຫັດ.

–" ເຮົາວ່າແລ້ວຕ່ວ່າ. ບໍ່ຜິດຄວາມ " ຂ້ອຍເວົ້າແກມຫົວ.

–" ແມ່ນຄວາມໂດ, ເກືອບຕາຍລ້າ, ໄດ້ໃຂ່ປູ່ຫນ້າແຄ່ງຫນຶ່ງຫນ່ວຍ, ເບັດເຂົາລົດຊ່ອຍແດ່ສ[illegible].

ພວກເຮົາພາກັນເບັດເຂົາລົດ ຈົນ ປູ່ ໃນ ສະ ພາບ ຊື່ດີ ແລ້ວກໍໄປຄົນລະທາງ. ຂ້ອຍຍ່າງເມືອບ້ານ, ຫລຽວຄືນຫລັງເຫັນ~~ສະຫາຍ~~ແດງຂີ່ລົດຖີບທີ່ຜາງຕີນບ້ຽວເປັນ ເຊ້ວເລ້ວເຊ້ວເລ້ວໄປ ເລີຍອົດຫົວໄປຕະຫລອດທາງ.

# ປູກຕົ້ນໄມ້ແມ່ນຮັກຊາດ

ໂດຍ: ອຸທິນ ບຸນຍາວົງ

ພວກນ້ອງນ້ອຍທຸກຄົນຕ່າງກໍອອນຊອນ ເມື່ອເຫັນຫມາກຕ້ອງເຕັມຕົ້ນຍາມເຂົ້າມາໃນສວນແຫ່ງນີ້. ຄັກແທ້ແມ່ນຍາມເຊົ້າທີ່ຝົນຕົກເຊົາໃຫມ່ໆ ຈະມີນ້ຳຄ້າງຢູ່ຕາມໃບ ແລະ ຕາມຫນ່ວຍຫມາກຕ້ອງ ເຫັນແລ້ວສົດຊື່ນເປັນຕາດີ. ມັນເປັນກົກຕ້ອງກົກດຽວໃນສວນ ມີຫນ່ວຍດົກຫນາແຕ່ຍັງຂຽວຢູ່, ທີ່ສຸກເຫລືອງກໍ່ມີພຽງສາມສີ່ຫນ່ວຍທໍ່ນັ້ນ. ຫລາຍໆງ່າກ່ອງລົງຈົນພວກນ້ອງນ້ອຍສາມາດຢື້ຈັບເຖິງໄດ້.

ພວກນ້ອງນ້ອຍຕົກລົງກັນວ່າ ຖ້າໃຫ້ມັນສຸກຫລາຍໆຫນ່ວຍພໍແບ່ງປັນກັນກ່ອນຈຶ່ງຈະຂຶ້ນປົດເອົາມາກິນ. ດຽວນີ້ ມີແຕ່ແນມຫມາກຕ້ອງ ດ້ວຍຄວາມພາກພູມໃຈ ແລະ

ບາງເທື່ອກໍພາກັນກືນບ້ວລາຍເອືອກງ.

ພວກນ້ອງນ້ອຍມາສວນ ນີ້ ເພື່ອ ອອກແຮງງານ ຂຸດຫນານປູກມັນຕົ້ນ ມັນດ້າງ ແລະ ເຜືອກໃນຍາມພັກໂຮງຮຽນ. ການຈັດຕັ້ງແບ່ງເປັນສອງຈຸ ແລ້ວໂຮມກັນເປັນຫນ່ວຍ. ມີສະມາຊິກທັງຫມົດ ໒໖ ຄົນນັບແຕ່ອາຍຸ ໗ ປີ ຫາ ໑໖ ປີ. ຫົວຫນ້າຫນ່ວຍຊື່ວ່າ ແພງບຸນ ອາຍຸ ໑໖ ປີ. ຫມົດບ້ານນີ້ມີສອງຈຸທໍ່ນັ້ນເພາະບໍ່ແມ່ນບ້ານໃຫຍ່ຕັ້ງຢູ່ອ້ອມແອ້ມນະຄອນວຽງຈັນ.

ສວນທີ່ພວກນ້ອງນ້ອຍມາອອກແຮງງານ ເປັນສວນຂອງສັກດີນາຄົນຫນຶ່ງ ຊຶ່ງໄດ້ໂຕນຫນີໄປແລ້ວ. ເປັນສວນທີ່ກ້ວາງຂວາງຄືລວງກ້ວາງແທກໄດ້ ໔໐໐ ແມັດ, ລວງຍາວ ໖໐໐ ແມັດ, ມີລວດຫນາມຫນາກຈັບລ້ອມຮອບແຕ່ມີເຄື່ອງປູກບໍ່ຫລວງຫລາຍ, ເຫັນມີຕົ້ນມີ້, ຕົ້ນມ່ວງ, ຕົ້ນລຳໄຍ ຢ່າງລະບໍ່ຮອດ ໖໐ ຕົ້ນ. ນອກນັ້ນກໍ່ມີຕົ້ນກ້ວຍປາຍຢູ່ທົ່ວ ແຕ່ບໍ່ງອກງາມເພາະມີຕົ້ນໄມ້ອື່ນໆ ແລະຫຍ້າຫຸ້ມເປັນປ່າອື້ຄື້.

ເມື່ອຕອນທີ່ມາຖາງໃຫມ່ໆ ນັ້ນມີນ້ອງນ້ອຍຫລາຍຄົນ, ຈົ່ມໄປຕ່າງໆ ນາໆ ເຊັ່ນ:

- "ຊິໄຫວບໍ່ເປັນປ່າຕຶບຈັ່ງຊີ້".

- "ຖາງໄປຫນ້າ ທາງຫລັງຊ້ຳປົງຂຶ້ນມາ".

- "ຖ້າເຈົ້າຂອງຄືນມາ ມັນຊິບໍ່ຈັດການເຮົາວ່າລະ!".

ຕໍ່ຄຳເວົ້າເຫລົ່ານີ້ ແພງບຸນ ຫົວຫນ້າຫນ່ວຍໄດ້ເວົ້າລົມໃຫ້ທຸກຄົນ ຄ່ອຍເຮັດໄປເທື່ອລະຫນ້ອຍສົມກັບເຫື່ອແຮງຂອງຕົນທີ່ເປັນເດັກນ້ອຍ. ຈຸຫນຶ່ງຖາງໃຫ້ໄດ້ເນື້ອທີ່ສຳລັບສອງຫລືສາມຫນານກໍພໍ, ທີ່ສຳຄັນແມ່ນການບົວລະບັດຮັກສາ ບໍ່ໃຫ້ມັນຮົກເຮື້ອເຕັມແຕ່ຫຍ້າ.

ກ່ຽວກັບເຈົ້າຂອງເດີມນັ້ນ ບໍ່ມີທາງວ່າຈະກັບຄືນມາດອກ ເພາະມັນເປັນພວກກົດຂີ່ຂູດຮີດ ກິນເລືອດເນື້ອເຫື່ອແຮງຂອງປະຊາຊົນ. ເຖິງຈະກັບຄືນມາກໍເຮັດຫຍັງໃສ່ໃຜບໍ່ໄດ້ ເພາະບ້ານນີ້ມີກອງຫລອນທີ່ເຂັ້ມແຂງ ສິ້ງຊອມເບິ່ງການເຄື່ອນໄຫວຂອງສັດຕູຢ່າງທັນການ. ອີກແນວຫນຶ່ງກໍຄືວ່າ ເຖິງການຈັດຕັ້ງຈະມີແຕ່ສະມາຊິກເປັນເດັກນ້ອຍ ແຕ່ເມື່ອມີຄວາມສາມັກຄີກັນ ມັນກໍເປັນກ້ອນກຳລັງອັນຫນຶ່ງທີ່ແຂງແຮງ ສາມາດຕ້ານທານສັດຕູທີ່ໃຫຍ່ກວ່າໃຫ້ປະລາໄຊລົງໄດ້. ຕົວຢ່າງມົດໂຕນ້ອຍໆ ສາມັກຄີກັນເຂົ້າກໍສາມາດເອົາຊະນະແມງໄມ້ໂຕໃຫຍ່ໆໄດ້ ແລະ ພາກັນລາກແກ່ໄປເຖິງເຮືອນຮັງສຳເລັດ.

ການມາອອກແຮງງານປູ່ສວນນີ້ ທຸກຄົນເອົາເຂົ້າມາ

ກິນນຳສຳລັບຕອນທ່ຽງ. ຜ່ານການຂຸດໜານຜັກ ຜູ້ໃດກໍ ກິນເຂົ້າແຊບ ທັງເວົ້າປອກກັນຢ່າງມ່ວນຊື່ນ ແລະ ໂສກັນ ວ່າຖ້າເປີດໂຮງຮຽນຈະສະເໜີ ໃຫ້ທາງໂຮງຮຽນ ມາເຮັດ ສວນເພີ່ມພູນຜະລິດຜົນຢູ່ບ່ອນດຽວກັນນີ້.

ນອກຈາກເອົາອາຫານການກິນໃສ່ຖົງມາແລ້ວ ແພງ ບຸນຍັງມີຢາແກ້ເຈັບທ້ອງ ຢາໃສ່ບາດພ້ອມດ້ວຍຜ້າພັນ ບາດມາພ້ອມ ເພື່ອກຽມໄວ້ຖ້າມີຜູ້ໃດຜູ້ໜຶ່ງເຈັບທ້ອງຫລື ໄດ້ຮັບບາດເຈັບ ຂະນະເຮັດວຽກ ກໍຈະໄດ້ແກ້ໄຂປິ່ນປົວຂັ້ນ ຕົ້ນທັນ. ແຕ່ມາຮອດປັດຈຸບັນນີ້ ຍັງບໍ່ມີໃຜໄດ້ຮັບອັນຕະ ລາຍເທື່ອ.

ຕອນທ່ຽງມື້ນີ້ ຫລັງຈາກກິນເຂົ້າສວາຍແລ້ວແພງບຸນ ຍ່າງເລາະລຽບໄປແຄມຮົ້ວບ່ອນທີ່ມີກົກໝາກຕ້ອງ, ຫລຽວ ເບິ່ງງ່ານັ້ນງ່ານີ້ ແລ້ວກໍພົບວ່າໝາກຕ້ອງສຸກຫນ່ວຍໜຶ່ງ ໄດ້ເສຍໄປ, ເບິ່ງຂົ້ວນຍັງໃຫມ່ໆ ສະແດງວ່າຖືກປິດເອົາໄປ ມື້ນີ້. ແພງບຸນຊອກຫາຕາມພື້ນດິນເພາະສົງໄສວ່າມັນ ອາດຫລົ່ນລົງ, ແຕ່ກໍບໍ່ເຫັນ, ແນມໄປປ່າຟາກຮົ້ວກໍເລີຍ ເຫັນເປືອກເປັນບາງສ່ວນຖິ້ມຢູ່ໃຕ້ພຸ່ມໄມ້, ສະແດງວ່າຜູ້ໃດ ຜູ້ຫນຶ່ງໃນຄະນະໄດ້ລັກກິນໝາກຕ້ອງແລ້ວ.

ແພງບຸນກັບຄືນໄປຫາຫມູ່ທີ່ນັ່ງພັກຜ່ອນຢູ່ແລ້ວແຈ້ງ

ວ່າ ມີຜູ້ໄປລັກກິນໝາກຕ້ອງຫນຶ່ງຫນ່ວຍ. ຫລາຍຄົນຈົ່ມເສຍດາຍ ແຕ່ທຸກຄົນກໍ່ປະຕິເສດວ່າບໍ່ໄດ້ລັກ, ແພງບຸນເວົ້າຂຶ້ນແບບໃຫ້ຜູ້ລັກສຳນຶກຜິດໂດຍສ້າງເລື່ອງຂີ້ຕົວະວ່າ:

– " ລັກກິນຫມາກຕ້ອງພຽງຫນ່ວຍດຽວ ພວກເຮົາພໍຍົກໂທດໃຫ້ຖ້າຮັບສາລະພາບ. ແຕ່ທີ່ເປັນຫ່ວງກໍຄືວ່າເຈົ້າຂອງເກົ່າເຄີຍສາບແຊ່ງໄວ້ວ່າ ຜູ້ໃດມາລັກກິນໝາກໄມ້ຢູ່ໃນສວນນີ້ໃຫ້ເຈັບທ້ອງຕາຍ. ຖ້າແມ່ນລັກກິນຫມາກຕ້ອງກໍໃຫ້ມັນຄາຢູ່ໃນທ້ອງ ແລ້ວແຕກຫນໍ່ເປັນຕົ້ນຄາຢູ່ທ້ອງ. ເພື່ອບໍ່ໃຫ້ເຈັບປວດຕາມຄຳສາບແຊ່ງ, ເຮົາຂໍຢາຍຢານີ້ໃຫ້ຫມົດທຸກຄົນ. ຜູ້ໃດໄດ້ລັກຂໍໃຫ້ກິນເພື່ອກັນໄວ້. ເຮົາປົວພະຍາດ ເອົາກັນໄວ້ດີກວ່າປ່ອຍໃຫ້ກັນຕາຍ ຍ້ອນໝາກຕ້ອງພຽງຫນ່ວຍດຽວ, ຢານີ້ຜູ້ລະເມັດ ".

ແພງບຸນເວົ້າແລ້ວ ກໍຢາຍຢາໃຫ້ສະມາຊິກຈົນຄົບ, ຈາກນັ້ນກໍພາກັນພັກຜ່ອນຕໍ່, ເວົ້າລົມກັນຄືດັ່ງບໍ່ມີຫຍັງເກີດຂຶ້ນ.

ເວລາຜ່ານໄປຮອດບ່າຍສອງໂມງ ອັນເປັນເວລາອອກແຮງງານອີກ. ແພງບຸນຍ່າງໄປຫາກົກຫມາກຕ້ອງຊຶ່ງຢູ່ໃກ້ປະມານ ໔໐ ແມັດ ແລະ ສັ່ງຫມູ່ໄວ້ວ່າໃຫ້ນຳໄປຫາເທື່ອລະຄົນໂດຍຈະຮ້ອງຊື່ເອົາ.

ແພງບຸນເລີ່ມຮ້ອງຊື່ເທື່ອລະຄົນໃຫ້ເຂົ້າໄປພົບແລ້ວ ກໍຖາມຫາປາເນັດທີ່ໄດ້ຢາຍໃຫ້ໄວ້. ແຕ່ຄົນທີ່ຫນຶ່ງຮອດຄົນທີ່ສິບຍັງມີປາຢູ່ຄົນທຸກຄົນ. ມາຮອດຄົນທີສິບເອັດ ເປັນນ້ອງນ້ອຍອາຍຸ ໕ ປີຊື່ວ່າ ຕອມ. ເມື່ອຖືກຖາມຫາປາເນັດ, ຕອມຫນ້າເຫລືອງນ້ານ ທັນໃດ ແລ້ວຕອບກະຕຸກກະຕັກວ່າໄດ້ເຮັດເຮ່ຍແລ້ວ.

ດ້ວຍຄວາມນິໄຫວພິກດີ ແພງບຸນເວົ້າຂຶ້ນວ່າ:

– " ຖ້າບອກມາຊື່ໆວ່າໄດ້ກິນປາເນັດນັ້ນແລ້ວຈະເປັນການດີ ບໍ່ມີໃຜລົງໂທດດອກ, ເປັນການກ້າຫານອີກທີ່ຮັບສາລະພາບ ".

ຕອມເຮັດສີຫນ້າເຂີນໆ ແລ້ວງຶກຫົວພ້ອມກັບເວົ້າວ່າ:

– "ຂ້ອຍກິນແລ້ວເພາະຢ້ານເຈັບທ້ອງ".

– "ຢ້ານເຈັບທ້ອງເພາະກິນ[illegible]ມາກຕ້ອງແມ່ນບໍ່?".

– "ແມ່ນ...ແມ່ນແລ້ວ".

– "ດີແລ້ວເດຣູ້ຈັກກິນປາກັບໄວ້ ເອົານີ້ອີກຫນຶ່ງເນັດ, ຖ້າເຈັບຂຶ້ນມາແທ້ໆຈຶ່ງກິນ".

ແພງບຸນຍື່ນປາໃຫ້ແລ້ວກໍຊີ້ແຈງຕໍ່ໄປວ່າ ອາການເຈັບທ້ອງນັ້ນຈະບໍ່ເກີດຂຶ້ນໄດ້ເດັດຂາດ, ບ້ລນ ການ ສານແຊ່ງຂອງເຈົ້າຂອງສວນ ຫລື ຜູ້ໃດກໍຕາມ. ແກ່ນຫມາກ

ຕ້ອງຫລືຫມາກໄມ້ທຸກຊະນິດ ທີ່ຄົນກິນກິນເຂົ້າໄປນັ້ນຈະບໍ່ແຕກຫນໍ່ອອກຈາກໄດ້ຈັກເທື່ອ ມັນຝືນວິທະຍາສາດ ແລະເປັນໄປບໍ່ໄດ້ແທ້ໆ. ມີແຕ່ແມ່ພະຍາດເທົ່ານັ້ນທີ່ເຮັດໃຫ້ຄົນເຮົາເຈັບທ້ອງ, ມັນເຂົ້າໄປໃນເວລາຄົນກິນອາຫານທີ່ຖືກແມງວັນຕອມ, ດື່ມນ້ຳບໍ່ສະອາດ, ຈັບອາຫານເຂົ້າປາກໂດຍບໍ່ລ້າງມືສາກ່ອນ ເຫດນີ້ແຫລະທີ່ເຮັດໃຫ້ຄົນເຮົາເຈັບທ້ອງ, ບໍ່ແມ່ນຍ້ອນເຈົ້າຂອງສວນສາບແຊ່ງ ຫລືມີຜີສາງເຮັດຫຍັງໃສ່ດອກ. ເຈົ້າຂອງສວນມັນໄປຂຸດຮີດຫລືສໍ້ໂກງມາຈຶ່ງມີເງິນຊື້ດິນເຮັດສວນໄດ້ກວ້າງຂະຫນາດນີ້, ເມື່ອມັນຫນີແລ້ວ ກໍເອົາເຮັດເປັນຂອງສ່ວນຮວມແມ່ນຖືກຕ້ອງ ບໍ່ເປັນພິດເປັນໄພຫຍັງຫມົດ. ຜີກໍເຮັດຫຍັງໃຫ້ຄົນບໍ່ໄດ້ເພາະຜີມີແຕ່ກະດູກ ບໍ່ມີຊີວິດຈິດໃຈ. ມີແຕ່ແມ່ພະຍາດເທົ່ານັ້ນທີ່ເຮັດໃຫ້ຄົນເຈັບໄຂ້ໄດ້ປ່ວຍຢູ່ທຸກມື້ນີ້.

ຕອນທ້າຍແພງບຸນສັນລະເສີນຕອມ ທີ່ກ້າຫານບອກຄວາມຈິງ, ເຮັດຜິດແລ້ວກ້າສາລະພາບຜິດ. ອັນນີ້ເປັນຄຸນສົມບັດຂອງນັກປະຕິວັດ. ຕອນນີ້ອາລົມດີຂຶ້ນທີ່ໄດ້ສາລະພາບຜິດ, ມີຄວາມເຊື່ອຫມັ້ນຕໍ່ຕົນເອງ ແລະ ປາຖະຫນາຢາກເຮັດອັນໃດອັນຫນຶ່ງ ເພື່ອທົດແທນຄວາມຜິດພາດເທື່ອນີ້.

-"ປູກຕົ້ນໄມ້ໃສ່ສວນນີ້ສາຈັກສິບຕົ້ນ ລະແມ່ນດີທີ່ສຸດ" ແພງບຸນສະເຫນີແນະ.

-"ໄດ້ ຂ້ອຍກ້າເບ້ຍຫມາກມ່ວງ ຫມາກລຳໄຍໄວ້ແດ່ແລ້ວ. ປູກຊາວຕົ້ນກໍໄດ້".

ນີ້ຕໍ່ມາ ຕອນເອົາເບ້ຍຫມາກໄມ້ມາປູກໃນສວນ ໂດຍວາງລະຍະຫ່າງກັນປະມານ ໗ ແມັດ ແພງບຸນເປັນຜູ້ແນະນຳວ່າຄວນປູກໃສ່ບ່ອນໃດແດ່. ນີຫມູ່ອີກຫລາຍຄົນອາສາສະມັກປູກຕົ້ນໄມ້ ຊ່ອຍດ້ວຍຈິດໃຈຫ້າວຫັນ ແລະ ຕ່າງກໍພາກພູມໃຈທີ່ໄດ້ປູກຕົ້ນໄມ້ໃນສວນແຫ່ງນີ້ ບໍ່ດົນການປູກຕົ້ນໄມ້ກໍສຳເລັດລົງ. ແລ້ວທຸກຄົນກໍອ່ວາຍຫນ້າໃສ່ການຂຸດຫນານປູກມັນຢ່າງເປັນຂະບວນຕໍ່ໄປ. ພວກນ້ອງນ້ອຍຕັ້ງຫນ້າໃສ່ວຽກຈົນເຫື່ອໄຫລໄຄບ້ອຍ ຢ່າງບໍ່ເຄີຍເປັນມາກ່ອນ, ແລະ ເບິ່ງຄືວ່າການໄດ້ເຮັດວຽກນັ້ນເປັນເລື່ອງທີ່ບັນດານ້ອງນ້ອຍເອກອ້າງພູມໃຈ, ຕ່າງກັບແຕ່ກ່ອນຊຶ່ງຍາມພັກໂຮງຮຽນເຊັ່ນນີ້ ພວກເຂົາມີແຕ່ພາກັນຫລິ້ນຫມາກບີ້ຫລິ້ນປາງບ້ວງ ຫລິ້ນຫມາກລີ້ ແລະ ໄລ່ປອກກັນເປັນແຊວງ, ສ້າງຄວາມລຳຄານແກ່ພໍ່ແມ່ເອື້ອຍອ້າຍທຸກຄົນ. ດຽວນີ້ເຂົາຮູ້ຈັກຮັກແພງຊ່ອຍເຫລືອກັນ ຮູ້ຈັກອອກແຮງງານ ຮູ້ຈັກໃຊ້ເວລາໃຫ້ເປັນປະໂຫຍດ. ບໍ່ຄືແກ່ຕ່ອນ, ພວກ

ເຂົາເອົາແຕ່ການຫລິ້ນ ແລະ ບິນແຊວ.

ຫລັງຈາກທີ່ຕອນເອົາຕົ້ນໄມ້ມາປູກແລ້ວ ຫມູ່ຜູ້ອື່ນກໍປະຕິບັດນຳ ໂດຍຊອກຫາເບ້ຍຕົ້ນໄມ້ມາຜູ້ລະສິບຫລືຊາວເບ້ຍ ແລ້ວພາກັນປູກຢ່າງເປັນຂະບວນ. ມີຫລາຍຄົນເອົາແກ່ນຫມາກໄມ້ເຊັ່ນ: ຫມາກມີ້, ຫມາກລຳໄຍ, ຫມາກຮຸ່ງ ມາກ້າຢູ່ສວນນີ້ເພື່ອຈະປູກໃນໂອກາດຕໍ່ໄປ. ແຕ່ລະຄົນພະຍາຍາມປູກຕົ້ນໄມ້ໃຫ້ໄດ້ຫລາຍໆ. ຟັງສຽງເວົ້າກັນເປັນບົນໆວ່າ:

– "ອີກຫ້າຫົກປີ ຕົ້ນລຳໄຍເຮົາກະຊິເປັນຫມາກ"

– " ຕົ້ນມ່ວງເຮົາເປັນໄວ, ໔ ປີປາຍກະວ່າໄດ້ກິນຫມາກ".

– " ບາດຕອນເຮົາເປັນບ່າວນີ້ ມາຂຶ້ນກິນຄືຊິມ່ວນ".

ມີຜູ້ຫນຶ່ງເວົ້າໄປໄກກວ່ານັ້ນອີກວ່າ:

– " ບາດລູກເຮົາໃຫຍ່ມາ ກະຊິໄດ້ບອກໃຫ້ມັນຮູ້ລະວ່າຕົ້ນມ່ວງເຫລົ່ານີ້ພໍ່ເອງເປັນຜູ້ປູກ".

ການເຮັດຫນານ ແລະ ປູກມັ້ນຂອງພວກນ້ອງນ້ອຍສຳເລັດລົງພາຍໃນສອງອາທິດ. ມີການແບ່ງປັນນ້ກັນເພື່ອບົວລະບັດຮັກສາ. ສ່ວນການປູກຕົ້ນໄມ້ ຍັງດຳເນີນຢູ່ຕໍ່ໄປເລື້ອຍໆ ເພາະເນື້ອທີ່ຍັງກວ້າງຂວາງ. ເບ້ຍຫມາກໄມ້ກໍ

ບັງຫລາຍ, ແລະ ທີ່ສຳຄັນກໍຄືສະມາຊິກ ແຕ່ລະຄົນຫ້າວຫັນຕໍ່ການປູກຕົ້ນໄມ້ຢ່າງບໍ່ຢຸດຢ່ອນ. ພວກເຂົາຢາກໃຫ້ສວນແຫ່ງ ນີ້ເຕັມໄປດ້ວຍຕົ້ນຫມາກໄມ້ທີ່ເຂົາເອງ ເປັນ ຜູ້ປູກ, ຢາກໃຫ້ຄຸ້ມບ້ານຂອງເຂົາມີຫມາກໄມ້ກິນຢ່າງອຸດົມສົມບູນຕະຫລອດເວລາ.

– " ປູກຕົ້ນໄມ້ແມ່ນຮັກຊາດ " ເຂົາວ່າ.

# ຈີ່ຈ່ຽນຂີ້ຢ້ານ

ໂດຍ: ອຸທິນ ບຸນຍາວົງ

ຄັ້ງໜຶ່ງ ບໍ່ທັນດົນນານຍັງດອກ, ມີຈີຈ້ຽນໂຕໜຶ່ງເຂົ້າໄປຫາກິນຢູ່ເທິງເພດານຫ້ອງ ຂອງເຮືອນຫລັງໜຶ່ງ. ມັນສະໜຸກກິນແມງໄມ້ ທີ່ມາຕອມດອກໄຟຟ້າ ຢ່າງຫລວງຫລາຍ, ມີທັງແມງເມົ່າ, ແມງມັນ ແມງບີ້ ແລະອື່ນໆ.

ຈີຈ້ຽນໂຕນີ້ພົບວ່າ ໂຕເອງໄດ້ມາຢູ່ບ່ອນເໝາະສົມແລ້ວຈຶ່ງບໍ່ຍ້າຍໜີໄປທາງໃດ ອາໄສແຕ່ເພດານຫ້ອງນີ້ຈອບນອນຄອຍສວາບກິນແມງໄມ້ເປັນປະຈຳທຸກມື້ໂດຍສະເພາະຍາມກາງຄືນທີ່ດອກໄຟຟ້າສົ່ງແສງສະຫວ່າງແຈ້ງ, ມັນຈະແນບຢູ່ກັບເພດານ ບໍ່ເໜັງບໍ່ຕິງ ສ່ວນຕາເຫລືອກໄປເຫລືອກມາເພື່ອເບິ່ງເຫຍື່ອ, ເມື່ອແມງໄມ້

ໂຕໃດມາຈັບຢູ່ໃກ້ມັນກໍສວາບລຶດໂລດ  ຖ້າໂຕໃດຢູ່ໄກ ມັນກໍຄ່ອຍໆເລືອໄປຫາ  ແລ້ວໄປປຸດຢູ່ບໍ່ໃກ້ບໍ່ໄກ ຄອຍເບິ່ງບຶດຫນຶ່ງຈຶ່ງສວາບກັບໂລດ.  ເມື່ອມັນໄດ້ແມງໄມ້ໂຕອ່າວໃຫຍ່ມັນຈະບໍ່ກືນທັນໃດ  ເພາະແມງໄມ້ມັນຈະດິ້ນແດ່ວໆທັງພືປີກ ແລະ ດີດແຂ່ງດີດຂາ.  ແຕ່ມັນຈະເອົາແມງໄມ້ທີຄາບຢູ່ໃນປາກວັດໃສ່ພື້ນເພດານ  ສຽງດັງຕົບຕົບຫລາຍບາດຈົນແມງໄມ້ມິດຊ້ອຍນ້ອຍບໍ່ເຫນັງບໍ່ຕີງແລ້ວມັນຈຶ່ງກືນ.

ການທີ່ມີສຽງຕົບຕົບຂຶ້ນນັ້ນ  ເຮັດໃຫ້ຄົນພາຍໃນເຮືອນເຂົ້າໃຈຜິດ  ຄິດວ່າມີແຂກຄົນມາເຄາະປະຕູຫລື ຝາເຮືອນ, ບາມໃດທີ່ມີສຽງດັ່ງກ່າວດັງຂຶ້ນ  ທ້າວພັນມັກຖືກພໍ່ ຫລືແມ່ສັ່ງໃຫ້ເຂົ້າໄປເບິ່ງໃນຫ້ອງນີ້,  ແຕ່ທຸກເທື່ອທ້າວພັນບໍ່ພົບເຫັນຫຍັງເລີຍ.  ຫລາຍເທື່ອຫລາຍທີເຂົ້າ ທ້າວພັນກໍຄຶດປ້ານ,  ປ້ານວ່າແມ່ນຜີຫລອກ  ປ້ານຈົນຂົນຫນາວແຕກເບືອກໆ.

ລືມບອກໄປວ່າ ຈີ້ຈຽມໂຕນີ້ກໍຂີ້ປ້ານທັງຂີ້ອາຍ.  ບາມໃດທີ່ມີຄົນເຂົ້າມາຫ້ອງນີ້  ມັນ ຈະ ແລ່ນ ຫລົບ ເຂົ້າ ໄປ ໃນຫລືບຂ້າງຝາຫລືຕາມຮ່ອມເສົາໄປລີ້ຢູ່ຈົນບໍ່ມີຄົນແລ້ວມັນຈຶ່ງຄ່ອຍອອກມາ,  ບໍ່ມີໃຜຈະຄຶດທຳລາຍດັບສູນມັນດອກເພາະມັນບໍ່ໄດ້ເຮັດແນວເສຍຫາຍໃຫ້ແກ່ຄົນ  ແຖມມັນຍັງ

ເປັນປະໂຫຍດອີກຊ້ຳທີ່ກິນແມງໄມ້ຕ່າງໆ ລວມທັງຍຸງນຳ ດ້ວຍ.

ແມວໃດກໍຕາມມັນກໍຍັງຢ້ານ ແລະ ຂີ້ອາຍ, ພໍແຕ່ມີ ຄົນໄຂປະຕູປັບ ມັນກໍຟ້າວແລ່ນຫລົບໄປລີ້ບໍ່ຍອມໃຫ້ໃຜ ເຫັນໂຕ.

ຄ່ຳມື້ຫນຶ່ງ ຈີ້ຈ້ຽມໂຕນີ້ຄາບແມງບີ້ໃຫຍ່ໄດ້, ມັນເອົາ ແມງບີ້ວັດໃສ່ເພດານດັງຕຶບຕຶບຫລາຍບາດ, ທ້າວພັນຖືກ ພໍ່ສັ່ງໃຫ້ເຂົ້າໄປເບິ່ງ, ລາວຖອຍຫລັງຍ້າວໆເພາະຢ້ານ ຈົນຕົວສັ່ນ. ເມື່ອເຫັນອາການຢ້ານກົວຂອງລູກດັ່ງນັ້ນ ຜູ້ພໍ່ ກໍຕົກລົງໄປເບິ່ງເອງ. ລາວຄ່ອຍໄຂປະຕູແງ້ມໄວ້ແລ້ວສ່ອງ ເບິ່ງເທິງສົມຄວນແຕ່ກໍບໍ່ເຫັນຫຍັງ. ຄາວ ຫນຶ່ງ ຕໍ່ ມາ ຈີ້ ຈ້ຽມໂຕນັ້ນກໍວັດແມງບີ້ໃສ່ກັບເພດານບ່ອນຊື່ກັບປະຕູສຽງ ດັງຕຶບຕຶບອີກ. ລາວແຫງນສ່ອງເບິ່ງແລ້ວກໍໄຂປະຕູເຂົ້າ ໄປທັນໃດ, ຝ່າຍ ຈີ້ຈ້ຽມຕົກໃຈວາງແມງບີ້ແລ້ວກໍແລ່ນ ເຂົ້າຫລົບບານປະຕູ ພໍດີກັບປະຕູຖືກງັບເຂົ້າເລີຍ ຫນີບຈີ້ ຈ້ຽມຈົນແປ ຕາຍກັບທີ່! ຜູ້ພໍ່ເອີ້ນລູກຊາຍຜູ້ມັກຢ້ານເຂົ້າ ມາເບິ່ງໃກ້ໆແລ້ວເວົ້າວ່າ.

"ບໍ່ມີຜີດອກຢູ່ຫ້ອງນີ້ ຫລືຢູ່ໃສກໍຕາມ. ສຽງດັງຕຶບ ຕຶບ ນັ້ນ ແມ່ນ ຈີ້ ຈ້ຽມ ຄາບແມງໄມ້ວັດໃສ່ເພດານເພື່ອໃຫ້

ແມງໄມ້ຕາຍແລ້ວມັນຈຶ່ງກິນ. ພໍດີພໍ່ເຂົ້າມາ ມັນຢ້ານເລີຍແລ່ນຫລົບເຂົ້າບ່ອນນີ້ ແລ້ວກໍຖືກປະຕູຫນີບຕາຍ. ປ້ານຫລານ ຕາຍຊ້ຳນັ້ນລະ!"

# ຕົວຕະຫລົກອາຍ

ໂດຍ: ອຸທິນ ບຸນຍາວົງ

ໃນບັນດາຊາວໜຸ່ມ ພວກເຮົາທີ່ມາອອກແຮງງານ
ເຮັດສວນຜັກສາມັກຄີຢູ່ແຄມທົ່ງແຫ່ງນີ້. ມີທ້າວແຈ້ເປັນ
ຄົນເວົ້າຈາຕະຫລົກ ສ້າງບັນຍາກາດຟົດຟື້ນຈົນພວກເຮົາ
ລືມຄວາມອິດເມື່ອຍໄປໄດ້.

ລາວມັກມີຄວາມເວົ້າຕະຫລົກອອກຈາກປາກເຮັດໃຫ້
ໝູ່ໄດ້ຫົວເລື້ອຍໆ. ໂດຍທີ່ໝໍ່ເປັນຄົນຕ່ຳຕ້ອຍສົມກັບຊື່
ແຈ້ ໝູ່ກໍ່ເລີຍມັກເວົ້າຢອກ, ແຕ່ໝໍ່ກໍ່ມີຄວາມເວົ້າຄັກໆ
ຕອບໝູ່ຕາມປະສາຄົນຕ້ອຍສຽງຫອງ.

ໝໍ່ວ່າ: "ຕໍຕ່ຳເຕະບໍ່ໄດ່ນ ແຕ່ຜູ້ເຕະຫົວຖະຫລຳໄປ
ໄດ" ເວົ້າແລ້ວກໍທຳທ່າຂຶງກ້າວ ເຮັດໃຫ້ໝູ່ຫົວເຮຮາ.

– " ແຄ່ງຂາຫັ້ນຍາວສ່ຳໃດ ກໍ?" ໝູ່ຜູ້ໜຶ່ງຮ້ອງ
ຖາມ.

-" ສາມແສນວາແມງມີ້ " ຫມໍຕອບ.

-" ສິງໄສບາວຄ່າສາມວາແມງມີ້ທໍ່ນັ້ນ " ຫມູ່ເບີ້ຍ. ແລ້ວພວກເຮົາກໍພາກັນຫົວຈົນໄສ້ຂົດໄສ້ໃຂ.

ນອກຈາກເວົ້າຕະຫລົກແລ້ວ ທ້າວແຈ້ບຍັງມີຄວາມສາມາດເຮັດສຽງຫລີ້ສອບສຽງສັດຮ້ອງໄດ້ຢ່າງແນບນຽນເຊັ່ນ: ສຽງໝາເຫົ່າ, ໝາຫອນ, ໝາຫວງດູກ, ຫມາຖືກຄ້ອນ. ການເຮັດສຽງຫມາຕາມອາການຕ່າງໆ ນີ້ຫມໍ ເຮັດ ໄດ້ ດີຫລາຍ ຫມູ່ເພື່ອນຕ່າງກໍສັນລະເສີນໃນຄວາມສາມາດຂອງຫມໍ.

-" ຫມໍແຈ້ບນີ້ສາມາດອີ່ຫລີ " ຫມູ່ວ່າ.

-" ເອີ້! ຫ້າມເວົ້າປີ້ນ " ລາວປະກາດໃຫ້ທຸກຄົນຊາບ, ແຕ່ພວກເຮົາຊ້ຳແຮ່ງຫົວ.

ນອກຈາກເຮັດສຽງຫມາແລ້ວ ລາວຍັງເຮັດສຽງໄກ່ຂັນໄກ່ກະຕາກ ສຽງກົບ ສຽງຂຽດ ແລະ ອື່ນໆ.

ຫມໍເວົ້າວ່າ ໃນໂລກນີ້ຫມໍຫນ່າຍທີ່ສຸດແມ່ນເປັດຄາບປີງ ແລະ ຢ້ານທີ່ສຸດແມ່ນປີງຄາບເປັດ. ແລ້ວຫມູ່ກໍດອດຖາມວ່າ: " ໂຕກໍເຄີຍເຫັນບໍອັນປີງຄາບເປັດຫັ້ນ ?". ຫມໍຕອບວ່າ ຍັງບໍ່ທັນເຄີຍເຫັນ ແຕ່ນຶກຄຶດເຫັນເອົາ.

ຫມູ່ຄູ່ທຸກຄົນຕ່າງກໍໄດ້ມ່ວນ ໄດ້ຫົວນຳການຕະຫລົກ

ຂອງທ້າວແຈ້ ແຕ່ມີບາງເທື່ອກໍ່ຮູ້ສຶກອຶດອັດໃຈເພາະໝໍ່ ຕະຫລົກເກີນຂອບເຂດ, ການຕະຫລົກນັ້ນ ກໍ່ເປັນການດີຢູ່ ທີ່ເຮັດໃຫ້ໝູ່ຄູ່ທຸກຄົນມ່ວນ ແຕ່ຖ້າເກີນໄປກໍບໍ່ເໝາະສົມ ແລະເສບວຽກເສບການ, ໂດຍສະເພາະບາມມາອອກແຮງ ງານ ໝູ່ເຮັດວຽກຕ້ອງເປືອງເຫື່ອ ແຕ່ທ້າວແຈ້ເປືອງນ້ຳ ລາຍ, ໃນກອງປະຊຸມສຳຫລວດ ກໍເຄີຍມີການສົ່ງຂ່າວຕຳ ໜິຕິຖຽງລາວກ່ຽວກັບຄຳເວົ້າຊຶ່ງມີຫລາຍອັນບໍ່ເໝາະ ສົມ ແຕ່ທ້າວແຈ້ກໍ່ຍັງເປັນແຈ້ຜູ້ເກົ່າຢູ່ເລື້ອຍໆມາ.

ຂະນະທີ່ພວກເຮົາສຸມເຫື່ອແຮງໃສ່ການຂຸດກົບ ສວນ ຜັກປ່າງເອົາໃຈໃສ່ນັ້ນ ທ້າວແຈ້ຍ່າງໄປທີ່ຄັນນາບໍ່ໃກ້ບໍ່ໄກ ແລ້ວໝູບລົງບັງພຸ່ມຫຍ້າ ແລະ ເຮັດສຽງຂຽດຮ້ອງດັງ ແອ້ວ ແອ້ວ !

ສຽງແອ້ວ ແອ້ວຄືຂຽດຖືກງູຄາບດັງຢູ່ດົນເຕີບ ແລ້ວກໍ່ ມິດໄປ, ບໍ່ດົນກໍດັງຂຶ້ນມາໃໝ່. ໝູ່ຄູ່ຫລາຍຄົນຫົວຂ້ວນ ເພາະໝໍເຮັດສຽງໄດ້ດີຫລາຍ ແລະກໍມີບາງຄົນຮ້ອງບອກ ໃຫ້ໝໍກັບມາເຮັດວຽກແຕ່ບໍ່ເປັນຜົນ.

ໝູ່ເຮັດວຽກໄປ ຟັງໄປ. ສຽງແອ້ວ ແອ້ວ ກໍດັງມາ ຈາກພຸ່ມຫຍ້າເປັນຄັ້ງເປັນຄາວ. ບຶດໜຶ່ງຕໍ່ມາ ທຸກຄົນ ກໍຕົກໃຈເພາະເຫັນທ້າວແຈ້ແລ່ນກະພຸບກະພາບໄປຕາມ

ໄຮ່ນາ ແລ້ວກໍແລ່ນວິນກັບຄືນມາຫາຫມູ່ດ້ວຍທ່າທາງອິເລີເປີເສີ ທັງຮ້ອງວ່າ: " ຊ່ວຍແດ່! ງູໄລ່ ງູໄລ່...! ".

ຫມູ່ຄູ່ຫລຽວເຫັນງູໄລ່ຕິດໆ ມານໍາຫລັງດັ່ງນັ້ນກໍພາກັນຄ້ວາເອົາຈົກເອົາສຽມແລ່ນໄປໃສ່. ບາງຄົນເອົາດ້າມສຽມຟາດ ບາງຄົນເອົາຈົກສັບ ຟັງສຽງຮ້ອງ ສຽງໂສເຫລ້ກັນເປັນອຶກກະທຶກ. ສຸດທ້າຍງູຕົວນັ້ນຂາດເປັນທ່ອນໆ, ເປັນງູເຫົ່າຕົວຂະຫນາດທໍ່ແຂນ ສີດ່າງ.

ສ່ວນທ້າວແຈ້ຫນ້າລ່າຕາຕາຍ ຂາສັ່ນປຸ່ປັກໆເວົ້າກະຕຸກກະຕັກວ່າ: " ບໍ່ຮູ້ວ່າມັນ...ມັນເລືອນມາແຕ່ທາງໃດ.ພໍ່... ພໍ່ມາບເຫັນມັນກໍບໍ່ຄໍ່ຊົກງົກ ສົ່ງສຽງຟູ່ຟູ່. ເຮົາລົ້ມຕັກຫງາຍກິ້ງໄປຫລາຍຮອບແລ້ວຈຶ່ງລຸກແລ່ນ ມັນໄລ່ນໍາຕິດໆ ຄັນຫມູ່ບໍ່ຊ່ອຍແລ້ວແມ່ນເຮົາຕາຍ... ".

– " ນັ້ນລະເຮັດສຽງຂຽດຮ້ອງ ງູມັນນໍາຫາຂຽດລະບໍ" ຫມູ່ຜູ້ຫນຶ່ງເວົ້າຂຶ້ນ. ແລ້ວສຽງໂສ້ເຫລ້ກໍດໍາເນີນຕໍ່ໄປ.

ຕະຫລອດມື້ນັ້ນ ຫລັງຈາກເຫດການຕົກອົກຕົກໃຈແລ້ວ ທ້າວແຈ້ບໍ່ມີເລື່ອງຕະຫລົກເລີຍ.

# ບວນດອນ

ໂດຍ: ອຸທິນ ບຸນຍາວົງ

ຫລາຍໆຄົນມັກຖາມເຮົາວ່າ : ບາງຊື່ເຈົ້າວ່າຈັ່ງໃດ ? ອາຍຸຈັກປີ ? ພໍ່ຊື່ຫຍັງ ? ແມ່ຊື່ຫຍັງ?.

ເຮົາຕອບວ່າ ເຮົາຊື່ບວນດອນ ອາຍຸ ໖ ປີ, ພໍ່ຊື່ວ່າ ບວນ ແມ່ຊື່ດອນ, ເມື່ອເຮົາເກີດມາເພິ່ນເລີຍໃສ່ຊື່ ໃຫ້ໂດຍ ເອົາຊື່ພໍ່ກັບແມ່ມາປະສົມກັນເປັນບວນດອນ. ສ່ວນນາມສະກຸນນັ້ນແມ່ນຖະຫນອມວົງ.

ຄອບຄົວເຮົາມີ ໗ ຄົນນໍາກັນຄື: ພໍ່ຕູ້, ແມ່ຕູ້, ພໍ່, ແມ່, ເຮົາເອງ ແລະ ນ້ອງອີກສອງຄົນ. ເຮົາເປັນລູກກົກ, ນ້ອງຜູ້ຖັດໄປເປັນຜູ້ຊາຍອາຍຸ ໔ ປີ, ຜູ້ສຸດທ້າຍເປັນຍິງອາຍຸໄດ້ ຂວບປາຍ ຊຶ່ງພໍ່ເອີ້ນເປັນລູກສາວຫລ້າ ແຕ່ແມ່ວ່າບໍ່ແມ່ນເທື່ອ, ໝາຍຄວາມວ່າເຮົາຍັງຊິມີນ້ອງເກີດມາອີກຢູ່.

ພໍ່ເປັນພະນັກງານໂຮງງານຂອງລັດຫລືວິສາຫະກິດ, ແມ່ຢູ່ບ້ານເບິ່ງແຍງເຮົາ ແລະນ້ອງທັງລ້ຽງຫມູ, ເປັດ, ໄກ່,

ໄກ່ງວງ ແລະ ເຮັດສວນຜັກ. ແມ່ປູກຜັກບົ້ງ ຜັກຫອມ
ຫລາຍຊະນິດ ມັນດ້າງ ໝາກພິກ ໝາກເຂືອ ແລະອື່ນໆ.
ຍາມແລ້ງມາແມ່ປູກຜັກກາດ ຜັກກະລໍາປີ, ຜັກບົ່ວ ຜັກ
ທຽມ ໝາກເລ່ນ ແລະ ອື່ນໆ. ຄອບຄົວເຮົາບໍ່ໄດ້ຊື້ຜັກກິນ
ເພາະເຮົາມີເກືອບທຸກຢ່າງ. ມີບາງເທື່ອທໍ່ນັ້ນແມ່ຊື້ຜັກສະ
ເມັກ ຜັກກະໂດນ ຜັກຕິ້ວ ແລະຜັກຫວານເພາະຜັກເຫລົ່າ
ນີ້ເກີດຢູ່ຕາມປ່າ.

ເຮົາມັກເກືອເປັດ ເກືອໄກ່ຊ່ອຍແມ່, ບາງເທື່ອກໍເກືອ
ຫມູ ເຮົາມັກເບິ່ງເປັດນ້ອຍກິນຮໍາ, ມັກເບິ່ງຫມູນ້ອຍກິນ
ນົມແມ່ຂອງມັນ ພວກເຮົາມີຫມູນ້ອຍຫົກໂຕ ມັນກໍາລັງຂີ້
ດື້ ແລະ ຍາດກັນດູດນົມ, ບາງເທື່ອມັນໄຕ່ຂື້ນປອງແມ່ຂະ
ນະທີ່ແມ່ມັນນອນຕະແຄງຢູ່. ບາງເທື່ອມັນລອດປ່ອງອອກ
ຈາກຄອກແລ້ວໄປເລາະຫລີ້ນຢູ່ຕາມກາງບ້ານ. ແມ່ມັກ
ບອກເຮົາໄປໄລ່ຕ້ອນມັນກັບຄືນເມືອຄອກສະເຫມີໆ ເພາະ
ຢ້ານຫມາກັດມັນ, ເຮົາແລະນ້ອງພາກັນຈັບໄມ້ແສ້ແລ້ວກໍ
ແລ່ນໄລ່ປ້ອງມັນກັບຄືນເມືອຄອກຫາແມ່. ມັນແລ່ນຫລົບ
ຫລີກ ແຕ່ເມື່ອເຮົາໄລ່ທັນແລ້ວເອົາແສ້ຟາດຫລັງ ມັນກໍ
ຮ້ອງອີດໆ... ໄລ່ຫມູນ້ອຍເທື່ອໃດ ເຮົາທັງເມື່ອຍທັງມ່ວນ
ແລ້ວກໍພາກັນຫົວແອັກໆ.

ຄອບຄົວເຮົາມີຄວາມສຸກສະບາຍດີ ມີຄວາມສາມັກຄີຮັກແພງກັນ ແຕ່ມີບາງເທື່ອພໍ່ກິນເຫລົ້າເມົາມາແລ້ວກໍ່ເວົ້າສຽງຮ້າຍໆໃສ່ແມ່ ແລະ ບາງເທື່ອກໍຮ້າຍໃສ່ຂ້ອຍແລະນ້ອງໆ. ຂ້ອຍຢ້ານພໍ່ເວລາເມົາເຫລົ້າຢ້ານເພິ່ນດີ ເພາະເມື່ອເມົາມາແລ້ວພໍ່ບໍ່ມີທ່າທາງເປັນມິດຈັກເມັດ, ມີແຕ່ເຮັດກະຟຶດກະຟັດ. ພໍ່ມັກກິນເຫລົ້າເລື້ອຍໆ ແຕ່ບໍ່ແມ່ນເມົາທຸກເທື່ອດອກ, ປົກກະຕິພໍ່ຊື້ເຫລົ້າມາໄວ້ເຮືອນເທື່ອລະແກ້ວແລ້ວດອງຢາໄວ້ ແລະ ເທື່ອກິນນື່ງລະຈອກຫລືສອງຈອກ, ເມື່ອຫມົດແລ້ວພໍ່ກໍທຽວໄປຊື້ກິນຢູ່ຮ້ານຊື່ງຕັ້ງຢູ່ປາກທາງເຂົ້າສູ່ບ້ານເຮົາ, ບໍ່ດົນກໍເຫັນພໍ່ຊື້ເຫລົ້າເປັນແກ້ວມາໄວ້ເຮືອນອີກ.

ບາງພໍ່ກິນເຫລົ້າເມົາມາ ບັນແມ່ນຕອນມີຫມູ່ມາຊວນໄປກິນ ໂດຍສະເພາະລຸງປ້ອງຢູ່ໂຮງການດຽວກັບພໍ່. ລຸງປ້ອງມາຫາພໍ່ເລື້ອຍໆ ຕອນເລີກການ ແລ້ວກໍພາກັນໄປນັ່ງກິນເຫລົ້າຢູ່ຮ້ານແຄມທາງໃນຄຸ້ມທີ່ເຮົາຢູ່. ບາງໃດກິນເຫລົ້າກັບລຸງປ້ອງ ພໍ່ເມົາໂລດ. ເມົາແລ້ວກໍກັບມາເຮືອນເວົ້າສຽງດັງໆ ທ່າທາງຟຶດຟັດ. ເຫັນພໍ່ເມົາເຫລົ້າແລ້ວເຮົາບໍ່ຢາກເຮັດຫຍັງ ບໍ່ຢາກໃຫ້ພໍ່ເຫັນເພາະຢ້ານພໍ່ຮ້າຍ, ເຮົາບໍ່ຊັງພໍ່ດອກແຕ່ຄຶດຊັງລຸງປ້ອງທີ່ບາງໃດມາຊວນພໍ່ໄປ

ກິນເຫລົ້າແລ້ວພໍ່ເມົາມາໂລດ.

ເມື່ອເຫັນລຸງປ້ອງມາຫາພໍ່ຢູ່ເຮືອນ ແມ່ມັກຈົ່ມວ່າ:

– "ມາຊວນກັນໄປກິນເຫລົ້າອີກແລ້ວ. ເມົາຕາມເຄີຍອີກ".

ເຮົາເຫັນວ່າຄອບຄົວເຮົາມີເລື່ອງບໍ່ສະບາຍໃຈ ກໍແມ່ນຍາມພໍ່ເມົາເຫລົ້າ ແລະ ການທີ່ພໍ່ເມົາເຫລົ້າກໍຍ້ອນມີໝູ່ມາຊວນໄປກິນ ໂດຍສະເພາະລຸງປ້ອງເປັນຕົວການ. ເຮົາຄຶດຊັງລຸງປ້ອງຂຶ້ນນຳສູ່ມື້.

ມື້ໜຶ່ງ ລຸງປ້ອງມາຫາພໍ່ຢູ່ເຮືອນອີກ, ສ່ວນພໍ່ຍັງບໍ່ທັນມາແຕ່ການເທື່ອ. ເຮົາຍ່າງເຂົ້າໄປຫາລຸງປ້ອງແລ້ວວ່າ:

– "ລຸງປ້ອງ ຢ່າພາພໍ່ໄປກິນເຫລົ້າເດີ, ພໍ່ກິນເຫລົ້າເມົາມາແລ້ວມາຮ້າຍໃສ່ຫລານ, ຕອນພໍ່ບໍ່ເມົາເຫລົ້າພໍ່ຮັກຫລານຫລາຍໆ. ຢ່າພາພໍ່ໄປກິນເຫລົ້າເດີລຸງປ້ອງເດີ...".

ລຸງປ້ອງເອົາມືລູບຫົວເຮົາ ແລ້ວກໍຫົວຢູ່ໃນຮູຄໍ. ບໍ່ດົນພໍ່ກໍມາຮອດ ແລ້ວພໍ່ ແລະ ລຸງປ້ອງກໍພາກັນລົງເຮືອນໄປ. ມື້ນັ້ນພໍ່ກັບມາເຮືອນໂດຍບໍ່ເມົາເຫລົ້າ ໜ້າຕາແຈ່ມໆທຳມະດາ, ພໍ່ອູ້ມເອົາເຮົາແລ້ວກໍດົມແກ້ມສອງສາມບາດ.

– "ນ້ອງດອມນີ້ມັນສະຫລາດເປັນຕາຮັກອີຫລີ" ພໍ່ວ່າ.

ນັບແຕ່ມື້ນັ້ນມາ ບໍ່ເຫັນລຸງປ້ອງມາເຮືອນເຮົາ ຈົນເວລາຜ່ານໄປຕັ້ງສອງເດືອນຈຶ່ງເຫັນລຸງປ້ອງມາຫາພໍ່ ແລະຊວນກັນໄປກິນເຫລົ້າອີກ, ແຕ່ພໍ່ກັບມາເຮືອນໂດຍບໍ່ເມົາເຫລົ້າເລີຍ. ເຮົາຮັກພໍ່ຫລາຍຂຶ້ນ ຫລາຍຂຶ້ນ ທຸກມື້.

# ແມ່ຄ້ານ້ອຍປ່ຽນໃຈ

ໂດຍ: ດວງຈຳປາ

-"ໂອ້ຍ, ຊື້ນາກະບໍ່ໄດ້ດອກ - ເອົາສາມມັດຊາວຫ້າສະ".

ສຽງແມ່ຄ້ານ້ອຍ ອາຍຸບໍ່ທັນພໍສອນສາວດັງຈອດໆ ຢູ່ກາງຕະຫລາດແລງນ້ອຍ, ຜູ້ຊື້ຄົງຈະອີດູໃນຄວາມເປັນກະບວນຂອງເດັກນ້ອຍນັ້ນ ກໍເລີຍຕົກລົງເອົາຫມາກເຂືອ ມີພູດ ຕາມລາຄາທີ່ຝ່າຍຂາຍຕ້ອງການ ທັງທີ່ຜູ້ຊື້ຍັງຈົ່ມພື້ມພໍາຢູ່ວ່າຫມາກເຂືອພວມຖືກ, ເຮັດໃດຈັ່ງວ່າມັດລະມີ ຫນ່ວຍທໍ່ນັ້ນເປັນເຫດໃຫ້ສາວແມ່ຄ້ານ້ອຍດອດຄືນອີກວ່າ:

-"ໃຫ້ຂ້ອຍເປັນຫຍັງ - ເຈົ້າເທາະປ້າ. ຫມາກເຂືອຫມົດຕ່າໄດ້ກຳໄລບໍ່ແຕ່ຊາວກີບ" ນາງເວົ້າລາກສຽງຍາວ

ທ່າທາງກະດັດກະດ້.

ພໍຜູ້ຊື້ຈ່າຍເງິນແລ້ວຍ່າງກາຍໄປຮອດໄກ, ຈັນແດງສາວແມ່ຄ້ານ້ອຍກໍຍໍເງິນໃບຊາວກີບຂຶ້ນອວດຫມູ່ຜູ້ຢູ່ໃກ້.

– "ເຮົາວ່າຫມາກເຂືອຊິເຫລືອອີກດິ້ນນີ້ນະ".

ແລ້ວ ນ້ອຍ ບໍ່ ນານ ຈັນແດງກໍອອກປາກອ້ອນວອນຄົນຍ່າງກາຍອີກວ່າ:

– "ຊື້ຊ່ອຍຂະນ້ອຍແດ່ຍາປ້າ ຫມາກເຂືອເກັບມາຫວ່າງຫນຶ່ງນີ້ບ່າ".

ຄັນພໍ "ຍາປ້າ" ຜູ້ນັ້ນສົນໃຈຍ້ອນຄຳວ່າ "ເກັບມາຫວ່າງຫນຶ່ງນີ້" ຈັນແດງກໍຕໍ່ຄວາມໃຫ້ວ່າ "ເອົາແມ້... ຂະນ້ອຍຊິຂາຍເລ, ມີ ມັດຊາວຫ້າ, ຟ້າວເມືອຄ່ຳແລ້ວ" ສຽງນາງອອດຄອນຄືປາກແລ້ວຈາກຕະຫລາດເຮັ້ງ.

ຄວາມແມ່ນນັ້ນ ຈັນແດງຮູ້ສຶກຢາກເມືອເຮືອນໄວແທ້, ເຖິງແມ່ນຜັກຫລາຍແນວຈະຍັງຢາຍເຕັມໂຕະນ້ອຍ ແລະ ຄົນຊື້ຂາຍຍັງເລາະເຕັມຕະຫລາດຢູ່ ຈັນແດງກໍບໍ່ຫ່ວງໄຍອີກແລ້ວ. ນາງຮູ້ສຶກປວດຄີງຄືໄດ້ແບກຫາບມາຫນັກ, ຜ່ອງສິ້ນເສື້ອທີ່ນຸ່ງແຊ່ງຝົນເມັດຝອຍມາແຕ່ຕະຫລາດຫນອງດ້ວງກໍຫານາແທ້ງຄັກເອົາຫວ່າງຄ່ຳຍາມຄົນໂຮມຕະຫລາດນີ້ເອງ.

ຈັນແດງເປັນແມ່ຄ້ານ້ອຍ, ນ້ອຍທັງອາຍຸເພາະຈັນແດງຫາກໍໄດ້ ໑໒ ປີເຕັມ ແລະ ນ້ອຍທັງທຶນ, ຈັນແດງມີເງິນຄ້າມ ໔-໕ ຮ້ອຍກີບ. ແຕ່ເຊົ້າຕ້ອງຍ່າງໄປລັດຢູ່ຕະຫລາດຫນອງດ້ວງເຫມົາເອົາຫນໍ່ໄມ້ເປັນວ່າ, ຫມາກເຂືອຫມາກເຜັດ, ຜັກຕ່າງໆແລ້ວຫາບຍ່າງມາຕະຫລາດນ້ອຍຢູ່ຄຸ້ມບ້ານຕົນ, ນາງນັ້ງສ້ອນນັ້ງເລັນ, ເຮັດມັດເຮັດພົ້ວ, ອັນຫ້າອັນສິບ. ຂາຍຢູ່ຮອດຄ່ຳ ແລ້ວຈັນແດງກໍໄດ້ກຳໄລມື້ຫນຶ່ງບໍ່ຕ່ຳກວ່າຫນຶ່ງຮ້ອຍຫາສອງຮ້ອຍກີບ ທັງໄດ້ຊື້ຂອງກິນຫລິ້ນຢູ່ຕະຫລາດຢ່າງບໍ່ອັ້ນ, ເປັນຕົ້ນເຂົ້າປຸ້ນ, ນ້ຳຫວານຕຳຫມາກຮຸ່ງ ຯລຯ ທີ່ມີຂາຍຢູ່ຕະຫລອດວັນ.

ດ້ວຍເງິນກຳໄລນີ້ ຈັນແດງມັກຊື້ປາເນື້ອໃຫ້ແມ່ປີ້ນໃສ່ແລງຫລືບໍ່ກໍໄດ້ກ້ວຍ ອ້ອຍເນື້ອຕ້ອນນ້ອງໆ.

ມື້ໃດຂາຍບໍ່ຂາດ, ຜັກເຫລືອເປັນກຳໄລ ຈັນແດງກໍຫອບເນື້ອໃຫ້ແມ່ເຮັດກິນ.

ຄືນນີ້ຝົນຕົກລິນລວດມື້, ຈັນແດງຕາກຝົນຫາບຜັກຍ່າງມາແຕ່ຕະຫລາດໃຫຍ່ ແລ້ວນຸ່ງເຄື່ອງປຽກຂາຍຫມົດແລງ, ຜັກກໍເລີຍເຫລືອອີກ. ແຄນແຕ່ໄດ້ຄ່າຫມາກເຂືອຫ້າສິບຫວ່າງກີ້ນກັບ.

– " ເຮົາຊິເນື້ອລອກ, ສິເຈັບຫົວງ່າ " ນາງບອກໝູ່

ຜູ້ບັ່ງໄດ້ຊື້ງຂາຍຫມາກກ້ວຍນ້ຳສາມຫວີ. ຫມາກກັ່ງງ ໃຫຍ່ ໔-໕ ໜ່ວຍ ກໍຍັງບໍ່ທັນກຸ້ມທຶບຄືກັນ.

-" ເອົາ! ຜັກອີຕູ່ກັບຫມາກເຜັດນີ້. ໂດເອົາເນື້ອກິນໃຫ້ແດ່, ຄັນເຮົາເອົາເນື້ອຕ້ອງຖືກອີແມ່ດ່າ, ຂອງວ່າປູ່ສອນກໍມີເຕັມແຕ່ບໍ່ເກັບມາຂາຍໃຫ້ລາວ ".

ຈັບແດງພາຍຕ່າ, ສັກໄມ້ຄານ, ຍ່າງອອກຈາກຕະຫລາດປ່າງເປົ່ງລ່ອຍ. ສຽງຫມູ່ຮ້ອງນຳຫລັງວ່າ: " ມື້ອື່ນກະມາຕ່ອານໍ້ " ດັງວ່ອນໆ.

ແຕ່... ຈັບແດງບໍ່ໄດ້ເດົາຮູ້ອະນາຄົດ. ມື້ອື່ນຂອງຈັບແດງກາຍເປັນມື້ທີ່ນາງໄປ ລົງ ຕະ ຫລາດ ບໍ່ ໄດ້ ສາ ແລ້ວ. ນາງໄຂ້ຕົນໂຕຮ້ອນປານໄຟ, ບໍ່ກ່ວາແຕ່ຈະນໍາປາແກ້ເຈັບຫົວລົງໄປທີ່ໃດ, ໄຂ້ນັ້ນກໍບໍ່ສວ່າງເປັນ. ປານນັ້ນກ່ອນຈະລົງເຮືອນໄປການ ຜູ້ພໍ່ຍັງຈົ່ມພູມໆ ໃຫ້ໄດ້ຍິນວ່າ:

-" ເກີນມັນບໍ່ໄດ້ວຽກຍ້ອນ, ຄັນປູ່ເຮືອນລະແມ່ນນາດເຈັບແລ້ວ, ອັນຊິຫາຊ່ອຍເກືອຫມູ, ເກືອໄກ່ແມ່ນບໍ່ມີ".

ມື້ສອງມາ ນາງຍັງໄຂ້ແຮງປູ່, ພໍ່ແຮ່ງຈົ່ມແຮງວ່າ:

-" ເຮັດຫຍັງບໍ່ຄຶດບໍ່ເຄືອງ. ອັນໄປຊອກເສຍເວລາເຮັດຫລິ້ນນຳຕະຫລາດ ແລ້ວມັນໄດ້ຫຍັງດຽວນີ້, ເຈັບມາລະຍາກ, ແມ່ເພິ່ນກໍບໍ່ບອກບໍ່ຫ້າມກັນ, ເອົາ! ປົວເອົາກັນ

ບາດນີ້".

– " ພໍ່ແດງກະດາຍ, ສຽງແມ່ຕອບພໍມື້ນຮີນສິບ, ມັນກະປວດປາກເຮັດນຳຫມູ່ເຂົາຍາມພັກໂຮງຮຽນ".

– " ນັ້ນລະ... ມັນພາກັນຄຶດຕາຍໆ ເສຍເວລາບຳແນວບໍ່ໄດ້ປະໂຫຽດ, ມັນພາກັນສ້າງສາຫຍັງຂຶ້ນມາອັນຂາຍກັນອື່ນໆຢູ່ນຳດິນບ້ານນີ້ ຣື! ບໍ່ຖືກນະໂຍບາຍພັກແລະລັດເລີຍ. ເບິງດູ ພາກັນຫາແຕ່ຊື້ຖືກ-ຂາຍແພງ, ອອກຈ້ອກ-ແອ້ກແຈ້ກ, ເສຍເວລາຢູ່ຫັ້ນຫມິດມື້, ບໍ່ສ້າງບໍ່ຜະລິດເພີມພູນຫຍັງເລີຍ, ຢູ່ບ້ານຢູ່ເຮືອນ ຫລີກຫຍ້າສວນບໍ່ຕົ້ມເຂົ້າຫມູຊ່ອຍແມ່ບໍ, ເຮັດສ້າງຢູ່ເຮືອນຫັ້ນຍັງຊິດີ. ອັນນີ້ໄປຫາຂາຍຂອງຂູດຮີດໃຫ້ບ້ານ, ມັດຫມາກເຂືອ ຫນໍ່ໄມ້ເອົາກຳໄລກັນຫນ້າດ້ານໆ".

ທັງທີ່ໄຂ້ຫືນປວດຫນ້າປວດຕາຈົນມຶນບໍ່ໄດ້ ຈັນແດງກໍເດົາທ່າທາງພໍ່ຂອກ, ພໍ່ເວົ້າສຽງຮ້າຍກ້ອງດັງແບບນີ້ ຄືຕອນລາວລຸກຂຶ້ນເວົ້າຢູ່ບ່ອນປະຊຸມ ສະເຫນີໃຫ້ທຸກຄົວເຮືອນເຮັດສວນຜັກສວນຄົວຢ່າງຕັ້ງຫນ້າຕາມແນວທາງຊີ້ນຳຂອງພັກ ແລະ ລັດເພື່ອຊຸກຍູ້ໃຫ້ປະເທດລາວເຮົາມີຜະລິດຜົນດ້ານກະເສດກຸ້ມຕົນເອງພາຍໃນເວລາສອງ – ສາມປີນີ້ ຊຶ່ງພໍ່ກໍເວົ້າແທ້ທຳຈິງ. ດຽວນີ້ຢູ່ເຮືອນມີຫມູເປັນສິບ,

ເປັດເປັນຮ້ອຍ ໄກ່ກໍ່ຮ້ອຍ. ສວນຜັກສວນຄົວເຫລືອກິນ. ແຕ່ຈັນແດງພວມຖຶຄຶງໄຂ້ ຄຶດນໍາຄໍາພໍ່ວ່າຄ້ອຍຄ້ອຍແລ້ວກໍ່ນ້ອຍຫລັບໄປ.

ເມື່ອຊວາດຮູ້ເມື່ອມາ ຈັນແດງຮູ້ສຶກວ່າໂຕເອງໜາວສະບັ້ນຈົນຄາງກະໄຕສັ່ນກັບໆ ດຶງຜ້າຫົ່ມຕຸ້ມເຂົ້າປານໃດກໍ່ຍັງສັ່ນສະທ້ານຢູ່ໃນອົກ, ຫັວໃຈກໍ່ຝືດປານຖືກຂັງຢູ່ໃນຫ້ອງນ້ອຍໆ. ນາງຫລົງຮ້ອງຫາແມ່ອອກມາໃນທັນໃດ.

– " ຈັນແດງ... ລູກຫຍັງມາຄາງແຫ້" ແມ່ໄປໂລມາລູບໜ້າຜາກຢ່າງຕົກໃຈ.

– " ຮ້ວາຍ! ຄຶງບົ໊ມາຮ້ອນກະດັກກະດໍ້ແຫ້. ພໍ່ແດງເອີ໊ຍ... ລູກຊິຊັກແລ້ວຫນໍ໊ມາເບິ່ງແດ່... ເຈົ໊າກະດາຍ" ສຽງແມ່ຮ້ອງເຫລີໄຫລຂຶ໊ນ. ຄົນທັງເຮືອນຕື່ນມາປຸ້ມຫຸ້ມເປັນການໃຫຍ່, ຜ່ອງສຽງບອກກັນຫານ້ຳມາເປົ່າ ສຽງໃຫ້ແລ່ນໄປເອີ໊ນນາງຫມໍ່ຊື່ງຢູ່ຄຸ້ມໃຕ້ນັ້ນມາ. ຜົນທີ່ສຸດກໍ່ແມ່ນລົງທ້າຍຢູ່ບ່ອນວ່າຈັນແດງໄຂ້ຂຶ໊ນຈົນຊັກ ແລະ ຫມໍ່ຜູ້ມາເບິ່ງກໍ່ແນະນໍາວ່າຕ້ອງເອົາໄປໂຮງຫມໍແຕ່ເຊົ໊າ, ຄົນໄຂ້ສູງແບບນີ໊ອາດມືອັນຕະລາຍ !. .

* *

*

ຈັນແດງມືນຕາຂຶ້ນພໍຮິບຮີ. ນາງຮູ້ສຶກວ່າໂຕເອງຖືກມັດຖືກຈ່ອງໄວ້ວາດຫນຶ່ງ, ຮູ້ເມື່ອຄັກນາງຈຶ່ງແນມເຫັນສາຍປາງໂຍງຈາກແກ້ວສີຂາວມາໃສ່ແຂນຕົນ.

–"ແມ່..." ນາງເປັ່ງສຽງຮ້ອງຫນົດແຮງ ແຕ່ສຽງກໍ່ລອດຮີມສົບພໍໄດ້ຍິນກັນໃກ້ໆ. ແມ່ງວາກມາ ແລະ ຟ້າວຄວາຈັບມືຈັນແດງບີບເປັນການເອົາໃຈ. ສີຫນ້າແມ່ບອກວ່າດີໃຈສຸດທີ່ຍິ່ງທີ່ລູກປອດໄພ.

–"ແມ່ນຫຍັງນີ້ແມ່, ເຮົາເປັນຫຍັງ?" ຈັນແດງຄິດບໍ່ພໍ້ວ່ານາງເກີດເຫດຖືກລົດຕຳກາງຖະຫນົນບໍ ຫລືແນວໃດຈຶ່ງມີແນວມັດຈ່ອງພັນທະນັງແບບນີ້.

ແມ່ລູບຫນ້າຜາກຈັນແດງຢ່າງຖະຫນອມ, ແສງຕາສັກໃສ່ລູກດ້ວຍຄວາມຮັກຫ່ວງເຫລືອຈະພັນລະນາ.

–"ລູກໄຂ້ແຮງ ມາໂຮງຫມໍເພິ່ນວ່າເປັນປອດໄດ່, ໃສ່ນ້າທະເລນີ້ລູກຈະມີແຮງໄວຊັ້ນນາ".

ຈັນແດງຫລຽວເບິ່ງແກ້ວນ້າທະເລ ແລ້ວກໍຕອດຫົວຮັບ.

–"ເຮົາມາໂຮງຫມໍແຕ່ຫວ່າງໃດຊັ້ນ?"

–"ມື້ເຊົ້ານີ້ ລູກເມື່ອຍບໍ່ໄດ້ສະຕິ ມີແຕ່ຄາງກັບເຫລືໄຫລໄປ, ພໍ່ແມ່ພາກັນຕົກໃຈຫນົດທີບ, ດີແຕ່ນາງຫມໍ

ສິມດີເພິ່ນຈ່າໃຫ້ເອົາມາໄວໆ, ບໍ່ຊັ້ນ..." ແມ່ເວົ້າຮອດຫັ້ນ ກໍຄານ້ຳຕາຫົ້ງປົ້.

– "ເກືອບເຮົາຕາຍຫວະແມ່" ຈັບແດງຕໍ່ປ່າງບໍ່ຮູ້ດຽງສາ.

* * * *

ເຊົ້ານີ້ໃຫມ່ມາ ແມ່ມາເຝົ້າປ່ຽນພໍ່ຊຶ່ງເຝົ້າແຕ່ກາງ ຄືນ. ເວລາແມ່ມາແມ່ເອົາຂອງກິນມາສູ່ແມວແຊບໆ ສ່ວນ ຫລາຍຂອງອ່ອນໆ ຄືເຂົ້າປຽກ ຫລື ຫມາກກ້ຽງ ແມວ ຫວານ, ແລ້ວກໍມີຍາດພີ່ນ້ອງໃກ້ໆຫລາຍຄົນປ່ຽນຫນ້າມາ ຢາມ, ຟັງສຽງລົມກັນກໍບໍ່ກາຍຄວາມວ່າ:

"ເກືອບນໍ້ – ເກືອບແມ່ເອົາມາບໍ່ທັນ". ຫລືບໍ່ກໍ:

– "ອັນແມ່ນມັນໄປຕາກຝົນເຮັດຫຍັງກໍ້ ຈັ້ງວ່າເຈັບ ປວດບ້ອນ"

ສ່ວນແມ່ປ້າແສນ ຄົນເຮືອນໃກ້ພໍຮູ້ຂ່າວກໍນຳມາຢາມ ຄືກັນ. ສຽງລາວລົມຈອດໆນຳແມ່ວ່າ:

– "ຂ້ອຍກະຢາກວ່າຄືພໍ່ແດງເຈົ້າຫັ້ນລະ, ປູ່ເຮືອນຢູ່ ຊານສ້າງສາ ຊິດີກວ່າໄປເລາະຄ້ວາງໆຫນິດນີ້. ເຈົ້າຮູ້ບໍ່ ອັນຕະຫລາດວ່ານີ້ ໃຜຊ້າວ່າແມ່ນບ່ອນດີ ຄວນໄປຖຸ້ນໄປ ແກວ່ນເກາະ? ລູກເລັກເດັກນ້ອຍເຮົາ ໃຜຕິດຕະຫລາດລະ

ແມ່ນຮອມຊີຮູ້ຫລັກຮູ້ສ້ ຮູ້ຕົວະ ຮູ້ຮອດລັກ, ຂອງເຂົາເປັນແນວນັ້ນອັນປູ່ຕະຫລາດນະ... "ປ້າແສນເຮັດສຽງລາກຍາວ" ໂກຫູໂກຕາຜູ້ໃຫຍ່ແລ້ວ ເງິນຄຳນີ້ຄືຜ້າສອງຄົນ, ຄົນບໍ່ຮູ້ດຽງສາໄປຈັບໄປຈ່າຍ ມີຫລາຍລະພາໄປແນວຕ່າງ".

ແມ່ເປັນຝ່າຍນິດຟັງຕາມເຄີຍ. ຈັນແດງຈື່ວ່າແມ່ບໍ່ເຄີຍຖຽງສ້ສິນຄວາມລົມໃຜ. ນອກຈາກຕອບຄືນພໍເວັ້ນຄຳສອງຄຳ ສອງແມ່ – ປ້າລົມກັນກໍປູ່ອ່າວໄກ. ບໍ່ອາດຮູ້ໄດ້ວ່າແມ່ເຫັນພ້ອມນຳຄວາມເວົ້າປ້າແສນຫລືບໍ່, ແຕ່ປ້າແສນກໍ່ຄືເວົ້າຖືກ, ນັ້ນແມ່ນຄວາມລາວແທ້ທີ່ວ່າປູ່ຕະຫລາດຈັນແດງຕ້ອງຮຽນຮູ້ແອບເອົາເຫລົ່າຫລ່ຽມການຄ້າ. ໃຫມ່ໆນັ້ນຈັນແດງກະດຽມປາກເມື່ອຕົວະ, ຕົວະຊື້ຕົວະຂາຍ, ແຕ່ບໍ່ດົນຄວາມລື້ງ, ຄວາມທີ່ຕ້ອງດັດແປງໂຕເອງໃຫ້ເຂົ້າສະພາບການນຳຫມູ່ເຮັດໃຫ້ຄວາມເວົ້າລ່ຽນໄຫລ, ບາດສຽດສີບາດຕະຫລົກແກມແທ້. ຈັນແດງຮູ້ດີວ່ານາງຕ້ອງຕົວະແລະຕົວະຕໍ່ໄປເລື້ອຍໆ ຖ້ານາງຕ້ອງການຊື້ຂາຍເປັນຄືຫມູ່ແມ່ຄ້າອື່ນໆ.

ຈັນແດງຍັງຄຶດພໍ້ອີກ – ແມ່ນຄວາມປ້າແສນແທ້ ປູ່ຕະຫລາດບໍ່ມີຄວາມສັດຊື່, ບໍ່ມີໃຈກ້ວາງເພື່ອແຜ່ຕໍ່ກັນ ບໍ່

ວ່າຜູ້ຊີ້ຜູ້ຂາຍ ຫລາຍເທື່ອທີ່ຜູ້ຊື້ລືມເອົາເງິນທອນ, ແມ່ຄ້າທັງຫລາຍໂຮມທັງຈັບແດງເອງນັ້ນລະ ກໍຈະອັດສົບ ອັດປາກມຸ້ງບ, ບໍ່ເອີ້ນນຳພໍຄວາມ. ປູ່ຕະຫລາດ ໃພດີໃພໄດ້, ຕາຫລັກໄດ້ຕາໃບ້ເສຍ.

ສຽງປ້າແສນດັງຈ້ອດງຂຶ້ນອີກວ່າ:

– " ອັນຄວາມລືມອີນາງແດງເຈົ້າຄູ່ນີ້ ນັ້ນກະແຂງກະຄືນອີກໄດ. ເຈົ້າຟັງເບິ່ງແມ້ນັ້ນສິບຄວາມ, ໄລ່ຄວາມຄືນປາກແພ້ຮູ້ເອົາໂລດ... ພິດພໍ່ພິດແມ່. ໃຫດູເຈົ້າລ້ຽງລູກກໍຄືບໍ່ພາກິດໂອບລົມເຂົາໃຫ້ກະດ້າງແບວ ນັ້ນ ນີ້ ກະ ຕະຫລາດແມ່ນບໍ ".

ແລ້ວຈັ່ງມີສຽງແມ່ຕອບຫນ້ອຍໆວ່າ:

– " ຂ້ອຍກະອຸກນ່ຳນັ້ນບໍ່ຮູ້ແລ້ວ, ມັນບໍ່ຮູ້ເຮັດແລງເຮັດງາຍນະແມ່ປ້າ. ຊາຫຍັງແຕ່ຊິຊ່ອຍຫ້າງປູ່ຫ້າງກິນແຕ່ຫນຶ່ງເຂົ້າ ຫ້າງຫາໃຫ້ພໍ່ເຂົາຍາມນີ້ເຊົາຫັ້ນກະ ຍັງ ບໍ່ຫລ້ອນ. ແບວວ່ານັ້ນບໍ່ຮູ້ຫົວກັບນັບຊານັ້ນລະ ບໍ່ເປັນກະບວນຄືຊຸມເຮົາແຕ່ກີ້ນີ້ແມ່ປ້າ. ໑໑-໑໒ ປີເຮົາລິດຄ້າແລງຄ້າງາຍໄດ້ແລ້ວເອີຍ ! ".

– " ອ້າວ ! " ສຽງແມ່ປ້າແສນສອດຂຶ້ນປາງໄດ້ທ່າ "ຂອງມີເງິນປູ່ມື້ນະປູ່ຕະຫລາດກໍບູທ່າງຊຸກິນ–ກິນຈັບກິນ

ແຈັບ-ບໍ່ຫ່ອນຊິສິນໃຈປາກເຮັດປາກເປັນ. ພວກແມ່ຄ້າຕະຫລາດນີ້ລະແມ່ນພວກບໍ່ເປັນແລງເປັນງາຍ ທ້ອງໂຕອີ່ມລະເອີງ, ທ້ອງລູກທ້ອງຜົວເຂົາບໍ່ໄຊ່ຫົວຊາ. ເຫັນນາຫລາຍແລ້ວ. ເຂົາຫາໄດ້ເຂົາກະຊິກິນປູ່ຕະຫລາດຫັ້ນລະຫມົດ. ບັ້ງປູ່ຫມົດນີ້ກະຊອກແຕ່ຊີ້ແນວໃສ່ທ້ອງໂຕ ອັນໃດແຊບຮູ້ຊື້-ຫາກບໍ່ຮູ້ເຮັດກິນ".

ຈັ້ນແດງນອນສະແດງດັກຟັງ. ປ້າກັບແມ່ອາດຄຶດວ່າບາງຫລັບແຈບ ທີ່ແທ້ແລ້ວຈັນແດງໄດ້ຍິນໄດ້ຟັງທຸກຖ້ອຍຄວາມ. ຫລາຍເທື່ອຈັນແດງຮ້ອນກົກຫູວາບຍ້ອນຄຳ ເວົ້າຂອງປ້າແສນ ແລະ ແມ່ມັນສຽບແທງຮອດແກ່ນໃຈ. ມັນແມ່ນຄວາມພວກເພິ່ນແທ້ງ-ຄັນວ່າເວົ້າທາງກິນຈັນແດງກໍກິນແທ້ກິນວ່າ ລາງມື້ຂາຍຂອງບໍ່ທັນໄດ້ກຳໄລກິນກ່ອນແລ້ວ. ກິນຕາມກິນທ້ອງກໍບໍ່ເຄີຍດີຈັກເທື່ອ ບຶດທ້ອງຊຸບຶດທ້ອງເບັງ, ບາມກາງຄືນນອນກໍດັງອວກອາກ, ເຈັບບິດເຈັບບ້ຽວຈົນປາກຮ້ອງປາກຄາງ ອັນນີ້ຈັນແດງກໍເຄີຍອຳແມ່ ບໍ່ໃຫ້ຮູ້ນຳ ຄອບປ້ານແມ່ຖາມຫາແນວກິນ ນັ້ນເອງ.

ເວົ້າເລື່ອງມີເງິນປູ່ມື້ນີ້ ຈັນແດງຄຶດພໍ້ວ່າມັນປວດປາກຊື້ ແລະ ປົງໃຈຊື້ໄດ້ຄູ່ແນວ, ຈັນແດງບັງໄດ້ຊື້ຮອດແອບນ້ຳ

ແດງຫາປາກ, ທີແມ່ຄ້າມາເລາະຂາຍ, ຊື້ມາແລ້ວກໍໄດ້ເຊືອງມັນເຊືອງແມບ ບໍ່ຮູ້ຈະເອົາຫາ ຂອງວ່າໃຜໆກໍບໍ່ຫາກັນ, ຄັນຈະຫາໃຫ້ພໍ່ກັບແມ່ ເຫັນກໍແຮ່ງຈະຖືກເພີນດ່າ.

– "ແນວໃດພໍ່ເຂົາກະເວົ້າຄວາມຂາດແລ້ວ" ສຽງແມ່ອອດງຂຶ້ນຜ່າຄວາມຄຶດຄຳນຶງຂອງຈັນແດງ" ເຊົາແລ້ວນີ້ກໍແມ່ນບໍ່ປາກໃຫ້ໄປນັ່ງຕະຫລາດອີກ. ລາວວ່າເຮັດຄ້າເລັກຄ້ານ້ອຍນີ້ແມ່ນຜິດນະໂຍບາຍລະບອບໃຫມ່ຂອງເຮົາ, ວ່າມັນເຮັດໃຫ້ຂອງໃນຕະຫລາດແພງຂຶ້ນ ໆ ກະແມ່ນຄວາມລາວໄດບໍ້ປ້າ ຂາຍຕໍ່ຫລາຍມືຂອງມັນກະແພງ. ຈັ້ງວ່າຈັກຂ້ອຍຊິລົມມັນແນວໃດ ຂ້ອຍລະບໍ່ສູ້ຄວາມລົມມັນຄືເຈົ້າຮູ້ນັ້ນແລ້ວ. ກັບພໍ່ຫັ້ນເວົ້າກັບແມ່ນບໍ່ໄດ້ພໍຄວາມ, ຄັນມັນຍອມຟັງເຮົາຈັກຫນ້ອຍກະຍັງແຄນ". ແມ່ທັງເວົ້າທັງຫັນໃຈໃຫຍ່ຊົງຄຶດຍາກເອົາແທ້ເອົາວ່າ.

ຈັນແດງພິກຄຶງ. ສຽງລົມຂອງແມ່ປ້າກັບແມ່ມິດໄປກັບບາດ, ແຕ່ຈັນແດງປະຕິຍານກັບໂຕເອງແລ້ວວ່າຈະບໍ່ໃຫ້ແມ່ໄດ້ອອກປາກຍາກ. ຈັນແດງຈະບອກແມ່ເອງວ່າຈັນແດງຈະບໍ່ໄປຂາຍຂອງຕະຫລາດອີກແລ້ວ ຈະຊ່ອຍເພີນພູນຜະລິດຜົນຢູ່ເຮືອນ ລ້ຽງເປັດໄກ່ ຂຸດຄູມັນທັງຫນານ

ພັກ. ຮອດບານເຂົ້າໂຮງຮຽນກໍຈະຕັ້ງໜ້າຮ່ຳຮຽນເພື່ອປະກອບສ່ວນໃນການສ້າງສາ ຕາມແນວທາງຊີ້ນຳຂອງພັກ, ຈັນແດງ ຈະບອກ ແມ່ເອງ ບໍ່ເປັນ ອີກ ແລ້ວ - ແມ່ ຄ້ານ້ອຍ.

ພິມທີ່ໂຮງພິມແຫ່ງຊາດ
ພິມຈຳນວນ 10.000 ຫົວ ຂະໜາດ 13 x 18,4
ພິມແລ້ວ ວັນທີ 28-5-1979

ລາຄາ 150 ກີບ